ສຸວັນນີ
SOUVANNY
Home Center

# ບົດລາຍງານປະຈຳປີ

# ANNUAL REPORT 2023




Call center 021-561111

# ສາລະບານ

ໜ້າ

**ສານຈາກທ່ານປະທານສະພາບໍລິຫານ ........ I**

**ສານຈາກ ຜູ້ອຳນວຍການໃຫຍ່ ........ II**

**I. ພາບລວມກ່ຽວກັບທຸລະກິດ ຂອງບໍລິສັດ. ........ 1**

1. ວິໄສທັດ........ 1
2. ພາລະກິດ........ 1
3. ປະຫວັດຄວາມເປັນມາ ໂດຍຫຍໍ້ ຂອງ ສຸວັນນີ. ........ 1

**II. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນອື່ນໆ ຂອງບໍລິສັດ ປີ 2023 ........ 7**

1. ທີ່ຕັ້ງ ແລະ ເຄືອຂ່າຍ ........ 7
2. ປະເພດທຸລະກິດ ແລະ ເລກທະບຽນວິສາຫະກິດ ........ 8
3. ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງບໍລິສັດ. ........ 8
4. ເຫດການທີ່ສຳຄັນ ທີ່ເກີດຂຶ້ນພາຍໃນປີ 2023 ........ 8
5. ນະໂຍບາຍຈ່າຍເງິນປັນຜົນຂອງບໍລິສັດ ........ 10

**III. ທົບທວນຜົນການດຳເນີນງານ ປີ 2023........ 11**

1. ສະພາບເສດຖະກິດສາກົນ ແລະ ເສດຖະກິດພາຍໃນປະເທດ ປີ 2023 ........ 11
2. ຜົນການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2023 ........ 11
3. ຜົນການດຳເນີນງານປະຈຳປີ 2023........ 11
4. ບົດລາຍງານດ້ານການເງິນ ຂອງບໍລິສັດ ປະຈຳປີ 2023........ 15
5. ເສັ້ນສະແດງແນວໂນ້ມຜົນການດຳເນີນງານ ແລະ ສະຖານະການເງິນ ໃນຊ່ວງ 5ປີ ຍ້ອນຫຼັງຂອງບໍລິສັດ. 16
6. ວຽກງານດ້ານການຕະຫຼາດ ປີ2023........ 17
7. ວຽກງານດ້ານບຸກຄະລາກອນ ປີ 2023........ 21

**IV. ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ 2023........ 22**

1. ທຶນຈົດທະບຽນ ........ 22
2. ຜູ້ຖືຮຸ້ນ 5 ສ່ວນຮ້ອຍຂຶ້ນໄປ ........ 22

**V. ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງສະພາບໍລິຫານ ........ 23**

1. ໂຄງຮ່າງການຈັດຕັ້ງພາຍໃນ ຂອງບໍລິສັດ ....................................................................................23
2. ຄະນະສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ 2023....................................24
3. ຊີວະປະຫວັດໂດຍຫຍໍ້ ຂອງຄະນະສະພາບໍລິຫານ...........................................................................25
4. ຄະນະຜູ້ອຳນວຍການ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ..........................................30
5. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2023 ........31
6. ຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ. ........................................32

**VI. ຄ່າບໍລິການກວດສອບບັນຊີ ແລະ ຄ່າບໍລິການອື່ນໆ ປະຈຳປີ 2023......................... 32**

**VII. ຄວາມຮັບຜິດຊອບຕໍ່ສັງຄົມ ປີ 2023 ...................................................... 32**

1. ການມອບພັນທະອາກອນ ປີ 2023..........................................................................................32
2. ການອຸປະຖຳ ແລະ ຊ່ວຍເຫຼືອສັງຄົມ ປີ 2023 ......................................................................32

**VIII. ນະໂຍບາຍການພັດທະນາການຈັດການຄຸ້ມຄອງພາຍໃນ ປີ 2023 ....................... 34**

**IX. ນະໂຍບາຍຄຸ້ມຄອງຄວາມສ່ຽງ ປີ 2023 ..................................................... 34**

**X. ນະໂຍບາຍດ້ານສິ່ງແວດລ້ອມ ປະຈຳປີ 2023 ............................................... 34**

**XI. ແຜນການດຳເນີນງານປະຈຳປີ 2024.......................................................... 35**

1. ແຜນການສ້າງລາຍໄດ້ປະຈຳປີ 2024 .......................................................................................35
2. ແຜນການຕະຫຼາດ ປະຈຳປີ 2024............................................................................................35
3. ແຜນການພັດທະນາມາດຕະຖານການຈັດການ ປະຈຳປີ 2024 ....................................................35
4. ແຜນພັດທະນາດ້ານບຸກຄະລາກອນ ປະຈຳປີ 2024 ....................................................................36
5. ແຜນການລົງທຶນ ແລະ ຂະຫຍາຍກິດຈະການ ປະຈຳປີ 2024 ......................................................36



## ສານຈາກທ່ານປະທານສະພາບໍລິຫານ

**ເຖິງ ບັນດາທ່ານ ຜູ້ຖືຮຸ້ນ ທີ່ນັບຖື ແລະ ຮັກແພງ**

ສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈັດກອງປະຊຸມ ສະພາບໍລິຫານ ຄັ້ງທີ 1/2024 ໃນວັນທີ 13 ກຸມພາ 2024 ເວລາ 14:00 ໂມງ ຢູ່ທີ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສຳນັກງານໃຫຍ່ ຊັ້ນ 4, ບ້ານໂພນຕ້ອງສະຫວາດ ເມືອງຈັນທະບູລີ ນະຄອນຫລວງວຽງຈັນ.

ກອງປະຊຸມໄດ້ພິຈາລະນາ 11 ບັນຫາສຳຄັນເຊັ່ນ: ພິຈາລະນາຮັບຮອງ ບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງກ່ອນ; ບົດລາຍງານຜົນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ2023 ແລະ ບົດລາຍງານການເງິນປະຈຳປີ 2023; ແຜນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ2024; ການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ2023; ການແຕ່ງຕັ້ງຜູ້ກວດສອບບັນຊີຈາກພາຍນອກ ແລະ ກຳນົດຄ່າບໍລິການກວດສອບບັນຊີພາຍນອກປະຈຳປີ2024; ພິຈາລະນາ ແລະ ອະນຸມັດປັບເງິນອຸດໜູນເຂົ້າຮ່ວມກອງປະຊຸມຂອງສະມາຊິກສະພາບໍລິຫານຂອງບໍລິສັດ; ພິຈາລະນາ ແລະ ຮັບຮອງການປັບປຸງກົດລະບຽບ ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ; ພິຈາລະນາ ແລະ ອະນຸມັດໃຫ້ມີການເພີ່ມຈຳນວນສາຂາໃໝ່ເຂົ້າໃນໃບທະບຽນວິສາຫະກິດຂອງບໍລິສັດ; ການຮຽກປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023; ກຳນົດການປິດປຶ້ມບັນຊີຜູ້ຖືຮຸ້ນ ແລະ ການອະນຸມັດໃຫ້ແຕ່ງຕັ້ງຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ.

ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ບັນດາທ່ານຜູ້ຖືຮຸ້ນ ຈະໄດ້ຮັບຊາບ ແລະ ພ້ອມກັນພິຈາລະນາປະກອບສ່ວນສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການປະຕິບັດແຜນທຸລະກິດປະຈຳປີ 2023 ດຳເນີນໄປດ້ວຍດີ, ມີປະສິດທິຜົນສູງ ແລະ ຍືນຍົງ, ທ້າຍນີ້ຂໍອວຍພອນໃຫ້ບັນດາທ່ານຜູ້ຖືຮຸ້ນທຸກທ່ານຈົ່ງມີສຸຂະພາບເຂັ້ມແຂງ.

ທ່ານສົມຈິດ ອິນທະມິດ

ປະທານສະພາບໍລິຫານ

ອຸດສາຫະກຳ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY



## ສານຈາກ ຜູ້ອຳນວຍການໃຫຍ່

ເຖິງ: ທ່ານ ຜູ້ຖືຮຸ້ນທີ່ນັບຖື

ໃນປີ 2023 ຜ່ານມາ, ໂລກ ແລະ ພາກພື້ນ ລວມທັງປະເທດລາວເຮົາ ຍັງພະເຊີນກັບຜົນກະທົບຂອງພາວະສົງຄາມ ແລະ ຄວາມຂັດແຍ້ງໃນຈຸດຍຸດທະສາດທີ່ສຳຄັນຢ່າງຕໍ່ເນື່ອງ ທີ່ມີຜົນກະທົບຕໍ່ເສດຖະກິດໂດຍລວມ ອັນສົ່ງຜົນມາສູ່ພາວະເງິນເຟີ້ ແລະ ການອ່ອນຄ່າຂອງເງິນກີບພວກເຮົາ ເຮັດໃຫ້ກຳລັງຊື້ຂອງລູກຄ້າໃນປະເທດທຸກລະດັບລຶດລົງ ເປັນອຸປະສັກສຳລັບການຂາຍສິນຄ້າຂອງພວກເຮົາ;

ແຕ່ດ້ວຍການຮ່ວມມືຈາກທຸກພາກສ່ວນ ໂດຍສະເພາະພະນັກງານທຸກລະດັບໄດ້ເຮັດໃຫ້ເຮົາສາມາດຜ່ານອຸປະສັກຫຍຸ້ງຍາກໄດ້ ແລະ ມີອັດຕາການເຕີບໂຕທີ່ໜ້າພໍໃຈສຳລັບປີຜ່ານມາ;

ໃນປີ 2024 ນີ້ ພວກເຮົາຕັ້ງເປົ້າໝາຍການຂະຫຍາຍຕົວທີ່ 20% ເນື່ອງຈາກການວິເຄາະປັດໃຈບວກເຊັ່ນ: ການເປີດປີທ່ອງທ່ຽວລາວ ປີ 2024 ການເປັນເຈົ້າພາບກອງປະຊຸມສຸດຍອດອາຊຽນ ແລະ ການເຂົ້າມາລົງທຶນຂອງນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ພວກເຮົາເຊື່ອວ່າຈະສາມາດບັນລຸເປົ້າໝາຍນັ້ນໄດ້;

ພວກເຮົາໃນນາມທີມງານບໍລິຫານ ຂໍສະແດງຄວາມຂອບໃຈມາຍັງທຸກພາກສ່ວນທີ່ມີສ່ວນກ່ຽວຂ້ອງໃນການອຳນວຍຄວາມສະດວກ, ຊ່ວຍເຫຼືອ ແລະ ຊີ້ແນະພວກເຮົາ ເພື່ອໃຫ້ພວກເຮົາພັດທະນາດີຂຶ້ນ ທ້າຍສຸດຂໍອວຍພອນໃຫ້ທຸກໆທ່ານມີສຸຂະພາບແຂງແຮງ ແລະ ປະສົບຜົນສຳເລັດໃນໜ້າທີ່ການງານ.

ທ່ານວັດດານາ ສຸຄະບັນດິດ

ຜູ້ອຳນວຍການໃຫຍ່

# *ບົດລາຍງານປະຈຳປີ 2023*

## I. ພາບລວມກ່ຽວກັບທຸລະກິດ ຂອງບໍລິສັດ.

### 1. ວິໄສທັດ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຈະເປັນຜູ້ນຳການພັດທະນາ ການຄ້າວັດສະດຸກໍ່ສ້າງ, ເຄື່ອງຕົບແຕ່ງເຮືອນ, ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງອຸປະໂພກທົ່ວໄປ ທີ່ທັນສະໄໝໃນທຸກຊ່ອງທາງການຂາຍ ເພື່ອຕອບສະໜອງລູກຄ້າທຸກລະດັບໃນ ສປປ ລາວ ກ້າວເຊື່ອມໂຍງສູ່ອາຊຽນ

### 2. ພາລະກິດ

- ພັດທະນາການນຳເອົາສິນຄ້າດ້ານວັດສະດຸກໍ່ສ້າງ, ເຄື່ອງຕົບແຕ່ງເຮືອນ, ເຄື່ອງໃຊ້ພາຍໃນເຮືອນ ແລະ ເຄື່ອງອຸປະໂພກທົ່ວໄປ ຈາກທຸກຂົງເຂດ ທີ່ມີຄຸນນະພາບ ແລະ ລາຄາຍຸດຕິທຳໄປສູ່ທຸກກຸ່ມລູກຄ້າ ທຸກລະດັບລູກຄ້າ ແລະ ທຸກພື້ນທີ່ ຂອງປະເທດລາວ. ປະກອບສ່ວນເປັນອົງປະກອບໜຶ່ງ ທີ່ຂັບເຄື່ອນເສດຖະກິດລາວ;
- ພັດທະນາການບໍລິການ ແລະ ການສົ່ງມອບ ໃນທຸກຊ່ອງທາງການຂາຍທັງອອບລາຍ ແລະ ອອນລາຍໃຫ້ທັນສະໄໝ;
- ເສີມສ້າງຄວາມສາມາດ ຂອງບຸກຄະລາກອນ ແລະ ພະນັກງານສືບທອດຢ່າງຕໍ່ເນື່ອງ ເພື່ອໃຫ້ມີສັກກະຍະພາບສາມາດຮັບມືກັບການປ່ຽນແປງ ຂອງເທັກໂນໂລຢີໃໝ່ໃນໄລຍະປ່ຽນຜ່ານ ແລະ ພຶດຕິກຳຂອງຜູ້ບໍລິໂພກໃນຍຸກໃໝ່;
- ພັດທະນາການເຊື່ອມໂຍງການຄ້າ ຂອງລາວໃຫ້ຕິດພັນກັບການຄ້າ ຂອງອາຊຽນ ແລະ ໂລກໃນຖານະທີ່ ປະເທດລາວເປັນໃຈກາງຂອງພາກພື້ນ;
- ຮັກສາທຸກຜົນປະໂຫຍດ ຂອງທຸກພາກສ່ວນທີ່ມີສ່ວນໄດ້ສ່ວນເສຍກັບບໍລິສັດ ພ້ອມກັບປະກອບສ່ວນຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ເພື່ອພັດທະນາຕາມທິດສີຂຽວຍືນຍົງ.

### 3. ປະຫວັດຄວາມເປັນມາ ໂດຍຫຍໍ້ ຂອງ ສຸວັນນີ.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງຕໍ່ໄປນີ້ເອີ້ນວ່າ ("ບໍລິສັດ" ຫຼື "SVN") ດຳເນີນທຸລະກິດຈັດຈຳໜ່າຍສິນຄ້າດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານ ແບບຄົບວົງຈອນ ຕັ້ງແຕ່ວັດສະດຸກໍ່ສ້າງໂຄງສ້າງຫຼັກຈົນເຖິງວັດສະດຸຕົບແຕ່ງພາຍໃນເຊັ່ນ: ກະໂລ້, ສຸຂະພັນ, ນ້ຳສີ, ວັດສະດຸຕົບແຕ່ງເຮືອນ ແລະ ອາຄານສຳນັກງານຕ່າງໆ, ເຄື່ອງມືອຸປະກອນທີ່ໃຊ້ໃນວຽກງານກໍ່ສ້າງ. ເຟີນິເຈີ ລວມທັງ ການໃຫ້ບໍລິການແບບຄົບວົງຈອນ

ໃຫ້ແກ່ລູກຄ້າເຊັ່ນ: ໃຫ້ຄຳແນະນຳການເລືອກສິນຄ້າ, ການອອກແບບພາຍໃນຫ້ອງຄົວ-ຫ້ອງນ້ຳ, ຫຼັງຄາ ພ້ອມການປະເມີນລາຄາ, ບໍລິການຮັບຕິດຕັ້ງແບບມືອາຊີບ ແລະ ບໍລິການຈັດສົ່ງສິນຄ້າເຖິງມືລູກຄ້າ ສິນຄ້າສ່ວນຫຼາຍນຳເຂົ້າຈາກຕ່າງປະເທດ ເປັນສິນຄ້າທີ່ມີຄຸນະພາບ ຍີ່ຫໍ້ສິນຄ້າທີ່ມີຊື່ສຽງ ແລະ ເປັນທີ່ຍອມຮັບລະດັບສາກົນ ໂດຍມີລະບົບໂປຣແກຣມຄອມພິວເຕີ ທີ່ທັນສະໄໝໃນການຈັດການດ້ານການຈຳໜ່າຍ ແລະ ຄວບຄຸມສິນຄ້າໃນສາງຢ່າງມີປະສິດທິພາບ. ສິນຄ້າແບ່ງອອກເປັນຫຼາຍກວ່າ 20 ໝວດຜະລິດຕະພັນ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າກ່ຽວກັບການກໍ່ສ້າງ ແລະ ຕົບແຕ່ງອາຄານ ພາຍໃຕ້ຄຳຂວັນທີ່ວ່າ: **"ຍົກລະດັບສິນຄ້າ ແລະ ບໍລິການໃນແຕ່ລະລະດັບຕະຫຼາດໃຫ້ມີຄຸນນະພາບ ສ້າງຄວາມເພິ່ງພໍໃຈໃຫ້ລູກຄ້າ ຮັກສາການປະຕິບັດງານໃຫ້ໄດ້ມາດຕະຖານ ພັດທະນາຢ່າງຕໍ່ເນື່ອງ"** ການຈັດຈຳໜ່າຍສິນຄ້າຮູບແບບທັນສະໄໝ ພາຍໃນສູນສະ ແດງສິນຄ້າຂະໜາດໃຫຍ່ (Showroom) ພາຍໃຕ້ເຄື່ອງໝາຍການຄ້າ "ສຸວັນນີ" (Souvanny) ທີ່ໃຫຍ່ເປັນອັນດັບໜຶ່ງໃນ ສປປ ລາວ.

ຮ້ານສຸວັນນີການຄ້າ ໄດ້ສ້າງຕັ້ງຂຶ້ນ ປີ 1988 ໂດຍ ທ່ານ ນາງສຸວັນນີ ສຸຄະບັນດິດ (ທ່ານ ນາງສຸວັນນີ). ທ່ານວັດດານາ ສຸຄະບັນດິດ (ທ່ານວັດດານາ) ແລະ ທ່ານພັນໂນລາ ສຸຄະບັນດິດ (ທ່ານພັນໂນລາ)

## ➢ ປີ ແລະ ເຫດການສຳຄັນ

### • ປີ 1988

ຮ້ານ ສຸວັນນີການຄ້າ ໄດ້ສ້າງຕັ້ງຂຶ້ນ ໂດຍເລີ່ມມາຈາກ ທ່ານ ນາງສຸວັນນີ ໄດ້ເບິ່ງເຫັນເຖິງໂອກາດການຂະຫຍາຍຕົວຂອງ ສປປ ລາວ ໃນອະນາຄົດ ປະກອບກັບ ທ່ານວັດດານາ ໄດ້ສຳເລັດການສຶກສາດ້ານສະຖາປັດຕະຍະກຳ ແລະ ມີປະສົບການກ່ຽວກັບການກໍ່ສ້າງ ພ້ອມຍັງເປັນຊ່ວງທີ່ ສປປ ລາວ ກຳລັງເລີ່ມມີການເຕີບໃຫຍ່ຂະຫຍາຍຕົວດ້ານການກໍ່ສ້າງພື້ນຖານໂຄງລ່າງ ສະນັ້ນ, ຈຶ່ງໄດ້ເລີ່ມຕົ້ນດຳເນີນທຸລະກິດຈັດຈຳໜ່າຍວັດສະດຸກໍ່ສ້າງທົ່ວໄປ ໃນຮ້ານຄ້າຂະໜາດໜຶ່ງຫ້ອງແຖວ (ພື້ນທີ່ປະມານ 50 ຕາແມັດ) ທີ່ ບ້ານສີສະຫວາດ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ (ສາຂາທົ່ງຂັນຄຳ) ດ້ວຍທຶນຈົດທະບຽນ 3.250.000 ກີບ ເຊິ່ງປັດຈຸບັນເປັນໄດ້ປິດການໃຫ້ບໍລິການແລ້ວ

### • ປີ 1993

ເປັນຊ່ວງທີ່ພາກການກໍ່ສ້າງໃນ ສປປ ລາວ ມີການຈະເລີນເຕີບໂຕຢ່າງຕໍ່ເນື່ອງ ແລະ ມີຄວາມຕ້ອງການສິນຄ້າປະເພດວັດສະດຸກໍ່ສ້າງເພີ່ມຂຶ້ນ ການແຂ່ງຂັນທາງດ້ານທຸລະກິດວັດສະດຸກໍ່ສ້າງ ຈຶ່ງເພີ່ມຂຶ້ນ ອັນເປັນສາເຫດເຮັດໃຫ້ຕົ້ນທຶນສິນຄ້າທີ່ນຳເຂົ້າມາຈັດຈຳໜ່າຍ ບໍ່ສາມາດແຂ່ງຂັນກັບຄູ່ແຂ່ງໄດ້ ເພື່ອໃຫ້ທຸລະກິດສາມາດນຳສິນຄ້າມາຈາກໂຮງງານຜູ້ຜະລິດໄດ້ໂດຍກົງໃນຕົ້ນທຶນທີ່ຖືກລົງ ປະກອບກັບທາງພັກ ແລະ ລັດຖະບານມີນະໂຍບາຍສະໜັບສະໜູນໃຫ້ຊື້ກົກຂາຍປາຍ ຫຼື ການຫຼຸດຜ່ອນການຊື້ສິນຄ້າຜ່ານພໍ່ຄ້າຄົນກາງຕາມຊາຍແດນ ເພື່ອໃຫ້ຜູ້ບໍລິໂພກໃນ ສປປ ລາວ ໄດ້ຊົມໃຊ້ສິນຄ້າໃນລາຄາຖືກລົງ ອັນນຳໄປສູ່ການຍົກລະດັບຄວາມສາມາດໃນການແຂ່ງຂັນໃຫ້ສູງຂຶ້ນ ພ້ອມທັງຜູ້ບໍລິຫານບໍລິສັດ ຕ້ອງການໃຫ້ບໍລິສັດມີໂຄງສ້າງການຈັດການ ທີ່ເປັນລະບົບ ແລະ ມີແບບແຜນຫຼາຍຂຶ້ນ ສະນັ້ນ, ບໍລິສັດ ຈຶ່ງໄດ້ມີການຈົດທະບຽນເປັນ ບໍລິສັດ ສຸວັນນີ ການຄ້າຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ດ້ວຍທຶນຈົດທະບຽນ 100.000.000 ກີບ.

- **ປີ 2000 (ສາຂາໂພນຕ້ອງ)**



ນັບແຕ່ປີນັ້ນເປັນຕົ້ນມາ ທຸລະກິດຂອງບໍລິສັດໄດ້ຮັບການຕອບສະໜອງທີ່ດີຂຶ້ນມາໂດຍຕະຫຼອດ ແລະ ໄດ້ມີການຈະເລີນເຕີບໂຕຢ່າງຕໍ່ເນື່ອງ ຄວາມຕ້ອງການສິນຄ້າ ທາງດ້ານວັດສະດຸກໍ່ສ້າງເພີ່ມຂຶ້ນຕາມການຈະເລີນເຕີບໂຕຂອງ ສປປ ລາວ ປະກອບກັບທ່ານ ກິດສະດາ ສຸຄະບັນດິດ ໄດ້ສຳເລັດການສຶກສາຈາກຕ່າງປະເທດ ແລະ ກໍ່ໄດ້ເຂົ້າມາມີບົດບາດໃນການບໍລິຫານທຸລະກິດໃຫ້ມີຄວາມເຂັ້ມແຂງຂຶ້ນ. ສະນັ້ນ, ບໍລິສັດໄດ້ເປີດສາຂາໂພນຕ້ອງຂຶ້ນ ເພື່ອຈັດຈຳໜ່າຍວັດສະດຸກໍ່ສ້າງ, ຕົບແຕ່ງ ແລະ ສ້ອມແປງເຮືອນ ແບບຄົບວົງຈອນ ໂດຍຈັດວາງໃນສູນສະແດງສິນຄ້າທີ່ທັນສະໄໝເປັນຮ້ານທຳອິດຂອງ ສປປ ລາວ ດ້ວຍຂະໜາດເນື້ອທີ່ໂຊລູມ ແລະ ສາງສິນຄ້າບໍ່ຕໍ່າກວ່າ 6.000 ຕາແມັດ ເນື້ອທີ່ຈອດລົດ 20 ຄັນ ແລະ ມີການຍ້າຍສຳນັກງານໃຫຍ່ຈາກ ສາຂາທົ່ງຂັນຄຳ ມາເປັນ ສາຂາໂພນຕ້ອງ (ສຳນັກງານໃຫຍ່ໃນປັດຈຸບັນ).

- **ປີ 2004 (ສາຂາສີໄຄ)**



ສປປ ລາວ ໄດ້ເປີດກວ້າງຫຼາຍຂຶ້ນໃນພາກການລົງທຶນ ແລະ ເພື່ອຮອງຮັບການເປັນເຈົ້າພາບການແຂ່ງຂັນກິລາຊີເກມ ຄັ້ງທີ 25 ເຊິ່ງຈະຈັດຂຶ້ນໃນປີ 2009. ບໍລິສັດ ໄດ້ມີການເປີດສາຂາເພີ່ມຂຶ້ນ ທີ່ບ້ານນາແຮ່ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ (ສາຂາສີໄຄ) ເຊິ່ງເປັນສູນຈັດຈຳໜ່າຍສິນຄ້າ ແລະ ບໍລິການ ທາງດ້ານວັດສະດຸກໍ່ສ້າງ, ຕົບແຕ່ງເຮືອນ ແລະ ອາຄານແບບຄົບວົງຈອນ ທີ່ໃຫຍ່ທີ່ສຸດໃນ ສປປ ລາວ ໂດຍມີຂະໜາດພື້ນທີ່ວາງສະແດງສິນຄ້າ ແລະ ພື້ນທີ່ສາງປະມານ 20.000 ຕາແມັດ ແລະ ພື້ນທີ່ຈອດລົດ 60ຄັນ.

- **ປີ 2015**

- ໃນປີ 2015 ບໍລິສັດ ໄດ້ມີການປັບປຸງວິສາຫະກິດ ເພື່ອໃຫ້ສອດຄ່ອງກັບການປ່ຽນແປງໃໝ່, ສະພາບຄວາມຕ້ອງການ ຫຼື ຄວາມຈຳເປັນທາງທຸລະກິດ ແລະ ບົດບັນຍັດຂອງກົດໝາຍວ່າດ້ວຍວິສາຫະກິດ ເຊິ່ງ ບໍລິສັດໄດ້ປ່ຽນຮູບແບບວິສາຫະກິດ ຈາກບໍລິສັດສຸວັນນີການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ມາເປັນ ບໍລິສັດສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດ ດ້ວຍທຶນຈົດທະບຽນ 500.000.000 ກີບ;
- ອີງຕາມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2015 ວັນທີ 28 ກໍລະກົດ 2015 ທີ່ໄດ້ມີວາລະພິຈາລະນາປັບປຸງມູນຄ່າທີ່ກຳນົດຮຸ້ນຂອງບໍລິສັດ ຈາກເດີມ 50.000 ກີບຕໍ່ຮຸ້ນ ເປັນ 2.000 ກີບຕໍ່ຮຸ້ນ. ພິຈາລະນາເລື່ອງການເພີ່ມທຶນຂອງບໍລິສັດ ຈາກເດີມ 500.000.000 ກີບ ເປັນ 280 ຕື້ກີບ ໂດຍມີຈຳນວນຮຸ້ນທັງໝົດ 140.000.000 ຮຸ້ນ;
- ບໍລິສັດ ໄດ້ມີການຮ່ວມລົງທຶນກັບ ບໍລິສັດ ໂກວບ້ອນເຮົ້າ ອິນເຕີເນຊັນແນວ ຈຳກັດ ເຊິ່ງເປັນບໍລິສັດຮ່ວມທຶນລະຫວ່າງ ບໍລິສັດ ສະຫຍາມໂກວບ້ອນເຮົ້າ ຈຳກັດ (ມະຫາຊົນ) ແລະ ບໍລິສັດ ປູນຊີເມັນໄທ ຈຳກັດ (ມະຫາຊົນ) ເຊິ່ງເປັນຜູ້ປະກອບການຈັດຈຳໜ່າຍວັດສະດຸກໍ່ສ້າງ ແລະ ຕົບແຕ່ງອາຄານແບບຄົບວົງຈອນໃນປະເທດໄທ ໂດຍການຮ່ວມລົງທຶນດັ່ງກ່າວຍັງເປັນການຖ່າຍທອດຄວາມຮູ້ໃນການ

ດຳເນີນທຸລະກິດ (Know-how) ແລະ ເສີມສ້າງສັກກະຍະພາບໃນການແຂ່ງຂັນທາງທຸລະກິດຂອງບໍລິສັດໃນໄລຍະຍາວ (ໂດຍຄອບຄົວສຸຄະບັນດິດ ຖືຮຸ້ນ 51% ແລະ ບໍລິສັດໂກວບ້ອນເຮົ້າ ອິນເຕີເນຊັນແນວ ຈຳກັດ (ມະຫາຊົນ) ຖືຮຸ້ນ 33,94%);

- ໃນວັນທີ 13 ກັນຍາ 2015 ບໍລິສັດໄດ້ມີການປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 3/2015 ໂດຍມີວາລະທີ່ສຳຄັນ ຄື: ການແປສະພາບເປັນບໍລິສັດມະຫາຊົນ ແລະ ໄດ້ປ່ຽນຊື່ ເປັນ "ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ" ພ້ອມກັບໄດ້ເພີ່ມທຶນຈົດທະບຽນ ເພື່ອຮອງຮັບການອອກຈຳໜ່າຍຮຸ້ນສາມັນ ເພີ່ມທຶນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 50 ຕື້ກີບ ໂດຍອອກຮຸ້ນສາມັນເພີ່ມທຶນຈຳນວນ 25.000.000 ຮຸ້ນ. ມູນຄ່າກາມົດ (Par Value) 2.000 ກີບຕໍ່ຮຸ້ນ ເພື່ອຮອງຮັບການຂະຫຍາຍຕົວຂອງທຸລະກິດ ແລະ ການກຽມຕົວຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນການເປັນບໍລິສັດຊັ້ນນຳທາງດ້ານຈັດຈຳໜ່າຍສິນຄ້າ ແລະ ບໍລິການ ດ້ານວັດສະດຸກໍ່ສ້າງ ຕົບແຕ່ງເຮືອນ ແລະ ອາຄານແບບຄົບວົງຈອນ ໃນ ສປປ ລາວ;
- ໄດ້ຮັບໃບຢັ້ງຢືນ ລະບົບການບໍລິຫານຈັດການຕາມມາດຕະຖານ ISO9001: VERSION 2008 ວັນທີ 25 ກັນຍາ 2015;

Cert No. 75Q17255

- ພ້ອມດຽວກັນນັ້ນ ທາງ ບໍລິສັດສຸວັນນີ ໂຮມເຊັນເຕີ ມາຫາຊົນ ໄດ້ເປີດຈອງຮຸ້ນ (IPO) ລະຫວ່າງວັນທີ29-30/11/-01/12/2015 ລວມທັງໝົດ 25.000.000 ຮຸ້ນ ໃນລາຄາຂາຍ 3.100 ກີບ/ຮຸ້ນ;
- ນອກຈາກນັ້ນ, ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຈົດທະບຽນເຂົ້າເປັນ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນວັນທີ 11 ທັນວາ 2015 ຢ່າງເປັນທາງການ.

## • ປີ 2016

ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015 ເມື່ອວັນທີ 22 ເມສາ 2016 ເວລາ 14:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ (ຕລຊລ) ບ້ານໂພນທັນເໜືອ ຖະໜົນ T4 ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສປປ ລາວ ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ **118 ທ່ານ** ຖືຮຸ້ນລວມ 157.735.300 ຮຸ້ນ ຄິດເປັນ 95,60% ຂອງຈຳນວນຮຸ້ນທັງໝົດ ຂອງບໍລິສັດ ໂດຍທີ່ປະຊຸມພິຈາລະນາ 9 ວາລະ ວາລະສຳຄັນຄື: ການພິຈາລະນາເງິນປັນຜົນປະຈຳປີ 2015 ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຊິ່ງກອງປະຊຸມຜູ້ຖືຮຸ້ນໄດ້ມີມະຕິແບ່ງປັນເງິນປັນຜົນເປັນຈຳນວນເງິນ 45ກີບ/ຮຸ້ນ.

- **ປີ 2017 (ເດືອນ ມັງກອນ ສາຂາໂຊກໃຫຍ່)**




ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ (ສ.ວ.ນ) ໄດ້ເປີດສາຂາໃໝ່ທີ່ ບ້ານໂຊກໃຫຍ່ (ເສັ້ນທາງ 450 ປີ) ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ໃນວັນທີ 30 ມັງກອນ 2017 ດ້ວຍພື້ນທີ່ວາງສະແດງສິນຄ້າ ແລະ ສາງສິນຄ້າບໍ່ຕໍ່າກ່ວາ 25.000 ຕາແມັດ ດ້ວຍສິນຄ້າທີ່ຫຼາກຫຼາຍ ແລະ ຄົບວົງຈອນ ເຊິ່ງໄດ້ຮັບການຕອບຮັບຈາກລູກຄ້າ ຊາວນະຄອນຫຼວງໄດ້ເປັນຢ່າງດີ.

- **ປີ 2017 (ເດືອນ ກັນຍາ ສາຂາປາກຊັນ)**

ປີ 2017 ເດືອນ 9 ທາງ ບໍລິສັດ ໄດ້ມີພິທີເປີດອີກໜຶ່ງສາຂາຄື: ສາຂາ ປາກຊັນ ໃນວັນທີ 30 ກັນຍາ 2017 ເຊິ່ງເປັນສາຂາທຳອິດ ຂອງບໍລິສັດສຸວັນນີ ໂຮມເຊັນເຕີ ມາຫາຊົນ ທີ່ໄດ້ເປີດໃຫ້ບໍລິການຢູ່ຕ່າງແຂວງ ທີ່ຕັ້ງຢູ່ ບ້ານສີສະອາດ ເມືອງປາກຊັນ ແຂວງບໍລິຄຳໄຊ ດ້ວຍພື້ນທີ່ວາງສະແດງສິນຄ້າ ແລະ ສາງສິນຄ້າ ບໍ່ຕໍ່າກ່ວາ 15.000 ຕາແມັດ ໂດຍມີສິນຄ້າທີ່ຫຼາກຫຼາຍ ແລະ ຄົບວົງຈອນ ໂດຍການເຂົ້າຮ່ວມຂອງທ່ານ ກອງແກ້ວ ໄຊສິງຄາມ ເຈົ້າແຂວງບໍລິຄຳໄຊ ໂດຍໄດ້ຮັບການຕອບຮັບ ຈາກຊາວເມືອງປາກຊັນ ກໍ່ຄືຊາວແຂວງບໍລິຄຳໄຊ ເປັນຢ່າງດີ.



- **ປີ 2018 (ສາຂາປາກເຊ)**



- ພາຍໃນປີ 2018 ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ເປີດອີກໜຶ່ງສາຂາ ທີ່ທາງພາກໃຕ້ ເຊິ່ງກວມເອົາຕະຫຼາດພາກໃຕ້ 4ແຂວງຄື: ແຂວງຈຳປາສັກ, ແຂວງສາລະວັນ, ແຂວງເຊກອງ ແລະ ແຂວງອັດຕະປືນັ້ນກໍ່ຄື: ສາຂາປາກເຊ ທີ່ຕັ້ງຢູ່ ບ້ານ ກາງ ນະຄອນປາກເຊ ແຂວງຈຳປາສັກ ດ້ວຍພື້ນທີ່ວາງສະແດງສິນຄ້າ ແລະ ສາງສິນຄ້າ ບໍ່ຕໍ່າກ່ວາ 15.000 ຕາແມັດ ເຊິ່ງເປີດໃຫ້ບໍລິການຢ່າງເປັນທາງການເມື່ອວັນທີ 17 ມິຖຸນາ 2018 ໂດຍການເຂົ້າຮ່ວມພິທີເປີດຂອງ ທ່ານສິມສະຫວາດ ເລັ່ງສະຫວັດ ທີ່ປຶກສາຄະນະບໍລິຫານສູນກາງພັກ ແລະ ທ່ານ ປອ ບຸນຖອງ ດີວິໄຊ ເຈົ້າແຂວງ ແຂວງຈຳປາສັກ.

- ແລະ ໃນວັນທີ 22 ກັນຍາ 2018 ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ປ່ຽນເວີຊັ່ນຈາກ ISO 9001 Version 2008 ມາເປັນ ລະບົບການບໍລິຫານຈັດການມາດຕະຖານ ISO 9001 VERSION 2015.




Cert No. 75Q17255

- **ປີ 2019**

ໃນວັນທີ 1 ກໍລະກົດ 2019 ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການປິດບໍລິການ ສາຂາທົ່ງຕູມ.

- **ປີ 2020 (ສາຂາທ່າແຂກ)**

ໃນວັນທີ 02 ມີນາ 2020 ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຂະຫຍາຍສາຂາ ເພີ່ມອີກ 1 ສາຂາ ຄື: ສາຂາ ທ່າແຂກ ຢູ່ທີ່ ບ້ານໂພນພິມ ເມືອງທ່າແຂກ ແຂວງຄຳມ່ວນ ດ້ວຍພື້ນທີ່ວາງສະແດງສິນຄ້າ ແລະ ສາງສິນຄ້າ ບໍ່ຕ່ຳກວ່າ 15.000 ຕາແມັດ



- **ປີ 2021 (ສາຂາສະຫວັນນະເຂດ)**

ໃນວັນທີ 14 ທັນວາ 2021 ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ມີການຂະຫຍາຍເພີ່ມອີກ 1 ສາຂາ ຄື: ສາຂາ ສະຫວັນນະເຂດ ຢູ່ທີ່ ບ້ານໂພນສະຫວ່າງເໜືອ ນະຄອນໄກສອນພົມວິຫານ ແຂວງສະຫວັນນະເຂດ ເປັນສູນວາງສະແດງສິນຄ້າຂະໜາດກາງ ດ້ວຍພື້ນທີ່ວາງສະແດງສິນຄ້າ ແລະ ສາງສິນຄ້າ ບໍ່ຕ່ຳກວ່າ 16.000 ຕາແມັດ ມີສິນຄ້າຈຳໜ່າຍຫຼາຍກວ່າ 10.000 ລາຍການ



# ແຜນວາດການຂະຫຍາຍຕົວ ຂອງທຸລະກິດໂດຍຫຍໍ້




## II. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນອື່ນໆ ຂອງບໍລິສັດ ປີ 2023

### 1. ທີ່ຕັ້ງ ແລະ ເຄືອຂ່າຍ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ສຳນັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366 ບ້ານໂພນຕ້ອງສະຫວາດ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນ ເຊິ່ງໃນປັດຈຸບັນປະກອບມີ 7 ສາຂາ ໃນນັ້ນຢູ່ນະຄອນຫຼວງວຽງຈັນ ມີ 3 ສາຂາ ແລະ ອີກ 4 ສາຂາ ຢູ່ຕ່າງແຂວງ ໄດ້ແກ່:

➢ **ມີ 3 ສາຂາ ທີ່ຕັ້ງຢູ່ ນະຄອນຫຼວງວຽງຈັນຄື:**

1. ສາຂາໂພນຕ້ອງ ຕັ້ງຢູ່ ເລກທີ 366 ຖະໜົນໂພນຕ້ອງ ບ້ານໂພນຕ້ອງສະຫວາດ ເມືອງຈັນທະບູລີ ນະຄອນຫຼວງວຽງຈັນມ ເບີໂທ 021 560000 ແລະ 020 56082311;
2. ສາຂາສາຂາສີໄຄ ຕັ້ງຢູ່ ຖະໜົນ 13 ເໜືອ ບ້ານນາແຮ່ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ, ເບີໂທ 021 621254 ແລະ 020 58842414;
3. ສາຂາໂຊກໃຫຍ່ ຕັ້ງຢູ່ ຖະໜົນ 450 ບ້ານໂຊກໃຫຍ່ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, ເບີໂທ 021 466009 ແລະ 020 55112509;

- **ແລະ ມີ 4ສາຂາທີ່ຕັ້ງຢູ່ຕ່າງແຂວງຄື:**

4. ສາຂາປາກຊັນ ຕັ້ງຢູ່ ຖະໜົນເລກທີ 13 ໃຕ້ ບ້ານສີສະອາດ ເມືອງປາກຊັນ.ແຂວງບໍລິຄໍາໄຊ, ເບີໂທ 054 791026 ແລະ 020 58097558;
5. ສາຂາປາກເຊ ຕັ້ງຢູ່ ຖະໜົນເລກທີ 38 ບ້ານກາງ ນະຄອນປາກເຊ ແຂວງຈຳປາສັກ, 031 514091 ແລະ 020 56206753;
6. ສາຂາທ່າແຂກ ຕັ້ງຢູ່ ຖະໜົນ 13 ເໜືອ ບ້ານໂພນພິມ ເມືອງທ່າແຂກ ແຂວງຄໍາມ່ວນ, 051 212353 ແລະ 020 94071293;
7. ສາຂາສະຫວັນນະເຂດ ຕັ້ງຢູ່ ຖະໜົນ ເລກທີ 09 ບ້ານໂພນສະຫວ່າງເໜືອ ນະຄອນໄກສອນພົມວິຫານ ແຂວງສະຫວັນນະເຂດ, 041 215858.

## 2. ປະເພດທຸລະກິດ ແລະ ເລກທະບຽນວິສາຫະກິດ

2.1. ປະເພດທຸລະກິດ: ການຄ້າຂາຍຍົກ ແລະ ຍ່ອຍ ສິນຄ້າປະເພດວັດສະດຸກໍ່ສ້າງ ແລະ ເຄື່ອງຕົບແຕ່ງເຮືອນ ຄົບວົງຈອນ ພາຍໃນໃຕ້ຮູບການ ຫຼື ຮູບແບບວິສາຫະກິດເປັນ ບໍລິສັດ ມະຫາຊົນ

2.2. ເລກທະບຽນວິສາຫະກິດ: ແມ່ນ 01-00001304

## 3. ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງບໍລິສັດ.

- ເບີໂທ: (+856-21) 415645
- ເບີ What apps: (+856-20) 96 935 223
- ອີເມວ: Souvanny@souvanny.la
- ເວັບໄຊ: www.souvanny.la

## 4. ເຫດການທີ່ສໍາຄັນ ທີ່ເກີດຂຶ້ນພາຍໃນປີ 2023

- **ສຸວັນນີ ໄດ້ຮັບລາງວັນນັກທຸລະກິດຊັ້ນນໍາດີເດັ່ນ ປະຈໍາປີ 2022**

ໃນວັນທີ 23 ມັງກອນ 2023 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຮັບລາງວັນນັກທຸລະກິດຊັ້ນນໍາດີເດັ່ນ ສຄອຊ ປະຈໍາປີ 2022 ເຊິ່ງໄດ້ຮັບກຽດມອບລາງວັນໂດຍ ທ່ານ ມະໄລທອງ ກົມມະສິດ ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນກຽດຮັບໂດຍ ທ່ານ ວັດດານາ ສຸຄະບັນດິດ ຜູ້ອໍານວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມາຫາຊົນ




- **ສຸວັນນີ ໄດ້ອອກຮຸ້ນກູ້ ເປັນຄັ້ງທຳອິດຂອງລາວ**

ໃນວັນທີ 09 ມິຖຸນາ 2023 ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ເປີດການຊື້-ຂາຍຮຸ້ນກູ້ຄັ້ງທຳອິດ ໃນຕະຫຼາດຫຼັກຊັບລາວ ເຊິ່ງມີມູນຄ່າຮຸ້ນກູ້ 3 ລ້ານໂດລາສະຫະລັດ ຫຼື ປະມານ 51.6 ຕື້ກີບ, ມູນຄ່າກຳນົດ 50 ພັນໂດລາສະຫະລັດ ຕໍ່ໜ່ວຍ, ອັດຕາດອກເບ້ຍ 7,50% ຕໍ່ປີ ແລະ ມີອາຍຸຮຸ້ນກູ້ 4 ປີ ເພື່ອໃຫ້ບໍລິສັດມີເງິນທຶນໃນການດຳເນີນທຸລະກິດ ຫຼື ຊຳລະຄືນເງິນກູ້ຂອງສະຖາບັນການເງິນ ຫຼື ໃຊ້ໃນການລົງທຶນຂະຫຍາຍສາຂາ ຫຼື ໃຊ້ເປັນທຶນໝູນວຽນຂອງບໍລິສັດ





- **ສຸວັນນີ ໄດ້ຮັບລາງວັນເປີດເຜີຍຂໍ້ມູນດີເດັ່ນ**

ໃນວັນທີ 7 ທັນວາ 2023 ທີ່ຜ່ານມານີ້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຂົ້າຮ່ວມຮັບຟັງກອງປະຊຸມສະຫຼຸບຜົນງານການຈັດຕັ້ງປະຕິບັດວຽກງານເປີດເຜີຍຂໍ້ມູນ ແລະ ວຽກງານການປະເມີນການຈັດຕັ້ງປະຕິບັດຄຸ້ມຄອງບໍລິຫານຂອງບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບລາວ (ຕລຊລ) ປີ 2023.

ໂດຍຜ່ານການສະຫຼຸບການດຳເນີນງານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ທີ່ມີຄວາມຖືກຕ້ອງຊັດເຈນຈຶ່ງສາມາດເຮັດໄດ້ຜົນງານດັ່ງນີ້:

1. ຜົນງານການເປີດເຜີຍຂໍ້ມູນແບບສະໝັກໃຈດີເດັ່ນ.
2. ຜົນງານການເປີດເຜີຍຂໍ້ມູນດີເດັ່ນປະເພດ I.
3. ຜົນງານການຄຸ້ມຄອງບໍລິຫານດີເດັ່ນປະເພດ II.

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຮູ້ສຶກເປັນກຽດ ແລະ ປິຕິຍິນດີ ກັບຜົນງານທີ່ສູ້ຊົນມາໄດ້ ພ້ອມທັງຮັກສາຄຸນນະພາບ ແລະ ຍົກລະດັບການຈັດຕັ້ງປະຕິບັດທຸກວຽກງານໃຫ້ດີຍິ່ງໆຂຶ້ນໃນທຸກໆປີ.



➢ **ສຸວັນນີ ໄດ້ຮັບລາງວັນ ວິສາຫະກິດດີເດັ່ນ ປະເພດ I**

ໃນວັນທີ 21 ກຸມພາ 2024 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຮັບລາງວັນ ແລະ ໃບຍ້ອງຍໍ "ວິສາຫະກິດ ທີ່ປະຕິບັດພັນທະສ່ວຍສາອາກອນດີເດັ່ນ ປະເພດ I ປະຈຳປີ 2022" ຈາກກະຊວງການເງິນ ກົມສວຍສາອາກອນ ຕ່າງໜ້າມອບໂດຍ ທ່ານ ສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ ຕ່າງໜ້າຮັບ ໂດຍ ທ່ານ ວັດດານາ ສຸດທະບັນດິດ ຜູ້ອຳນວຍການໃຫຍ່ ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ






## 5. ນະໂຍບາຍຈ່າຍເງິນປັນຜົນຂອງບໍລິສັດ

5.1. ກຳໄລຂອງ ສ.ວ.ນ ພາຍຫຼັງທີ່ປະຕິບັດພັນທະອາກອນ ແລະ ຫັກຄັງສຳຮອງຕາມລະບຽບກົດໝາຍແລ້ວ ຈະຕ້ອງນຳມາແບ່ງປັນໃຫ້ຜູ້ຖືຮຸ້ນ ຕາມການຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ;

5.2. ຜູ້ຖືຮຸ້ນຈະໄດ້ຮັບເງິນປັນຜົນຕາມອັດຕາສ່ວນການຖືຮຸ້ນຂອງຕົນ ພາຍໃນກຳນົດເວລາສາມສິບ (30) ວັນ ນັບຈາກວັນທີທີ່ກອງປະຊຸມຜູ້ຖືຮຸ້ນໄດ້ຮັບຮອງເອົາການແບ່ງປັນເງິນປັນຜົນ ແລະ ຕ້ອງເປັນຜູ້ທີ່ມີລາຍຊື່ຢູ່ໃນບັນຊີລາຍຊື່ຜູ້ຖືຮຸ້ນທີ່ມີສິດໄດ້ຮັບເງິນປັນຜົນ;

5.3. ຜູ້ຖືຮຸ້ນສາມັນມີສິດໄດ້ຮັບເງິນປັນຜົນເປັນເງິນສົດ ຫຼື ເປັນຮຸ້ນສາມັນຕາມການຕົກລົງຂອງກອງປະຊຸມຜູ້ຖື ຮຸ້ນ ໃນກໍລະນີແບ່ງປັນເງິນປັນຜົນພາຍໃຕ້ຮູບການເປັນຮຸ້ນ ຈະຕ້ອງໄດ້ຮັບການອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

5.4. ຈຳນວນຮຸ້ນເພີ່ມເຕີມທີ່ນຳໃຊ້ເພື່ອຈ່າຍເງິນປັນຜົນດັ່ງກ່າວ ຈະຖືກບັນທຶກເປັນຮຸ້ນ ຊຶ່ງລາຄາຊື້ຮຸ້ນດັ່ງກ່າວ ຖືວ່າໄດ້ຊຳລະຢ່າງຄົບຖ້ວນແລ້ວ ແລະ ມູນຄ່າຮຸ້ນທີ່ໄດ້ຮັບແທນເງິນປັນຜົນນັ້ນ ແມ່ນກົງກັນກັບມູນຄ່າ ເປັນເງິນສຳລັບການຈ່າຍເງິນປັນຜົນ;

5.5. ໃນກໍລະນີທີ່ໄດ້ຮຸ້ນເພີ່ມເຕີມຈາກເງິນປັນຜົນທີ່ຄິດໄລ່ອອກມາບໍ່ເປັນເລກຖ້ວນ, ຈຳນວນເລກເສດດັ່ງກ່າວ ຈະຖືກຄິດໄລ່ ແລະ ຊຳລະເປັນເງິນຕາມມູນຄ່າຮຸ້ນທີ່ລະບຸໄວ້ໃນກົດລະບຽບສະບັບນີ້.

# III. ທົບທວນຜົນການດໍາເນີນງານ ປີ 2023

## 1. ສະພາບເສດຖະກິດສາກົນ ແລະ ເສດຖະກິດພາຍໃນປະເທດ ປີ 2023

ສະພາບເສດຖະກິດໂລກ ແລະ ພາກພື້ນຍັງພະເຊີນກັບຄວາມບໍ່ແນ່ນອນຂອງຄວາມຂາດແຄນທາງດ້ານວັດຖຸດິບ ແລະ ຕ່ອງໂສ້ການຜະລິດ ເຮັດໃຫ້ຕົ້ນທຶນໃນການຜະລິດສູງຂຶ້ນ ອັນເນື່ອງມາຈາກຄວາມຂັດແຍ້ງທາງສົງຄາມ ແລະ ການກີດກັນທາງການຄ້າທາງກົງ ແລະ ທາງອ້ອມ ເຮັດໃຫ້ເກີດການຖົດຖອຍທາງດ້ານເສດຖະກິດ ແລະ ການເງິນ ສົ່ງຜົນຕໍ່ພາວະເງິນເຟີ້ ແລະ ຄ່າເງິນ ເຮັດໃຫ້ກໍາລັງຊື້ຂອງລູກຄ້າລົດລົງ ແລະ ຜົນຕາມມາກໍ່ຄືການຂະຫຍາຍຕົວຂອງເສດຖະກິດບາງເຂດຕິດລົບ ແລະ ບາງເຂດເຕີບໂຕຕໍ່າ.

## 2. ຜົນການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2023

ປີ 2023 ຜ່ານມາ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ພວກເຮົາໄດ້ປະສົບຜົນສໍາເລັດໃນການສ້າງຍອດຂາຍໂດຍເຕີບໂຕລວມເກືອບ 20% ອັນເນື່ອງມາຈາກມີການປັບປຸງຂອງໝວດສິນຄ້າໃໝ່ ທີ່ມີຄວາມຖືກຕ້ອງຕາມຕະຫຼາດຫຼາຍຂຶ້ນ ນໍາມາຊຶ່ງຍອດຂາຍທີ່ເຕີບໂຕຂຶ້ນ.

## 3. ຜົນການດໍາເນີນງານປະຈໍາປີ 2023

### 3.1. ລາຍຮັບ

ຫົວໜ່ວຍ: ລ້ານກີບ




ບໍລິສັດມີລາຍຮັບລວມໃນປີ 2022 ເທົ່າກັບ **647.161** ລ້ານກີບ ແລະ ໃນປີ 2023 ໄດ້ມີລາຍຮັບລວມເພີ່ມຂຶ້ນມາເປັນ **767.140** ລ້ານກີບ ເຫັນໄດ້ວ່າມີລາຍຮັບລວມເພີ່ມຂຶ້ນໃນອັດຕາສ່ວນ **18,54** ສ່ວນຮ້ອຍ ຈາກລາຍຮັບປີ 2022 ເນື່ອງຈາກວ່າ ບໍລິສັດໄດ້ມີການເພີ່ມຄວາມຫຼາກຫຼາຍ ຂອງສິນຄ້າ ແລະ ມີການເພີ່ມຈໍານວນສິນຄ້າໃໝ່ໆເຂົ້າມາ ພ້ອມດຽວກັນນັ້ນ ບໍລິສັດຍັງໄດ້ມີການຈັດໂປຣໂມຊັ່ນຕ່າງໆ ເພື່ອສົ່ງເສີມການຂາຍ ເຮັດໃຫ້ລູກຄ້າມີຄວາມສົນໃຈໃນມາໃຊ້ການບໍລິການຫຼາຍຂຶ້ນ.

## 3.2. ກຳໄລສຸດທິ







ບໍລິສັດມີກຳໄລສຸດທິໃນປີ 2022 ເທົ່າກັບ 56.611 ລ້ານກີບ ແລະ ມີອັດຕາກຳໄລສຸດທິເທົ່າກັບ 8,75 ສ່ວນຮ້ອຍ ແລະ ໃນປີ 2023 ບໍລິສັດໄດ້ມີກຳໄລສຸດທິເພີ່ມຂຶ້ນ ເທົ່າກັບ 60.799 ລ້ານກີບ ມີອັດຕາກຳໄລສຸດທິ ເທົ່າກັບ 7,93 ສ່ວນຮ້ອຍ ການທີ່ບໍລິສັດໄດ້ມີກຳໄລສຸດທິເພີ່ມຂຶ້ນ ເນື່ອງຈາກ ບໍລິສັດໄດ້ມີລາຍຮັບຈາກການຂາຍເພີ່ມຂຶ້ນ ລວມທັງການປັບສັດສ່ວນສິນຄ້າຈາກໂຄງສ້າງ ໄປສູ່ສິນຄ້າຕົບແຕ່ງຫຼາຍຂຶ້ນ.

## 3.3. ຊັບສິນ




ຊັບສິນລວມໃນ ວັນທີ 31 ທັນວາ 2022 ເທົ່າກັບ 1.392.681 ລ້ານກີບ ເພີ່ມຂຶ້ນເປັນ 1.806.353 ລ້ານກີບໃນວັນທີ 31 ທັນວາ 2023 ເມື່ອທຽບກັນເຫັນວ່າເພີ່ມຂຶ້ນ 413.672 ລ້ານກີບ ຫຼື ຄິດເປັນ 29,70 ສ່ວນຮ້ອຍ ການທີ່ມີຊັບສິນລວມເພີ່ມຂຶ້ນ ເນື່ອງຈາກການເພີ່ມສິນຄ້າເຂົ້າມາ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າຫຼາຍຂຶ້ນ, ມີຊັບສິນບໍ່ໝູນວຽນເພີ່ມຂຶ້ນຈາກການຂະຫຍາຍສາຂາໃຫມ່ ທີ່ກຳລັງກໍ່ສ້າງທັງໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ ແລະ ຊັບສິນໝູນວຽນອື່ນໆ ກໍ່ເພີ່ມຂຶ້ນຕາມລຳດັບ.

### 3.4. ໜີ້ສິນ




ໜີ້ສິນລວມສິ້ນສຸດໃນວັນທີ 31 ທັນວາ 2022 ເທົ່າກັບ 243.592 ລ້ານກີບ ເພີ່ມຂຶ້ນເປັນ 291.644 ລ້ານກີບ ໃນວັນທີ 31 ທັນວາ 2023 ເມື່ອທຽບກັນເຫັນວ່າເພີ່ມຂຶ້ນ 48.052 ລ້ານກີບ ຫຼື ຄິດເປັນ 19,73 ສ່ວນຮ້ອຍ ເຊິ່ງໜີ້ສິນທີ່ເພີ່ມຂຶ້ນສ່ວນໃຫຍ່ແມ່ນໜີ້ສິນບໍ່ໝູນວຽນ ທີ່ເພີ່ມຈາກການອອກຮຸ້ນກູ້ ເພື່ອນຳໃຊ້ເຂົ້າໃນການຂະຫຍາຍສາຂາໃໝ່ ເພື່ອເພີ່ມແຫຼ່ງສະໜອງສິນຄ້າໃຫ້ກັບລູກຄ້າ ແລະ ເພື່ອເປັນຖານລາຍຮັບໃຫ້ແກ່ບໍລິສັດໃນອະນາຄົດ.

### 3.5. ທຶນ




ສິ້ນສຸດວັນທີ 31 ທັນວາ 2022 ລວມທຶນຈາກຜູ້ຖືຮຸ້ນທັງໝົດເທົ່າກັບ 1.149.089 ລ້ານກີບ ເຊິ່ງສິ້ນສຸດໃນວັນທີ 31 ທັນວາ 2023 ເພີ່ມຂຶ້ນເປັນ 1.514.709 ລ້ານກີບ ເຊິ່ງມາຈາກບໍລິສັດໄດ້ມີການຫັກເງິນສຳຮອງຕາມກົດໝາຍ ແລະ ເງິນສຳຮອງອື່ນໆເພີ່ມເຂົ້າມາ ນອກຈາກນັ້ນຍັງມີກຳໄລສະສົມເພີ່ມຂຶ້ນ ຖ້າທຽບໃສ່ປີ 2022 ຈາກ 217.954 ລ້ານກີບ ເປັນ 250.094 ລ້ານກີບ ເນື່ອງຈາກໄດ້ມີກຳໄລສຸດທິພາຍໃນປີເພີ່ມຂຶ້ນ ພ້ອມດຽວກັນນັ້ນຍັງມີອັດຕາແລກປ່ຽນຈາກການແປງຄ່າງົບການເງິນທີ່ເພີ່ມຂຶ້ນຕາມລຳດັບ

### 3.6. ອັດຕາສ່ວນທາງການເງິນ

| | 2023 | 2022 | Var |
|---|---|---|---|
| ອັດຕາສ່ວນໜີ້ສິນຕໍ່ຊັບສິນ (D/A) | 0,16 | 0,17 | -0,01 |
| ອັດຕາສ່ວນໜີ້ສິນຕໍ່ສ່ວນຂອງເຈົ້າຂອງ (D/E) | 0,19 | 0,21 | -0,02 |
| ອັດຕາຜົນຕອບແທນຈາກຊັບສິນ (ROA) | 3,37% | 4,06% | -0,01 |
| ອັດຕາຜົນຕອບແທນຈາກທຶນ (ROE) | 4,01% | 4,93% | -0,91% |
| ກຳໄລຂັ້ນຕົ້ນຕໍ່ລາຍຮັບລວມ (G/P) | 24,67% | 24,98% | -0,31% |
| ກຳໄລສຸດທິຕໍ່ລາຍຮັບລວມ (N/P) | 7,93% | 8,75% | -0,82% |
| ອັດຕາສ່ວນສະພາບຄ່ອງ (Current Ratio) | 3,45 | 2,52 | 0,93 |
| ອັດຕາໝູນວຽນຂອງສິນຄ້າຄົງເຫຼືອ (Inventory Turnover Period) | 280 | 260 | 20 |
| ອັດຕາສ່ວນຄວາມສາມາດໃນການຊຳລະໜີ້ (DSCR) | 4,07 | 4,73 | -0,66 |
| ອັດຕາສ່ວນລາຄາຮຸ້ນຕໍ່ກຳໄລສຸດທິຕໍ່ຮຸ້ນ (P/E) | 10 | 9 | 1 |

## 4. ບົດລາຍງານດ້ານການເງິນ ຂອງບໍລິສັດ ປະຈຳປີ 2023

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

# ເອກະສານລາຍງານການເງິນ

ວັນທີ 31 ທັນວາ 2023



www.pwc.com/la

pwc

## ບົດລາຍງານຂອງຜູ້ກວດສອບອິດສະຫຼະ

ສະເໜີຕໍ່ຄະນະຜູ້ອຳນວຍການ ແລະ ຜູ້ຖືຮຸ້ນຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ.

### ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ບໍລິສັດ) ໄດ້ສະແດງສະຖານະທາງການເງິນຂອງບໍລິສັດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

### ການກວດສອບຂອງພວກເຮົາມີດັ່ງນີ້

ເອກະສານລາຍງານການເງິນຂອງບໍລິສັດປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2023;
- ໃບລາຍງານຜົນໄດ້ຮັບ ສໍາລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານສ່ວນປ່ຽນແປງທຶນ ສໍາລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານກະແສເງິນສົດ ສໍາລັບປີສິ້ນສຸດມື້ດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສໍາຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

### ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດໍາເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບອິດສະຫຼະ ສໍາລັບການກວດສອບ ເອກະສານລາຍງານການເງິນ ໃນບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສໍາລັບການອອກຄວາມເຫັນຂອງພວກເຮົາ.

### ຄວາມເປັນອິດສະຫຼະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກໍານົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກໍານົດໂດຍຄະນະກໍາມະການຈັນຍາບັນ ນານາຊາດ ສໍາລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

### ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມເອກະສານລາຍງານການເງິນ. ພື້ນຖານການບັນຊີທີ່ຖືກນໍາໃຊ້ໃນການກະກຽມບົດລາຍງານການເງິນສະບັບນີ້ ອາດມີຄວາມແຕກຕ່າງກັບ ຈາກຫຼັກການບັນຊີ ມາດຕະຖານການລາຍງານການເງິນສາກົນ (IFRS). ດັ່ງນັ້ນ, ຜູ້ທີ່ນໍາໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດໍາເນີນງານ ແລະ ກະແສເງິນສົດຕາມ IFRS. ທັ້ງນີ້ຄວາມເຫັນ ຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

*ບໍລິສັດ ພຣາຍສວໍເຕີເຮົ້າສກູບເປີສ (ລາວ) ຈໍາກັດຜູ້ດຽວ. ຊັ້ນ 4 ອາຄານອາລີອັນສ໌, ອາຄານເລກທີ 33 ຖະໜົນລ້ານຊ້າງ ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ. ໂທ: 856 21 222718/9. www.pwc.com/la*

pwc

*ເລື່ອງສຳຄັນໃນການກວດສອບ*

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີສິ້ນສຸດນີ້. ພວກເຮົາໄດ້ນຳເນື້ອໃນສຳຄັນເຫຼົ່ານີ້ມາລວມໃນການກວດສອບເອກະສານລາຍງານການເງິນຄື ມູນຄ່າຂອງເຄື່ອງໃນສາງ ເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

| ເລື່ອງສຳຄັນໃນການກວດສອບ | ວິທີການກວດສອບ |
|---|---|
| **ມູນຄ່າຂອງເຄື່ອງໃນສາງ**<br><br>ອີງຕາມບົດອະທິບາຍຊ້ອນທ້າຍຂໍ້ 4 'ການປະມານການບັນຊີ, ຂໍ້ສົມມຸດຕິຖານ ແລະ ດຸນພິນິດທີ່ສຳຄັນ' ແລະ ບົດອະທິບາຍຊ້ອນທ້າຍຂໍ້ 7 'ເຄື່ອງໃນສາງ ສຸດທິ' ໃນເອກະສານລາຍງານການເງິນ.<br><br>ໃນວັນທີ 31 ທັນວາ 2023. ຍອດເຫຼືອເຄື່ອງໃນສາງກ່ອນ ສຳຮອງເງິນແຮມູນຄ່າ 491.108 ລ້ານກີບ ເທົ່າກັບ 27% ຂອງຍອດຊັບສິນທັງໝົດ ຂອງບໍລິສັດ ແລະ ສຳຮອງເງິນແຮເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝມູນຄ່າ 6.760 ລ້ານກີບ. ເຄື່ອງໃນສາງນີ້ ສ່ວນໃຫຍ່ ປະກອບມີ ເຄື່ອງໃນສາງຄົງເຫຼືອໃນຫ້ອງວາງສະແດງສິນຄ້າ ແລະ ເຄື່ອງໃນສາງຄົງເຫຼືອ ໃນສາງສິນຄ້າ.<br><br>ວັນທີ 31 ທັນວາ 2023, ຜູ້ບໍລິຫານໄດ້ທົບທວນຄືນການຕັ້ງສຳຮອງເງິນແຮເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ ໂດຍພິຈາລະນາຈາກຂໍ້ມູນທັງສອງໃນອະດີດ ລວມທັງສະພາບຂອງເຄື່ອງໃນສາງຈາກການນັບເຄື່ອງໃນສາງ ແລະ ຄວາມເປັນໄປໄດ້ໃນການຂາຍສິນຄ້າໃນອະນາຄົດ, ຜູ້ບໍລິຫານໄດ້ປະມານການເຄື່ອນໄຫວຂອງເຄື່ອງໃນສາງ ແລະ ລະບຸກຸ່ມຂອງຜະລິດຕະພັນທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ, ຜູ້ບໍລິຫານຍັງໄດ້ຕັ້ງສຳຮອງເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ ໂດຍການນຳໃຊ້ອັດຕາເປີເຊັນ ທີ່ແຕກຕ່າງກັນໄປ ສຳລັບສິນຄ້າທີ່ບໍ່ເຄື່ອນໄຫວຕັ້ງແຕ່ ໜຶ່ງປີຫົກເດືອນເປັນຕົ້ນໄປ ເຊິ່ງຜູ້ບໍລິຫານພິຈາລະນາແລ້ວເຫັນວ່າລາຍການທີ່ເກີດຂຶ້ນໃນອະດີດ ແລະ ການຄາດຄະເນຂອງລາຍການຂາຍໃນອະນາຄົດຂອງສິນຄ້າໃນສາງທີ່ກ່ຽວຂ້ອງ.<br><br>ນອກຈາກນີ້, ບໍລິສັດປະມານການມູນຄ່າເຄື່ອງໃນສາງດ້ວຍລາຄາຕ່ຳສຸດ ຫຼືມູນຄ່າສຸດທິທີ່ຈະໄດ້ຮັບ (NRV) ຜູ້ບໍລິຫານປະມານການມູນຄ່າສຸດທິທີ່ຈະໄດ້ຮັບໂດຍປຽບທຽບກັບລາຄາຂາຍປົກກະຕິ ຫັກຄ່າໃຊ້ຈ່າຍໃນການຂາຍ.<br><br>ພວກເຮົາສຸມໃສ່ບັນຫານີ້ ເພາະວ່າການປະມານການມູນຄ່າຂອງເຄື່ອງໃນສາງຄົງເຫຼືອປະກອບດ້ວຍການຮ່ວມການຕັດສິນໃຈຂອງຜູ້ບໍລິຫານຢ່າງມີສາລະສຳຄັນ ເພື່ອກຳນົດເປີເຊັນທີ່ເໝາະສົມ ເມື່ອປະມານການສຳຮອງເງິນແຮສຳລັບເຄື່ອງໃນສາງທີ່ບໍ່ເຄື່ອນໄຫວເພື່ອປະມານການລາຄາຂາຍ ເພື່ອພິຈາລະນາວ່າມູນຄ່າຂອງເຄື່ອງໃນສາງນັ້ນເໝາະສົມ. | ພວກເຮົາປະເມີນຄວາມເໝາະສົມຂອງການປະເມີນມູນຄ່າສິນຄ້າຄົງຄ້າງໂດຍ:<br><br>• ທຳຄວາມເຂົ້າໃຈນະໂຍບາຍຂອງບໍລິສັດ ກ່ຽວກັບການກຳນົດການປະເມີນຂອງມູນຄ່າຂອງເຄື່ອງໃນສາງ ແລະ ທົບທວນຄືນຂັ້ນຕອນການເກັບຂໍ້ມູນເພື່ອໃຫ້ໝັ້ນໃຈວ່າກວດກາຖືກຕ້ອງ ແລະ ຄົບຖ້ວນກ່ຽວກັບຂໍ້ມູນທີ່ກ່ຽວຂ້ອງທີ່ໃຊ້ສຳລັບການທົບທວນຄືນຂອງພວກເຮົາ;<br>• ດຳເນີນການກວດສອບການຄວບຄຸມພາຍໃນ ການຈັດຊື້ ແລະ ຊຳລະເງິນ ເຊິ່ງລວມມີ ໃບຂໍອະນຸຍາດສັ່ງຊື້, ໃບສັ່ງຊື້, ການຮັບສິນຄ້າ, ການຊຳລະ ແລະ ການບັນທຶກ ເພື່ອທົດສອບຄວາມຖືກຕ້ອງຂອງຕົ້ນທຶນສິນຄ້າໃນສາງ;<br>• ວິເຄາະການເຄື່ອນໄຫວຂອງສິນຄ້າ ແລະ ປຽບທຽບກັບຜົນການປະມານການສິນຄ້າເຄື່ອນໄຫວຊ້າ ແລະ ຫຼ້າສະໄໝຂອງຜູ້ບໍລິຫານ;<br>• ການຕິດຕາມການນັບສິນຄ້າໃນສາງໂດຍຜູ້ບໍລິຫານ ລວມທັງການກວດກາກັບການຄິດໄລ່ການສຳຮອງທີ່ກ່ຽວຂ້ອງ ໂດຍສະເພາະ ສິນຄ້າຫຼ້າສະໄໝ ແລະ ດ້ອຍຄ່າ.<br>• ສັງເກດການນັບເຄື່ອງໃນສາງ ເພື່ອເຂົ້າເຖິງເງື່ອນໄຂຂອງການໃນການປະມານການສຳຮອງເງິນແຮສຳລັບສິນຄ້າດ້ອຍຄ່າ ແລະ ເປ່ເພ.<br>• ປະເມີນຄວາມເໝາະສົມໃນການຄິດໄລ່ລາຄາຂາຍ ຕໍ່ຫົວໜ່ວຍຂອງຜູ້ບໍລິຫານທີ່ໃຊ້ໃນການຄິດໄລ່ສຳຮອງເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ ແລະ ສຸ່ມກວດກາລາຄາຂາຍຫຼັງທ້າຍງວດບັນຊີ ແລະ ຫຼັກຖານປະກອບທີ່ກ່ຽວຂ້ອງ.<br><br>ຈາກຂັ້ນຕອນຂ້າງເທິງ ພວກເຮົາເຫັນວ່າ ຜູ້ອຳນວຍການປະມານການ ສຳຮອງເງິນແຮສິນຄ້າເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ ດ້ວຍຄວາມສົມເຫດສົມຜົນ. |

pwc

## ຂໍ້ມູນອື່ນ

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນເອກະສານລາຍງານການເງິນປະຈຳປີ ແຕ່ບໍ່ລວມເຖິງເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດວ່າຈະໄດ້ຮັບເອກະສານ ລາຍງານການເງິນປະຈຳປີ ພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ໃນການກວດສອບຂອງພວກເຮົາ ຄວາມຮັບຜິດຊອບຂອງພວກເຮົາ ທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ ຄືການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນມີຄວາມຂັດແຍ່ງທີ່ເປັນສາລະສຳຄັນ ກັບເອກະສານລາຍງານການເງິນ ຫຼື ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ. ພວກເຮົາຕ້ອງໄດ້ແຈ້ງໃຫ້ຄະນະກຳມະການກວດສອບ ແລະ ຜູ້ບໍລິຫານຮັບຊາບເພື່ອດັດແກ້ ແລະ ເຜີຍແຜ່ບົດລາຍງານອີກເທື່ອໜຶ່ງ.

## ຄວາມຮັບຜິດຊອບຂອງຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ແລະ ນຳສະເໜີ ໂດຍສອດຄ່ອງກັບ ຫຼັກການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ບໍລິຫານໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບໄດ້ຊ່ວຍຜູ້ອຳນວຍການ ໃນເລື່ອງຄວາມຮັບຜິດຊອບ ຂອງພວກເຂົາຕໍ່ກັບຂັ້ນຕອນໃນການກຽມບົດລາຍງານການເງິນ.

## ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍລວມ ປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີ ຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກ ການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳ ເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນ ໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບ ຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງ ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການ ແລະ ຫຼັກຖານ ການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ ສົງໄສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານ ລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ ຂໍ້ສະຫຼຸບຂອງພວກເຮົາ ຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບ ຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງ ການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫຼັກຈັນຍາບັນກ່ຽວຂ້ອງກັບຄວາມເປັນ ອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນ ທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫຼັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນ ອິດສະຫຼະ.

pwc

ຈາກເລື່ອງທີ່ສື່ສານກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາເລື່ອງຕ່າງໆທີ່ເປັນສາລະສຳຄັນ ທີ່ສຸດໃນການກວດສອບເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ. ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສວໍເຕີເຮົ້າສຄູບເປີສ (ລາວ) ຈຳກັດ ຜູ້ດຽວ




ໂດຍ: ອະພິສິດ ທ່ຽງຕົງພິນໂຍ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 13 ກຸມພາ 2024

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

## ໃບລາຍງານສະຖານະການເງິນ
## ວັນທີ 31 ທັນວາ 2023

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| **ຊັບສິນ** | | | |
| **ຊັບສິນໝູນວຽນ** | | | |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 5 | 97.622.510.973 | 38.288.451.914 |
| ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ | 6 | 5.564.004.643 | 6.217.863.819 |
| ເຄື່ອງໃນສາງ, ສຸດທິ | 7 | 484.347.770.402 | 402.463.937.243 |
| ຊັບສິນໝູນວຽນອື່ນໆ | 8 | 38.424.118.275 | 20.547.738.684 |
| **ລວມຊັບສິນໝູນວຽນ** | | **625.958.404.293** | **467.517.991.660** |
| **ຊັບສິນບໍ່ໝູນວຽນ** | | | |
| ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ | 9 | 1.171.299.214.767 | 904.691.252.324 |
| ຊັບສິນບໍ່ໝູນວຽນອື່ນໆ | 8 | 8.730.500.190 | 20.355.868.711 |
| ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ | 10 | 365.075.938 | 116.392.238 |
| **ລວມຊັບສິນບໍ່ໝູນວຽນ** | | **1.180.394.790.895** | **925.163.513.273** |
| **ລວມຊັບສິນ** | | **1.806.353.195.188** | **1.392.681.504.933** |

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 13 ກຸມພາ 2024

ພັນໄນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 13 ກຸມພາ 2024

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ໃບລາຍງານສະຖານະການເງິນ
ວັນທີ 31 ທັນວາ 2023

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| **ໜີ້ສິນ** | | | |
| **ໜີ້ສິນໝູນວຽນ** | | | |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | 11 | 65.565.702.900 | 51.745.048.229 |
| ເງິນເບີກເກີນບັນຊີ ແລະ ເງິນກູ້ຢືມໄລຍະສັ້ນ | 12 | 54.694.740.214 | 84.934.340.351 |
| ສ່ວນໝູນວຽນຂອງເງິນໃຫ້ກູ້ຢືມໄລຍະຍາວ | 12 | 26.353.809.980 | 20.671.002.986 |
| ໜີ້ຕ້ອງສົ່ງອາກອນກຳໄລ | 14 | 12.359.633.801 | 11.564.148.709 |
| ເງິນມັດຈຳຈາກລູກຄ້າ | 15 | 2.952.230.119 | 2.003.390.891 |
| ໜີ້ສິນໝູນວຽນອື່ນໆ | 16 | 19.538.533.683 | 14.345.115.421 |
| **ລວມໜີ້ສິນໝູນວຽນ** | | **181.464.650.697** | **185.263.046.587** |
| **ໜີ້ສິນບໍ່ໝູນວຽນ** | | | |
| ເງິນກູ້ຢືມໄລຍະຍາວຈາກສະຖາບັນການເງິນ | 12 | 48.063.332.611 | 58.329.409.126 |
| ເງິນກູ້ຢືມໄລຍະຍາວຈາກຮຸ້ນກູ້ | 13 | 62.116.071.600 | - |
| **ລວມໜີ້ສິນບໍ່ໝູນວຽນ** | | **110.179.404.211** | **58.329.409.126** |
| **ລວມໜີ້ສິນ** | | **291.644.054.908** | **243.592.455.713** |
| **ທຶນ** | | | |
| ທຶນຈົດທະບຽນ | 17 | 330.000.000.000 | 330.000.000.000 |
| ສ່ວນເພີ່ມມູນຄ່າຮຸ້ນ | 17 | 24.735.724.722 | 24.735.724.722 |
| ກຳໄລສະສົມ | | | |
| ເງິນສຳຮອງຕາມກົດໝາຍ | 18 | 20.181.970.566 | 14.102.046.968 |
| ເງິນສຳຮອງອື່ນໆ | 18 | 19.931.970.566 | 13.852.046.968 |
| ກຳໄລລໍຖ້າແບ່ງປັນ | | 250.094.367.876 | 217.954.979.089 |
| ຜົດດ່ຽງຈາກການແປງຄ່າເອກະສານລາຍງານການເງິນ | | 869.765.106.550 | 548.444.251.473 |
| **ລວມທຶນ** | | **1.514.709.140.280** | **1.149.089.049.220** |
| **ລວມໜີ້ສິນ ແລະ ທຶນ** | | **1.806.353.195.188** | **1.392.681.504.933** |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດດານາ ສຸດຂະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 13 ກຸມພາ 2024

ພົນໄນລາ ສຸດຂະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 13 ກຸມພາ 2024

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

## ໃບລາຍງານຜົນໄດ້ຮັບ
## ສຳລັບສິ້ນສຸດ ວັນທີ 31 ທັນວາ 2023

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| ລາຍໄດ້ຈາກການຂາຍ | | 767.139.816.343 | 647.161.515.668 |
| ຕົ້ນທຶນໃນການຂາຍ | 19 | (577.868.541.221) | (485.502.857.955) |
| **ກຳໄລລວມຂັ້ນຕົ້ນ** | | **189.271.275.122** | **161.658.657.713** |
| ລາຍຮັບອື່ນໆ | | 3.775.988.159 | 2.561.646.580 |
| ລາຍຈ່າຍໃນການຂາຍ | 19 | (68.779.390.380) | (53.069.064.227) |
| ລາຍຈ່າຍບໍລິຫານ | 19 | (44.395.469.247) | (43.132.823.609) |
| ຕົ້ນທຶນການເງິນ | | (9.440.438.865) | (8.124.604.117) |
| ກຳໄລ / (ຂາດທຶນ) ຈາກອັດຕາແລກປ່ຽນ | | 1.160.130.886 | 6.662.858.647 |
| **ກຳໄລ ກ່ອນຈ່າຍອາກອນກຳໄລ** | | **71.592.095.675** | **66.556.670.987** |
| ລາຍຈ່າຍອາກອນກຳໄລ | 20 | (10.792.859.692) | (9.944.957.710) |
| **ກຳໄລສຸດທິ** | | **60.799.235.983** | **56.611.713.277** |
| **ກຳໄລຕໍ່ຮຸ້ນ** | | | |
| ກຳໄລພື້ນຖານຕໍ່ຮຸ້ນ | | 368 | 343 |

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 13 ກຸມພາ 2024

ພັນໂນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 13 ກຸມພາ 2024

**ໃບລາຍງານສ່ວນປ່ຽນແປງທຶນ**
**ສຳລັບສິ້ນສຸດ ວັນທີ 31 ທັນວາ 2023**

| | ບົດ ອະທິບາຍ | ຮຸ້ນສາມັນທີ່ອອກ ແລະ ຈ່າຍແລ້ວ ກີບ | ສ່ວນເພີ່ມ ມູນຄ່າຮຸ້ນ ກີບ | ສຳຮອງເງິນ ຕາມກົດໝາຍ ກີບ | ສຳຮອງເງິນ ອື່ນໆ ກີບ | ກຳໄລສະສົມ ລໍຖ້າແບ່ງປັນ ກີບ | ຜົນຕ່າງຈາກການແປງ ຄ່າເອກະສານລາຍ ງານການເງິນ ກີບ | ລວມ ກີບ |
|---|---|---|---|---|---|---|---|---|
| **ຍອດຍົກມາ ວັນທີ 1 ມັງກອນ 2022** | | 330.000.000.000 | 24.735.724.722 | 8.440.875.640 | 8.190.875.640 | 180.915.608.468 | 207.436.085.637 | 759.719.170.107 |
| ສຳຮອງເງິນຕາມກົດໝາຍ | | - | - | 5.661.171.328 | - | (5.661.171.328) | - | - |
| ສຳຮອງເງິນອື່ນໆ | | - | - | - | 5.661.171.328 | (5.661.171.328) | - | - |
| ກຳໄລສຸດທິໃນປີ | | - | - | - | - | 56.611.713.277 | - | 56.611.713.277 |
| ຈ່າຍເງິນປັນຜົນ | 21 | - | - | - | - | (8.250.000.000) | - | (8.250.000.000) |
| ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ | | - | - | - | - | - | 341.008.165.836 | 341.008.165.836 |
| **ຍອດເຫຼືອໃນວັນທີ 31 ທັນວາ 2022** | | **330.000.000.000** | **24.735.724.722** | **14.102.046.968** | **13.852.046.968** | **217.954.979.090** | **548.444.251.473** | **1.149.089.049.220** |
| **ຍອດຍົກມາ ວັນທີ 1 ມັງກອນ 2023** | | 330.000.000.000 | 24.735.724.722 | 14.102.046.968 | 13.852.046.968 | 217.954.979.089 | 548.444.251.473 | 1.149.089.049.220 |
| ສຳຮອງເງິນຕາມກົດໝາຍ | | - | - | 6.079.923.598 | - | (6.079.923.598) | - | - |
| ສຳຮອງເງິນອື່ນໆ | | - | - | - | 6.079.923.598 | (6.079.923.598) | - | - |
| ກຳໄລສຸດທິໃນປີ | | - | - | - | - | 60.799.235.983 | - | 60.799.235.983 |
| ຈ່າຍເງິນປັນຜົນ | 21 | - | - | - | - | (16.500.000.000) | - | (16.500.000.000) |
| ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ | | - | - | - | - | - | 321.320.855.077 | 321.320.855.077 |
| **ຍອດເຫຼືອໃນວັນທີ 31 ທັນວາ 2023** | | **330.000.000.000** | **24.735.724.722** | **20.181.970.566** | **19.931.970.566** | **250.094.367.876** | **869.765.106.550** | **1.514.709.140.280** |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດດານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 13 ກຸມພາ 2024

ພັນໄບລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 13 ກຸມພາ 2024

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 12 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ສຸວັນນີ ໂຮມເຊັ່ນເຕີ ມະຫາຊົນ

**ໃບລາຍງານ ກະແສເງິນສົດ**
**ສຳລັບສິ້ນສຸດ ວັນທີ 31 ທັນວາ 2023**

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| **ກະແສເງິນສົດ ຈາກກິດຈະກຳການດຳເນີນງານ:** | | | |
| ກຳໄລກ່ອນອາກອນກຳໄລສຳລັບປີ | | 71.592.095.675 | 66.556.670.987 |
| ການດັດແກ້: | | | |
| ຄ່າຫຼູ້ຍຫ້ຽນ | 10 | 26.264.684.632 | 23.011.152.048 |
| ການຕັດຈ່າຍ | 11 | 276.619 | 6.694.689 |
| (ກຳໄລ) / ຂາດທຶນຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ | | 241.033.613 | (341.145.801) |
| ຂາດທຶນຈາກອັດຕາແລກປ່ຽນ | | 15.766.091.931 | 10.898.529.381 |
| ລາຍຈ່າຍດອກເບ້ຍ | | 7.288.621.421 | 8.124.604.117 |
| ສຳຮອງເງິນແຮເຄື່ອງໃນສາງ | | (1.968.627.461) | 1.507.680.606 |
| ສຳຮອງເງິນແຮໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ | | (1.839.104.424) | 3.660.182.750 |
| ສຳຮອງສຳລັບສິ່ງຄືນການຂາຍ | | 721.179.343 | 800.697.550 |
| ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຂອງທຶນໝູນວຽນ | | 118.066.251.349 | 114.225.066.327 |
| ການປ່ຽນແປງຈາກ ການດຳເນີນງານຂອງຊັບສິນ ແລະ ໜີ້ສິນ | | | |
| - ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ | | 3.671.661.218 | 7.318.076.794 |
| - ເຄື່ອງໃນສາງ | | 30.992.773.852 | 12.438.560.104 |
| - ຊັບສິນໝູນວຽນອື່ນໆ | | 4.634.987.252 | (30.593.484.562) |
| - ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | | (2.827.444.258) | (33.568.273.843) |
| - ເງິນມັດຈຳຈາກລູກຄ້າ | | 396.759.860 | (1.063.052.890) |
| - ໜີ້ສິນໝູນວຽນອື່ນໆ | | 1.198.248.403 | (6.949.828.997) |
| ກະແສເງິນສົດເພີ່ມຂຶ້ນຈາກການດຳເນີນງານ | | 156.133.237.676 | 61.807.062.933 |
| ຈ່າຍດອກເບ້ຍ | | (7.246.570.390) | (8.065.521.527) |
| ຈ່າຍອາກອນກຳໄລ | 15 | (10.944.957.710) | (3.951.260.210) |
| ເງິນສົດສຸດທິ ໄດ້ຈາກສຳລັບກິດຈະກຳ ການດຳເນີນງານ | | 137.941.709.576 | 49.790.281.196 |
| **ກະແສເງິນສົດ ຈາກກິດຈະກຳ ການລົງທຶນ:** | | | |
| ຊື້ອາຄານ ແລະ ອຸປະກອນ | | (45.475.264.153) | (14.489.151.307) |
| ຊື້ຊອບແວຄອມພິວເຕີ | | (216.925.978) | (63.068.285) |
| ຮັບເງິນຈາກການຂາຍທີ່ດິນ, ອາຄານ ແລະ ອຸປະກອນ | | 245.388.000 | 550.065.950 |
| ເງິນສົດສຸດທິໃຊ້ໃນກິດຈະກຳໃນການລົງທຶນ | | (45.446.802.131) | (14.002.153.642) |

ອຸດສາຫະກຳ ແລະ ການຄ້າ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດຕານາ ສຸຄະບັນດິດ
ຜູ້ອຳນວຍການໃຫຍ່
ວັນທີ: 13 ກຸມພາ 2024

ພັນໃນລາ ສຸຄະບັນດິດ
ຜູ້ອຳນວຍການ ຝ່າຍການເງິນ
ວັນທີ: 13 ກຸມພາ 2024

## ໃບລາຍງານ ກະແສເງິນສົດ
### ສໍາລັບສິ້ນສຸດ ວັນທີ 31 ທັນວາ 2023

| | ບົດ ອະທິບາຍ | 2023 ກີບ | 2022 ກີບ |
|---|---|---|---|
| **ກະແສເງິນສົດຈາກກິດຈະກໍາການເງິນ:** | | | |
| ຮັບເງິນກູ້ຢືມຈາກທະນາຄານ | | 481.773.255.542 | 496.320.013.715 |
| ການຊໍາລະຄືນຂອງເງິນກູ້ຢືມຈາກທະນາຄານ | | (553.376.221.402) | (489.601.287.323) |
| ຮັບເງິນກູ້ຢືມຈາກຮຸ້ນກູ້ | 13 | 62.116.071.600 | - |
| ຈ່າຍເງິນປັນຜົນ | 21 | (16.500.000.000) | (8.250.000.000) |
| ເງິນສົດສຸດທິໃຊ້ໃນກິດຈະກໍາທາງການເງິນ | | (25.986.894.260) | (1.531.273.608) |
| **ເພີ່ມຂຶ້ນສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | 66.508.013.185 | 34.256.853.946 |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຕົ້ນປີ | 5 | 38.288.451.914 | 3.285.274.048 |
| ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ | | (7.173.954.126) | 746.323.920 |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດ** | | **97.622.510.973** | **38.288.451.914** |

**ລາຍການບໍ່ແມ່ນເງິນສົດທີ່ສໍາຄັນ**

| | | 2023 ກີບ | 2022 ກີບ |
|---|---|---|---|
| ໜີ້ຕ້ອງສົ່ງອື່ນໆຈາກການຊື້ອາຄານ ແລະ ອຸປະກອນ | | 2.388.588.400 | 789.048.267 |

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ວັດດານາ ສຸດຂະບັນດິດ
ຜູ້ອໍານວຍການໃຫຍ່
ວັນທີ: 13 ກຸມພາ 2024

ພັນໄນລາ ສຸດຂະບັນດິດ
ຜູ້ອໍານວຍການ ຝ່າຍການເງິນ
ວັນທີ: 13 ກຸມພາ 2024

## 1. ຂໍ້ມູນທົ່ວໄປ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (ຊື່ເກົ່າແມ່ນ ບໍລິສັດ ສຸວັນນີ ການຄ້າ ຂາອອກ-ຂາເຂົ້າ ຈໍາກັດຜູ້ດຽວ) ເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ. ກິດຈະການຫຼັກແມ່ນຂາຍສິນຄ້າ ແລະ ອຸປະກອນສໍາລັບການກໍ່ສ້າງ, ນອກຈາກນັ້ນ ຍັງມີການຕົບແຕ່ງ, ການສ້ອມແປງ ແລະ ປັບປຸງອາຄານ, ບ້ານເຮືອນ ແລະ ສະຖານທີ່ຢູ່ອາໄສ ແລະ ສະໜອງການບໍລິການທີ່ກ່ຽວຂ້ອງໃຫ້ກັບທຸລະກິດຂາຍຍ່ອຍ.

ມີສໍານັກງານໃຫຍ່ຕັ້ງຢູ່: ເຮືອນເລກທີ 366, ບ້ານ ໂພນຕ້ອງສະຫວາດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສ ປປ ລາວ. ແລະຍັງມີສາຂາ 07 ສາຂາ ເຊັ່ນ: ບ້ານໂພນຕ້ອງສະຫວາດ, ບ້ານສີໄຄ, ບ້ານ ໂຊກໃຫຍ່, ເມືອງປາກຊັນ, ເມືອງທ່າແຂກ, ສະຫວັນນະເຂດ ແລະ ເມືອງປາກເຊ.

ເອກະສານລາຍງານການເງິນສະບັບນີ້ໄດ້ຜ່ານການອະນຸມັດ ໂດຍຜູ້ອໍານວຍການ ໃນວັນທີ 13 ກຸມພາ 2024.

## 2. ສະຫຼຸບລວມວິທີການບັນຊີທີ່ສໍາຄັນ

ວິທີການບັນຊີທີ່ໄດ້ນໍາໃຊ້ໃນການກະກຽມເຂົ້າໃນເອກະສານລາຍງານການເງິນມີດັ່ງລຸ່ມນີ້:

### 2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມ ຕາມນະໂຍບາຍບັນຊີຂອງບໍລິສັດທີ່ໄດ້ອະທິບາຍໄວ້ຕາມຂ້າງລຸ່ມນີ້ ເຊິ່ງໂດຍທົ່ວໄປໄດ້ມີການກະກຽມ ບົນພື້ນຖານຕົ້ນທຶນເດີມ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ IFRS. ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສໍາລັບ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບເພື່ອກະກຽມເຮັດແຜນປະຕິບັດການ ໃນການນໍາໃຊ້ IFRS ພາຍໃນໄລຍະເວລາສີ່ປີ. ເຖິງຢ່າງໃດກໍ່ຕາມ, ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຄວນປະຕິບັດການ ໃນການນໍາໃຊ້ IFRS ຕັ້ງແຕ່ວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ຜູ້ບໍລິຫານກໍາລັງກະກຽມແຜນປະຕິບັດການ ສໍາລັບການດໍາເນີນການຕາມ IFRS ຕາມແຈ້ງການ. ຫຼັກການບັນຊີທີ່ນໍາໃຊ້ອາດແຕກຕ່າງຢ່າງມີສາລະສໍາຄັນ ຈາກບົດລາຍງານການເງິນຕາມມາດຕະຖານບັນຊີສາກົນ (IFRS).

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກໍານົດຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈໍານວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈໍານວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງສາລະສໍາຄັນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນຢ່າງເປັນສາລະສໍາຄັນ.

## 2. ສະຫຼຸບລວມວິທີການບັນຊີທີ່ສໍາຄັນ (ຕໍ່)

### 2.2 ການປ່ຽນຄ່າເງິນຕາຕ່າງປະເທດ

ກ) ສະກຸນເງິນຫຼັກທີ່ນໍາໃຊ້ ແລະ ນໍາສະເໜີ

ການວັດມູນຄ່າໃນເອກະສານລາຍງານການເງິນຂອງບໍລິສັດ ແມ່ນຮັບຮູ້ເປັນສະກຸນເງິນບາດ ເຊິ່ງເປັນສະກຸນເງິນຫຼັກທາງເສດຖະກິດໃນການປະຕິບັດງານຂອງບໍລິສັດ ໂດຍສະເພາະແມ່ນການຊື້ສິນຄ້າ.

ຂ) ລາຍການເຄື່ອນໄຫວ ແລະ ຍອດຄົງເຫຼືອ

ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດ ຈະຖືກປ່ຽນຄ່າເປັນສະກຸນເງິນບາດໂດຍໃຊ້ອັດຕາແລກປ່ຽນຂອງບໍລິສັດ ໃນວັນທີ ທີ່ມີລາຍການນັ້ນເກີດຂຶ້ນ, ກໍາໄລ ແລະ ຂາດທຶນ ຈາກອັດຕາແລກປ່ຽນ ຂອງການສະສາງບັນດາລາຍການເຄື່ອນໄຫວ ແລະ ການແປງຄ່າ ອັດຕາແລກປ່ຽນໃນທ້າຍປີ ຂອງ ຊັບສິນ ແລະ ໜີ້ສິນ ທາງການເງິນ ໃນສະກຸນເງິນຕາຕ່າງປະເທດແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບ 'ກໍາໄລ (ຂາດທຶນ) ສຸດທິ ຈາກອັດຕາແລກປ່ຽນ'.ໂດຍອັດຕາແລກປ່ຽນແມ່ນນໍາໃຊ້ຈາກ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL).

ບໍລິສັດໄດ້ແປງເອກະສານລາຍງານການເງິນຈາກສະກຸນບາດ ເປັນສະກຸນເງິນກີບ ເຊິ່ງເປັນສະກຸນເງິນທີ່ນໍາສະເໜີດັ່ງຕໍ່ໄປນີ້:

- ຊັບສິນ ແລະ ໜີ້ສິນ ໃນໃບລາຍງານຖານະທາງການເງິນ ທີ່ນໍາສະເໜີ ແມ່ນຖືກແປງຄ່າ ດ້ວຍອັດຕາແລກປ່ຽນໃນມື້ປິດບັນຊີຂອງໃບລາຍງານຖານະທາງການເງິນ ຍົກເວັ້ນທຶນຈົດທະບຽນເຊິ່ງຖືກນໍາສະເໜີໂດຍອີງຕາມມູນຄ່າຕົ້ນທຶນເດີມ.
- ລາຍຮັບ ແລະ ລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບສັງລວມ ແມ່ນ ຖືກແປງຄ່າ ດ້ວຍອັດຕາແລກປ່ຽນສະເລ່ຍໃນລະຫວ່າງປີ.
- ຜົນແຕກຕ່າງຈາກການແປງຄ່າ ແມ່ນຮັບຮູ້ ແລະ ສະແດງພາຍໃຕ້ຄ່າຜິດດ່ຽງຈາກການແປງຄ່າເອກະສານລາຍງານການເງິນໃນໃບລາຍງານສ່ວນປ່ຽນແປງທຶນ.

### 2.3 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ໃນໃບລາຍງານກະແສເງິນສົດ, ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ລວມເຖິງ ເງິນສົດໃນມື, ເງິນຝາກທະນາຄານທີ່ສາມາດຮຽກຄືນໄດ້ໃນເວລາຕ້ອງການ ແລະ ເງິນລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ເຊິ່ງມີອາຍຸການຄົບກໍານົດໃນ ສາມເດືອນ ຫຼື ໜ້ອຍກວ່າ ນັບແຕ່ມື້ຊື້. ໃນໃບລາຍງານຖານະການເງິນ ເງິນເບີກເກີນບັນຊີ ຈະຖືສະແດງໃນໜີ້ສິນໝູນວຽນໄລຍະສັ້ນ.

## 2. ສະຫຼຸບລວມວິທີການບັນຊີທີ່ສໍາຄັນ (ຕໍ່)

### 2.4 ໜີ້ຕ້ອງຮັບທາງການຄ້າ

ໜີ້ຕ້ອງຮັບທາງການຄ້າ ແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນຕໍ່ມາ ແມ່ນນໍາມູນຄ່າຍັງເຫຼືອ ຫັກລົບສໍາຮອງໜີ້ສົງໄສຈະສູນໂດຍອີງຕາມການທົບທວນຄືນມູນຄ່າຄ້າງຊໍາລະທັງໝົດໃນທ້າຍປີ. ຈໍານວນເງິນທີ່ຫັກຂອງໜີ້ສົງໄສຈະສູນ ແມ່ນສ່ວນຕ່າງລະຫວ່າງມູນຄ່າຕາມບັນຊີ ຂອງໜີ້ຕ້ອງຮັບ ແລະ ມູນຄ່າທີ່ຄາດວ່າຈະເກັບຄືນໄດ້. ໜີ້ສູນແມ່ນຈະຖືກສະສາງໃນປີເຊິ່ງຈະຖືກລະບຸໃນກໍາໄລ ຫຼື ຂາດທຶນພາຍໃຕ້ລາຍຈ່າຍບໍລິຫານ.

### 2.5 ເຄື່ອງໃນສາງ

ເຄື່ອງໃນສາງສະແດງອອກ ຕາມລາຄາທີ່ຕໍ່າກວ່າລະຫວ່າງລາຄາຕົ້ນທຶນ ແລະ ມູນຄ່າສຸດທິທີ່ຈະໄດ້ຮັບ. ຕົ້ນທຶນ ໄດ້ນໍາໃຊ້ວິທີສະເລ່ຍຕາມນໍ້າໜັກ, ຕົ້ນທຶນຊື້ ປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍທາງກົງ ທີ່ຕິດພັນກັບການຊື້ເຄື່ອງໃນສາງ ເຊັ່ນ: ຄ່າທໍານຽມທີ່ກ່ຽວຂ້ອງກັບການນໍາເຂົ້າ, ຄ່າຂົນສົ່ງ, ຫັກລົບທຸກສ່ວນຫຼຸດທີ່ໄດ້ຮັບ. ມູນຄ່າສຸດທິທີ່ຈະໄດ້ຮັບ ແມ່ນລາຄາທີ່ເຄື່ອງໃນສາງ ສາມາດຂາຍອອກໃນຮອບວຽນ ປົກກະຕິຂອງວິສາຫະກິດ ຫຼັງຈາກຫັກຕົ້ນທຶນໃນການຂາຍອອກ. ຄ່າສໍາຮອງເງິນແຮທີ່ເກີດຂຶ້ນ, ກໍລະນີ ສິນຄ້າເຄື່ອນໄຫວຊ້າ ຫຼື ຫຼ້າສະໄໝ, ເສຍຄຸນເຄື່ອງໃນສາງອື່ນໆ.

### 2.6 ທີ່ດິນ ແລະ ອຸປະກອນ

ຊັບສິນມີຕົວຕົນທັງໝົດ, ສິ່ງປຸກສ້າງ ແລະ ອຸປະກອນແມ່ນໄດ້ຖືກບັນທຶກຕາມຄ່າຕົ້ນທຶນເດີມ ຫັກຄ່າຫຼຸ້ຍຫ້ຽນສະສົມ. ມູນຄ່າຕົ້ນທຶນເດີມ ລວມມີລາຍຈ່າຍໂດຍກົງເພື່ອການໄດ້ມາຂອງລາຍການນັ້ນໆ.

ຕົ້ນທຶນໃນການປ່ຽນແທນ ແມ່ນໄດ້ລວມມີມູນຄ່າຕາມບັນຊີຂອງຊັບສິນເມື່ອ ມີຄວາມແນ່ໃຈວ່າຈະເກີດປະໂຫຍດທາງເສດຖະກິດໃນອະນາຄົດ ເຂົ້າສູ່ບໍລິສັດ ແລະ ມູນຄ່າຕາມບັນຊີທີ່ຖືກປ່ຽນແທນພາກສ່ວນດັ່ງກ່າວ ແມ່ນບໍ່ໄດ້ຮັບຮູ້. ຄ່າສ້ອມແປງ ແລະ ບໍາລຸງຮັກສາ ແມ່ນຈະສະແດງໃນໃບລາຍງານຜົນໄດ້ຮັບສັງລວມ ໃນລະຫວ່າງໄລຍະທາງການເງິນ ເມື່ອລາຍການນັ້ນເກີດຂຶ້ນ.

ທີ່ດິນບໍ່ໄດ້ຖືກຄິດໄລ່ຄ່າຫຼຸ້ຍຫ້ຽນ. ຄ່າຫຼຸ້ຍຫ້ຽນແມ່ນໄດ້ຄິດໄລ່ໂດຍການຄິດໄລ່ຄ່າຫຼຸ້ຍຫ້ຽນບົນຫຼັກການ ການຄິດໄລ່ ແບບຄົງຕົວ, ເພື່ອຈັດສັນກັບມູນຄ່າຍັງເຫຼືອ ຂອງແຕ່ລະລາຍການຊັບສິນຕາມອາຍຸການໃຊ້ງານທີ່ຄາດຄະເນມີດັ່ງຕໍ່ໄປນີ້:

| | ປີ |
|---|---|
| ອາຄານ ແລະ ສ່ວນປັບປຸງທີ່ດິນ | 30,20 |
| ເຄື່ອງໃຊ້ຫ້ອງການ | 3 – 5 |
| ເຟີນິເຈີ ແລະ ສິ່ງທີ່ຕິດຕັ້ງຖາວອນ | 2 – 10 |
| ພາຫະນະ | 3 – 5 |

ມູນຄ່າຄົງເຫຼືອ ແລະ ອາຍຸການນໍາໃຊ້ຂອງຊັບສິນແມ່ນໄດ້ຖືກກວດກາຄືນໃໝ່ ແລະ ປັບປຸງໃຫ້ເໝາະສົມໃນທ້າຍຂອງແຕ່ລະໄລຍະການລາຍງານ.

ມູນຄ່າຕາມບັນຊີຂອງຊັບສິນແມ່ນຖືກຈົດບັນທຶກທັນທີໃຫ້ເທົ່າກັບມູນຄ່າທີ່ສາມາດເກັບຄືນໄດ້ຖ້າມູນຄ່າຕາມບັນຊີຂອງຊັບສິນສູງກວ່າມູນຄ່າທີ່ຄາດຄະເນ ສາມາດເກັບຄືນໄດ້.

ກໍາໄລ ຫຼື ຂາດທຶນຈາກການສະສາງ ແມ່ນຈະຖືກກໍານົດ ໂດຍການສົມທຽບ ຂັ້ນຕອນ ກັບມູນຄ່າຕາມບັນຊີ ແລະ ບັນທຶກໃນ (ຂາດທຶນ)/ກໍາໄລ ສຸດທິ ໃນໃບລາຍງານຜົນໄດ້ຮັບສັງລວມ.

## 2. ສະຫຼຸບລວມວິທີການບັນຊີທີ່ສໍາຄັນ (ຕໍ່)

### 2.7 ຊັບສິນຄົງທີ່ບໍ່ມີຕົວຕົນ

#### 2.7.1 ໂປແກຼມຄອມພິວເຕີ

ສິດທິການໃຊ້ໂປແກຼມຄອມພິວເຕີໂດຍທີ່ຊື້ມາ ແມ່ນຈະຖືກບັນທຶກເປັນຊັບສິນໂດຍຄິດໄລ່ຈາກຕົ້ນທຶນໃນການໄດ້ມາ ແລະ ການດໍາເນີນການໃຫ້ໂປແກຼມຄອມພິວເຕີດັ່ງກ່າວນັ້ນ ສາມາດນໍາມາໃຊ້ງານໄດ້ຕາມເປົ້າໝາຍ ແລະ ຈະຖືກຕັດຈ່າຍຕະຫຼອດອາຍຸປະເມີນການໃຫ້ປະໂຫຍດພາຍໃນໄລຍະເວລາ ສາມ ປີ. ຕົ້ນທຶນທີ່ກ່ຽວຂ້ອງກັບການບໍາລຸງຮັກສາຂອງໂປແກຼມຄອມພິວເຕີແມ່ນຈະຖືກບັນທຶກເປັນລາຍຈ່າຍເມື່ອລາຍການດັ່ງກ່າວເກີດຂຶ້ນ.

### 2.8 ເງິນກູ້ຢືມ

ເງິນກູ້ຢືມ ຈະຖືກຮັບຮູ້ຕາມມູນຄ່າກູ້ຢືມເບື້ອງຕົ້ນຂອງເງິນທີ່ໄດ້ຮັບ.

ເງິນກູ້ຢືມນີ້ ແມ່ນຖືກຈັດປະເພດເປັນໜີ້ສິນໝູນວຽນ ໂດຍການເລື່ອນຊໍາລະໜີ້ສິນ ຢ່າງໜ້ອຍ ສິບສອງ ເດືອນ ຫຼັງຈາກມື້ໃນໃບລາຍງານຖານະການເງິນ.

#### 2.8.1 ຕົ້ນທຶນເງິນກູ້ຢືມ

ຕົ້ນທຶນຂອງເງິນກູ້ຢືມທົ່ວໄປ ແລະ ສະເພາະ ທີ່ກ່ຽວຂ້ອງໂດຍກົງກັບການໄດ້ມາ, ການກໍ່ສ້າງ ຫຼື ການຜະລິດຂອງຊັບສິນທີ່ມີຄຸນສົມບັດຕາມກໍານົດ ເຊິ່ງເປັນຊັບສິນທີ່ຈໍາເປັນຕ້ອງໃຊ້ໄລຍະເວລາພໍສົມຄວນໃນການກຽມໃຫ້ພ້ອມສໍາລັບການໃຊ້ງານ ຫຼື ຂາຍ ຕາມວັດຖຸປະສົງ ຈະຖືກລວມເຂົ້າໃນຕົ້ນທຶນຂອງຊັບສິນດັ່ງກ່າວຈົນກວ່າຈະເຖິງເວລາທີ່ຊັບສິນມີຄວາມພ້ອມສໍາລັບການໃຊ້ງານ ຫຼື ຂາຍ.

ຄ່າທໍານຽມທີ່ຈ່າຍໄປສໍາລັບການກູ້ຢືມຈະໄດ້ຮັບຮູ້ເປັນຕົ້ນທຶນຂອງເງິນກູ້ຢືມ ຕໍ່ເມື່ອມີຄວາມເປັນໄປໄດ້ທີ່ຈະໃຊ້ວົງເງິນກູ້ບາງສ່ວນ ຫຼື ທັງໝົດ. ໃນກໍລະນີນີ້, ຄ່າທໍານຽມ ແມ່ນຈະຖືກຮັບຮູ້ຈົນຮອດມື້ຖອນເງິນ ຫາກບໍ່ມີຫຼັກຖານທີ່ມີຄວາມເປັນໄປໄດ້ທີ່ຈະໃຊ້ວົງເງິນກູ້ບາງສ່ວນ ຫຼື ທັງໝົດ ຄ່າທໍານຽມແມ່ນຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍຈ່າຍລ່ວງໜ້າສໍາລັບການໃຫ້ບໍລິການ ແລະ ຕັດຄ່າເຊື່ອມ ຕາມໄລຍະເວລາຂອງເງິນກູ້ຢືມທີ່ກ່ຽວຂ້ອງ.

ລາຍໄດ້ຈາກການລົງທຶນທີ່ໄດ້ຮັບຈາກການລົງທຶນຊົ່ວຄາວຂອງເງິນກູ້ຢືມສະເພາະ ການໃຊ້ຈ່າຍໃນຊັບສິນທີ່ມີຄຸນສົມບັດຕາມກໍານົດແມ່ນຖືກຫັກອອກຈາກຕົ້ນທຶນເງິນກູ້ຢືມຢ່າງເໝາະສົມສໍາລັບການບັນທຶກເຂົ້າເປັນຕົ້ນທຶນຂອງຊັບສິນ.

ຕົ້ນທຶນເງິນກູ້ຢືມອື່ນ ຈະຖືກຮັບຮູ້ເປັນລາຍຈ່າຍໃນງວດທີ່ເກີດຂຶ້ນ.

### 2.9 ເງິນແຮ

ເງິນແຮ ຖືກບັນທຶກບັນຊີ ໃນເວລາມີພັນທະໃນປະຈຸບັນຕາມກົດໝາຍ ຫຼື ພັນທະການກໍ່ສ້າງ ເຊິ່ງເກີດຈາກເຫດການຜ່ານມາ. ເປັນໄປໄດ້ວ່າ ແຫຼ່ງຊັບພະຍາກອນຈະໄຫຼອອກເພື່ອສະສາງພັນທະ ແລະ ຈໍານວນເງິນສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້. ຍົກເວັ້ນເງິນແຮ ເພື່ອຜົນປະໂຫຍດພະນັກງານ ຕາມທີ່ໄດ້ ອະທິບາຍຂໍ້ 2.12.

## 2. ສະຫຼຸບລວມວິທີການບັນຊີທີ່ສໍາຄັນ (ຕໍ່)

### 2.10 ການຮັບຮູ້ລາຍຮັບ

ລາຍຮັບໃນໃບເກັບເງິນຈາກການຂາຍສິນຄ້າສຸດທິຫຼັງຫັກສ່ວນຫຼຸດທີ່ໄດ້ຮັບ ແລະ ສ່ວນຫຼຸດຈາກການສັ່ງຊື້. ລາຍຮັບຈາກການຂາຍສິນຄ້າຮັບຮູ້ເມື່ອມີຄວາມສ່ຽງ ແລະ ຜົນປະໂຫຍດທີ່ສໍາຄັນເຈົ້າຂອງສິນຄ້າແມ່ນຖືກໂອນ ຫຼື ຖືກສົ່ງໃຫ້ຜູ້ຊື້. ນະໂຍບາຍບໍລິສັດໃນການຂາຍສິນຄ້າໃຫ້ຜູ້ຊື້ໂດຍໃຫ້ສິດໃນການສົ່ງຄືນພາຍໃນ 30 ວັນ. ດັ່ງນັ້ນ, ໜີ້ສິນຈາກການສົ່ງຄືນສິນຄ້າຈາກລູກຄ້າ (ຖືກລວມຢູ່ໃນບັນຊີໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ) ແລະ ສິດໃນການຄືນສິນຄ້າ (ຖືກລວມຢູ່ໃນຊັບສິນໝູນວຽນອື່ນໆ) ຖືກຮັບຮູ້ຕາມຈໍານວນທີ່ຄາດວ່າລູກຄ້າຈະສົ່ງສິນຄ້າຄືນ ກິດຈະການປະເມີນ ໂດຍໃຊ້ວິທີມູນຄ່າທີ່ຄາດວ່າຈະໄດ້ຮັບ ຈາກປະສົບການ ແລະ ຂໍ້ມູນໃນອະດີດ ເນື່ອງຈາກຈໍານວນສິນຄ້າທີ່ລູກຄ້າສົ່ງຄືນມາມີຈໍານວນຄ່ອນຂ້າງຄົງທີ່ ຈຶ່ງມີຄວາມເປັນໄປໄດ້ສູງທີ່ການກັບລາຍການທີ່ມີສາລະສໍາຄັນໃນລາຍໄດ້ທີ່ຮັບຮູ້ສະສົມຈະບໍ່ເກີດຂຶ້ນ ກິດຈະການທົບທວນຄວາມເໝາະສົມຂອງຂໍ້ສົມມຸດຕິຖານນີ້ ແລະ ປະເມີນຈໍານວນເງິນທີ່ຈະຕ້ອງຊໍາລະຄືນລູກຄ້າເມື່ອມີການຄືນສິນຄ້າທຸກຮອບໄລຍະເວລາລາຍງານ.

ການຂາຍສິນຄ້າ ທີ່ມີການຕິດຕັ້ງ ແລະ ການກວດກາສະພາບຂອງສິນຄ້າ ແມ່ນໄດ້ຮັບຮູ້ເມື່ອຜູ້ຊື້ໄດ້ຮັບສິນຄ້າ, ການຕິດຕັ້ງ ແລະ ການກວດກາສໍາເລັດ.

ລາຍຮັບຈາກການບໍລິການບໍາລຸງຮັກສາແມ່ນຮັບຮູ້ເປັນລາຍຮັບເມື່ອການໃຫ້ບໍລິການແກ່ລູກຄ້າສໍາເລັດສົມບູນ.

ລາຍຮັບອື່ນໆແມ່ນຮັບຮູ້ອີງຕາມພື້ນຖານດັ່ງນີ້:

- ລາຍຮັບຈາກດອກເບ້ຍແມ່ນຮັບຮູ້ຕາມອັດຕາພື້ນຖານຄິດໄລ່ຕາມໄລຍະເວລາ, ຄິດໄລ່ຈາກບັນຊີເງິນຕົ້ນທີ່ຍັງຄ້າງ ແລະ ອັດຕາດອກເບ້ຍໃນຊ່ວງເວລາທີ່ກໍານົດ. ເມື່ອມີຄວາມແນ່ນອນວ່າລາຍໄດ້ຈະເກີດຂຶ້ນກັບບໍລິສັດ.
- ລາຍຮັບອື່ນໆແມ່ນຮັບຮູ້ໃນເກນຄ້າງຮັບຄ້າງຈ່າຍ.

### 2.11 ອາກອນ

ບໍລິສັດ ບັນທຶກ ອາກອນລາຍໄດ້ ຕາມເກນຫຼັກຄ້າງຮັບຄ້າງຈ່າຍ. ບໍລິສັດ ບໍ່ໄດ້ບັນທຶກ ອາກອນລາຍໄດ້ຕ້ອງຈ່າຍ ຫຼື ຕ້ອງຮັບໃນອະນາຄົດ ເຊິ່ງເກີດຈາກສ່ວນຜິດດ່ຽງຊົ່ວຄາວ. ລາຍຈ່າຍອາກອນແມ່ນຮັບຮູ້ບົນພື້ນຖານຜົນການດໍາເນີນງານໃນປີ ຫຼັງດັດແກ້ ບໍ່ຫັກລາຍຈ່າຍ ແລະ ລາຍການເຄື່ອນໄຫວອື່ນໆ ຕາມກົດໝາຍວ່າດ້ວຍ ສ່ວຍສາອາກອນ ແລະ ອັດຕາອາກອນ. ພາຍໃຕ້ລະບຽບການບັນຊີ ແລະ ກົດໝາຍສ່ວຍສາອາກອນ. ລາຍຈ່າຍອາກອນ ໃນປີ ແມ່ນໄດ້ຄິດໄລ່ຕາມ ພື້ນຖານລາຍຮັບຂອງບໍລິສັດ (ບົດອະທິບາຍ ຂໍ້ທີ 20).

ໃນ ສປປ ລາວ ອາກອນລາຍໄດ້ຕ້ອງໄດ້ຮັບການກວດກາລາຍລະອຽດຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ. ໃນການກວດກາຄືນດັ່ງກ່າວອາດຈະຕ້ອງມີຄໍາເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊໍາລະອາກອນເພີ່ມເຕີມ ຫຼື ຮັບຄືນ ໃນຄວາມຈໍາເປັນ. ເຫດນີ້ຈະມີຜົນໃນການຈ່າຍເງິນ ຫຼື ຮັບຄືນ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍອາກອນລາຍໄດ້ໃນປີທີ່ມີການກວດກາໄດ້ສໍາເລັດ.

### 2.12 ຜົນປະໂຫຍດໃຫ້ພະນັກງານ

#### ຜົນປະໂຫຍດພາຍຫຼັງອອກການ

ຜົນປະໂຫຍດພາຍຫຼັງອອກການ ຈະຈ່າຍໃຫ້ພະນັກງານທີ່ກະສຽນອາຍຸຂອງພະນັກງານບໍລິສັດ ເມື່ອເຖິງເວລາກະສຽນອັດຕາເບີເຊັນເລີ່ມຈາກ 50% - 100% ຂອງກອງທຶນເຊິ່ງສົມທົບໂດຍບໍລິສັດ ອີງຕາມຈໍານວນປີການ ເຊິ່ງກໍານົດຢ່າງຕໍ່າສິບປີ.

## 2. ສະຫຼຸບລວມວິທີການບັນຊີທີ່ສຳຄັນ (ຕໍ່)

### 2.12 ຜົນປະໂຫຍດໃຫ້ພະນັກງານ

#### ຜົນປະໂຫຍດພາຍຫຼັງອອກການ

ກອງທຶນເພື່ອຜົນປະໂຫຍດຫຼັງອອກການ ແມ່ນມາຈາກ:

i) ຄັງສຳຮອງກະສຽນອາຍຸທີ່ປະກອບສ່ວນໂດຍຈາກພະນັກງານ ເຊິ່ງບໍລິສັດໄດ້ຫັກຈຳນວນເງິນໄວ້ຈາກເງິນເດືອນໃນແຕ່ລະເດືອນຂອງພະນັກງານ ໃນລະດັບອັດຕາຈາກ 0,5% - 2% ເຊິ່ງອີງຕາມແຕ່ລະຊັ້ນຕຳແໜ່ງຂອງພະນັກງານ.

ii) ບໍລິສັດປະກອບສ່ວນໃນແຕ່ລະເດືອນ ຄືກັນກັບການປະກອບສ່ວນຂອງພະນັກງານ.

ບໍລິສັດໄດ້ບັນທຶກເງິນສົມທົບເປັນເງິນເດືອນ ແລະ ຄ່າໃຊ້ຈ່າຍຂອງພະນັກງານອື່ນໆເຂົ້າໃນໃບລາຍງານຜົນການດຳເນີນງານຕາມພື້ນຖານບັນຊີຄົງຄ້າງ.

ບໍລິສັດ ແລະ ພະນັກງານ ຍັງໄດ້ປະກອບສ່ວນເງິນອຸດໜູນເຂົ້າອົງການປະກັນສັງຄົມ ໂດຍຣຽກຮ້ອງໃຫ້ປະກອບສ່ວນຢູ່ທີ່ 6% ແລະ 5,5% ຂອງເງິນເດືອນພື້ນຖານພະນັກງານ ແລະ ບໍລິສັດຍັງຄົງຈ່າຍເງິນຜົນປະໂຫຍດຫຼັງອອກການຕາມທີ່ກ່າວໄວ້ຂ້າງເທິງ.

ອີງຕາມກົດໝາຍ ເມື່ອພະນັກງານເຂົ້າບຳນານ ຫຼື ບໍ່ເຖິງເກນໃນກົດໝາຍແຮງງານ. ສະນັ້ນ, ບໍລິສັດຈະໄດ້ມີພັນທະດ້ານເງິນບຳນານຕໍ່ກັບພະນັກງານ.

ບໍ່ມີການຕັ້ງສຳຮອງເງິນສະຫວັດດີການໃຫ້ພະນັກງານກະສຽນອາຍຸພາຍໃນປີ. ໜີ້ຕ້ອງສົ່ງແມ່ນຖືກຮັບຮູ້ໃນເບື້ອງໃນສະຫຼຸບຊັບສົມບັດ ແລະ ບັນດາລາຍຈ່າຍທີ່ກ່ຽວຂ້ອງແມ່ນຮັບຮູ້ຢູ່ໃນໃບລາຍງານຜົນໄດ້ຮັບສັງລວມອີງຕາມຈຳນວນເກີດຂຶ້ນຕົວຈິງເມື່ອພະນັກງານກະສຽນ.

## 3. ການບໍລິຫານຄວາມສ່ຽງທາງດ້ານການເງິນ

#### ປັດໄຈຄວາມສ່ຽງທາງດ້ານການເງິນ

ບໍລິສັດມີໜ້າທີ່ຕ້ອງຈຳກັດຄວາມສ່ຽງທາງດ້ານການເງິນ: ຄວາມສ່ຽງທາງດ້ານການຕະຫຼາດ (ໄດ້ແກ່ການປ່ຽນແປງຂອງອັດຕາແລກປ່ຽນ, ອັດຕາດອກເບ້ຍກະແສເງິນສົດ,ຄວາມສ່ຽງທາງດ້ານລາຄາ) ຄວາມສ່ຽງສິນເຊື່ອ ແລະ ຄວາມສ່ຽງທາງດ້ານສະພາບຄ່ອງ.

ຜູ້ບໍລິຫານຂອງບໍລິສັດ ຕ້ອງແນໃສ່ຄວາມບໍ່ແນ່ນອນຂອງຕະຫຼາດການເງິນ ແລະ ເລັງໃສ່ຜົນກະທົບທີ່ອາດຈະເກີດຂຶ້ນ ຕໍ່ປະສິດທິພາບການເງິນຂອງບໍລິສັດທັງໝົດ ໃນລັກສະນະທີ່ຄຸ້ມຄ່າ.

ການບໍລິຫານຄວາມສ່ຽງໂດຍທົ່ວໄປ ແມ່ນບໍລິຫານຈັດການພາຍໃຕ້ການດູແລກອດກາຈາກຄະນະຜູ້ອຳນວຍການ.

## 3. ການບໍລິຫານຄວາມສ່ຽງທາງດ້ານການເງິນ (ຕໍ່)

### ປັດໄຈຄວາມສ່ຽງທາງດ້ານການເງິນ (ຕໍ່)

### 3.1 ຄວາມສ່ຽງທາງດ້ານອັດຕາແລກປ່ຽນ

ບໍລິສັດດຳເນີນກິດຈະການພາຍໃນປະເທດ ແຕ່ມີຄວາມສ່ຽງທາງດ້ານອັດຕາແລກປ່ຽນເກີດຂຶ້ນ ໂດຍສ່ວນໃຫຍ່ມາຈາກການຊື້ສິນຄ້າໃນສະກຸນເງິນບາດ. ນອກຈາກນີ້ ຄວາມສ່ຽງທາງດ້ານອັດຕາແລກປ່ຽນຍັງເກີດຈາກການເຄື່ອນໄຫວທາງດ້ານການຄ້າອື່ນໆ ແລະ ເງິນກູ້ຢືມ.

ຜູ້ບໍລິຫານ ພິຈາລະນາຄວາມສ່ຽງທາງດ້ານອັດຕາແລກປ່ຽນຈາກການເຄື່ອນໄຫວທາງດ້ານການຄ້າຢູ່ໃນລະດັບຕໍ່າ ເນື່ອງຈາກທາງບໍລິສັດນຳໃຊ້ການປ້ອງກັນຄວາມສ່ຽງຈາກການຊື້ ແລະ ການຂາຍໃນສະກຸນເງິນດຽວກັນ. ໂດຍກຳນົດລາຄາຂາຍເປັນສະກຸນເງິນບາດທີ່ເປັນສະກຸນດຽວກັນກັບຜູ້ສະໜອງສ່ວນໃຫຍ່ ແລະ ໄລຍະເວລາໃນການຊຳລະໜີ້ ແລະ ການເກັບເງິນຄືນແມ່ນບໍ່ແຕກຕ່າງກັນຢ່າງເປັນສາລະສຳຄັນ.

ໃນວັນທີ 31 ທັນວາ 2023, ຜູ້ບໍລິຫານບໍ່ມີນະໂຍບາຍເປັນທາງການ ແລະ ບໍ່ມີການນຳໃຊ້ເຄື່ອງມືທາງດ້ານການເງິນ ຫຼື ເຄື່ອງມືອື່ນໆໃນການບໍລິຫານຄວາມສ່ຽງທາງດ້ານອັດຕາແລກປ່ຽນຈາກເງິນກູ້ຢືມເປັນເງິນບາດ. ແນວໃດກໍຕາມ, ຜູ້ບໍລິຫານແມ່ນໄດ້ຕິດຕາມການເຄື່ອນໄຫວຂອງອັດຕາແລກປ່ຽນເງິນຕາຕ່າງປະເທດໃນເວລາທີ່ເໝາະສົມ ແລະ ອາດຈະໃຊ້ເຄື່ອງມືທາງດ້ານການເງິນ ຫຼື ເຄື່ອງມືອື່ນໆເພື່ອບໍລິຫານຄວາມສ່ຽງດັ່ງກ່າວຖ້າຫາກວ່າຜູ້ບໍລິຫານເຫັນວ່າມີຄວາມສຳຄັນ. ດັ່ງນັ້ນ, ການປ່ຽນແປງຂອງອັດຕາແລກປ່ຽນອາດມີ ເປັນສ່ວນສຳຄັນທີ່ສົ່ງຜົນຕໍ່ການດຳເນີນທຸລະກິດຂອງບໍລິສັດ. ຜົນການດຳເນີນງານ. ເງື່ອນໄຂທາງດ້ານການເງິນ ແລະ ໂອກາດຕ່າງໆ.

### 3.2 ຄວາມສ່ຽງທາງດ້ານສິນເຊື່ອ

ຄວາມສ່ຽງທາງດ້ານສິນເຊື່ອສ່ວນໃຫຍ່ແມ່ນເກີດຈາກການຂາຍທີ່ໃຫ້ສິນເຊື່ອກັບບໍລິສັດ ແລະ ລູກຄ້າລາຍຍ່ອຍ. ດັ່ງນັ້ນ, ຜູ້ບໍລິຫານຈຶ່ງຕ້ອງຈັດການຄວາມສ່ຽງທາງດ້ານສິນເຊື່ອຢ່າງຮອບຄອບ, ຫຼັກການຈັດການຄວາມສ່ຽງທາງດ້ານສິນເຊື່ອຂອງບໍລິສັດ ມີດັ່ງຕໍ່ໄປນີ້:

- ຜູ້ບໍລິຫານທົບທວນຄືນ ແລະ ຕິດຕາມບັນຊີໜີ້ຕ້ອງຮັບທັງໝົດທີ່ມີອາຍຸຫຼາຍກວ່າ ຫົກ ເດືອນເປັນປະຈຳ.
- ຜູ້ບໍລິຫານມອບໝາຍໃຫ້ທີມງານໃຫ້ມີສ່ວນຮ່ວມໃນການຕິດຕໍ່ກັບລູກຄ້າໂດຍກົງ.
- ຜູ້ບໍລິຫານປະເມີນຕັ້ງສຳຮອງໜີ້ສູນຂຶ້ນຈາກຍອດບັນຊີໜີ້ຕ້ອງຮັບທີ່ຄ້າງຊຳລະເກີນກວ່າ ຫົກ ເດືອນໂດຍທົບທວນການຊຳລະເງິນໃນອະດີດຫຼ້າສຸດ ແລະ ຄາດຄະເນກ່ຽວກັບຄວາມສາມາດໃນການເກັບຄືນໃນອະນາຄົດ.

### 3.3 ຄວາມສ່ຽງທາງດ້ານອັດຕາດອກເບ້ຍ

ທາງບໍລິສັດບໍ່ມີສິນຊັບທີ່ຕ້ອງອ້າງອີງອັດຕາດອກເບ້ຍຢ່າງມີໄລຍະສຳຄັນ. ແຕ່ຄວາມສ່ຽງທາງດ້ານອັດຕາແລກປ່ຽນທີ່ເກີດຈາກການກູ້ຢືມ ໃນອັດຕາດອກເບ້ຍຕາມລາຄາຕະຫຼາດ ບໍລິສັດ ໄດ້ລຸດຄວາມສ່ຽງໂດຍການກູ້ຢືມເງິນໄລຍະສັ້ນ ຊຶ່ງຜູ້ບໍລິຫານເຊື່ອວ່າ ຜົນກະທົບຈາກການປ່ຽນແປງໃນອັດຕາດອກເບ້ຍ ຈະບໍ່ສົ່ງຜົນກະທົບຕໍ່ກັບບໍລິສັດຢ່າງເປັນສາລະສຳຄັນ.

### 3.4 ຄວາມສ່ຽງທາງດ້ານສະພາບຄ່ອງ

ການບໍລິຫານຄວາມສ່ຽງທາງດ້ານສະພາບຄ່ອງແມ່ນເວົ້າເຖິງຄວາມພຽງພໍຂອງເງິນສົດ ແລະ ການລົງທຶນໄລຍະສັ້ນ. ການວາງແຜນການບໍລິຫານແມ່ນເພື່ອຮັກສາເງິນສົດທີ່ໃຊ້ເພື່ອຮັກສາສະພາບຄ່ອງ ແລະ ເຮັດໃຫ້ໝັ້ນໃຈວ່າທຶນຈະມີຄວາມພຽງພໍຕໍ່ກັບຄວາມຕ້ອງການນຳໃຊ້ໃນໄລຍະສັ້ນເຊິ່ງຈະປະກອບດ້ວຍການຈ່າຍເງິນກູ້ຢືມ ແລະ ແຜນການລົງທຶນໄລຍະຍາວ.

## 3. ການບໍລິຫານຄວາມສ່ຽງທາງດ້ານການເງິນ (ຕໍ່)

### 3.5 ການບໍລິຫານຄວາມສ່ຽງຂອງທຶນ

ການບໍລິຫານຄວາມສ່ຽງຂອງທຶນເພື່ອການຄຸ້ມຄອງທຶນ ໂດຍມີວັດຖຸປະສົງ ໃຫ້ທຶນຢູ່ໃນລະດັບປອດໄພ ແລະ ເຮັດໃຫ້ມີຄວາມອາດສາມາດດຳເນີນງານຢ່າງຕໍ່ເນື່ອງ ແລະ ໃຫ້ມີຜົນປະໂຫຍດໃຫ້ຜູ້ຖືຮຸ້ນ ແລະ ຜູ້ມີສ່ວນຮ່ວມອື່ນໆ ແລະ ສືບຕໍ່ຮັກສາໂຄງສ້າງຂອງທຶນເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍຂອງການຈັດຫາທຶນ.

ເພື່ອທີ່ຈະຮັກສາ ຫຼື ປັບປຸງ ໂຄງສ້າງທຶນ ໃຫ້ສະດວກໃນການດຳເນີນງານ ແລະ ແຜນການລົງທຶນ. ບໍລິສັດ ອາດອອກຮຸ້ນໃໝ່, ຄືນເງິນທຶນໃຫ້ແກ່ຜູ້ຖືຮຸ້ນ ແລະ ດັດແກ້ຈຳນວນເງິນປັນຜົນທີ່ຈະຈ່າຍໃຫ້ຜູ້ຖືຮຸ້ນ ໃນອະນາຄົດ.

## 4. ການປະມານການບັນຊີ, ຂໍ້ສົມມຸດຕິຖານ ແລະ ດຸນພິນິດທີ່ສຳຄັນ

ການປະມານການບັນຊີ, ຂໍ້ສົມມຸດຕິຖານ ແລະ ດຸນພິນິດທີ່ສຳຄັນ ແມ່ນໄດ້ດຳເນີນການຢ່າງຕໍ່ເນື່ອງ ແລະ ຢູ່ເທິງພື້ນຖານປະສົບການທີ່ຜ່ານມາ ແລະ ປັດໄຈສຳຄັນອື່ນໆ ລວມເຖິງການຄາດຫວັງເຫດການໃນອະນາຄົດທີ່ເຊື່ອວ່າ ຈະສົມເຫດສົມຜົນໃນສະຖານະການໃນຕອນນັ້ນ.

ບໍລິສັດ ໄດ້ປະມານການບັນຊີ ແລະ ກຳນົດຂໍ້ສົມມຸດຕິຖານ ທີ່ກ່ຽວກັບອະນາຄົດ. ຜົນການປະເມີນການບັນຊີຈະບໍ່ເປັນໄປຕາມຜົນທີ່ເກີດຂຶ້ນຈິງ. ການປະມານການ ແລະ ຂໍ້ສົມມຸດຕິຖານ ທີ່ມີຄວາມສ່ຽງທີ່ເປັນສາລະສຳຄັນຕໍ່ກັບການດັດແກ້ມູນຄ່າຕາມບັນຊີຂອງຊັບສິນ ແລະ ໜີ້ສິນ ໃນການເງິນປີຕໍ່ໄປມີດັ່ງຕໍ່ໄປນີ້:

### 4.1 ຄ່າເຊື່ອມມູນຄ່າຂອງໜີ້ຕ້ອງຮັບການຄ້າ

ທາງ ບໍລິສັດ ໄດ້ກຳນົດສຳຮອງໜີ້ສົງໄສຈະສູນທີ່ຈະສະທ້ອນໃຫ້ເຫັນເຖິງ ຄ່າເຊື່ອມມູນຄ່າຂອງໜີ້ຕ້ອງຮັບຈາກການຄ້າ, ທີ່ກ່ຽວຂ້ອງກັນກັບເງິນສຳຮອງຂາດທຶນຈາກການຮຽກເກັບເງິນກັບລູກຄ້າ. ສຳຮອງໜີ້ສົງໄສຈະສູນອັນເປັນຜົນມາຈາກການປະເມີນເງິນສົດທີ່ຄາດວ່າຈະໄດ້ຮັບໃນອະນາຄົດຂອງ ບໍລິສັດ ເຊິ່ງການປະເມີນການແມ່ນຢູ່ເທິງພື້ນຖານການພິຈາລະນາປະສົບການທີ່ຜ່ານມາໃນການຮຽກເກັບເງິນຈາກລູກຄ້າ ແລະ ການຜິດນັດໃນການຊຳລະໜີ້ໂດຍຈະພິຈາລະນາຕາມແນວໂນ້ມຂອງຕະຫຼາດ.

### 4.2 ຄ່າສຳຮອງເງິນແຮເພື່ອຫຼຸດມູນຄ່າຂອງເຄື່ອງໃນສາງ

ທາງ ບໍລິສັດ ໄດ້ປະເມີນການຄ່າສຳຮອງເງິນແຮເພື່ອຫຼຸດມູນຄ່າຂອງເຄື່ອງໃນສາງລົງ ເພື່ອສະທ້ອນໃຫ້ເຫັນເຖິງມູນຄ່າສຸດທິຂອງເຄື່ອງໃນສາງ. ຄ່າສຳຮອງເງິນແຮເພື່ອຫຼຸດມູນຄ່າຂອງເຄື່ອງໃນສາງແມ່ນໄດ້ສະແດງ ການວິເຄາະຄວາມຫຼ້າສະໄໝຂອງສິນຄ້າ ແລະ ການຄາດການທີ່ກ່ຽວກັບການຂາຍສິນຄ້າໃນອະນາຄົດ. ຍອດເຫຼືອຂອງສິນຄ້າຄ້າງສາງ ແມ່ນຈະຖືກຕັດອອກທາງບັນຊີ ເມື່ອຮັບຮູ້ວ່າ ສິນຄ້າດັ່ງກ່າວແມ່ນ ໄດ້ຫຼ້າສະໄໝ ຫຼື ບໍ່ສາມາດຂາຍໄດ້.

## 5. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

| | 2023<br>ກີບ | 2022<br>ກີບ |
|---|---|---|
| ເງິນສົດໃນມື | 1.873.737.750 | 1.547.393.028 |
| ເງິນຝາກທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການກັບສະຖາບັນການເງິນ | 95.748.773.223 | 36.741.058.886 |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ | 97.622.510.973 | 38.288.451.914 |

ເງິນສົດໃນມືແມ່ນເງິນທີ່ພ້ອມຈ່າຍ ແລະ ເງິນທີ່ໄດ້ຈາກການຂາຍທີ່ໃຊ້ໄວ້ເພື່ອການໃຊ້ຈ່າຍທົ່ວໄປ.

ເງິນຝາກທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການກັບ ສະຖາບັນການເງິນ ໝາຍເຖິງ ເງິນຝາກກັບທະນາຄານທີ່ມີຊື່ສຽງພາຍໃນປະເທດໃນ ສາມ ສະກຸນເງິນ ໂດລາສະຫະລັດ, ບາດ ແລະ ກີບ ໃນບັນຊີກະແສລາຍວັນ ທີ່ມີອັດຕາດອກເບັ້ຍແຕ່ 0,45%-2,0% ຕໍ່ປີ (2022: 0,6% - 2.0% ຕໍ່ປີ) ແລະ ໃນບັນຊີເງິນຝາກປະຢັດທີ່ມີອັດຕາດອກເບັ້ຍແຕ່ 0,6% - 1,89% ຕໍ່ປີ.

## 6. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ

| | 2023<br>ກີບ | 2022<br>ກີບ |
|---|---|---|
| ໜີ້ຕ້ອງຮັບການຄ້າ | 11.045.224.899 | 12.191.152.544 |
| <u>ຫັກ</u> ສໍາຮອງເງິນແຮໜີ້ສົງໄສຈະສູນ | (5.886.977.559) | (6.266.253.522) |
| ໜີ້ຕ້ອງຮັບການຄ້າ ສຸດທິ | 5.158.247.340 | 5.924.899.022 |
| | | |
| ເງິນກູ້ຢືມພະນັກງານ | 347.851.278 | 188.935.487 |
| ໜີ້ຕ້ອງຮັບອື່ນໆ | 57.906.025 | 104.029.310 |
| | 405.757.303 | 292.964.797 |
| ລວມໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ | 5.564.004.643 | 6.217.863.819 |

## 6. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ (ຕໍ່)

ຍອດເຫຼືອໜີ້ຕ້ອງຮັບການຄ້າ ໃນວັນທີ 31 ທັນວາ 2023 ມີອາຍຸການດັ່ງລຸ່ມນີ້:

| | 2023<br>ກີບ | 2022<br>ກີບ |
|---|---|---|
| ບໍ່ຄົບກໍານົດ | 3.752.442.359 | 4.588.327.213 |
| ເກີນກໍານົດ | | |
| 1 - 3 ເດືອນ | 880.190.355 | 1.330.605.896 |
| 3 - 6 ເດືອນ | 525.615.903 | 5.965.782 |
| 6 - 12 ເດືອນ | 400.720.830 | 611.402.541 |
| ເກີນ 12 ເດືອນ | 5.486.255.452 | 5.654.851.112 |
| ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ສຸດທິ | 11.045.224.899 | 12.191.152.544 |
| ຫັກ ສໍາຮອງເງິນແຮໜີ້ສົງໄສຈະສູນ | (5.886.977.559) | (6.266.253.522) |
| ໜີ້ຕ້ອງຮັບການຄ້າ ສຸດທິ | 5.158.247.340 | 5.924.899.022 |

ໜີ້ຕ້ອງຮັບການຄ້າທີ່ມີອາຍຸເກີນ ຫົກ ເດືອນສ່ວນໃຫຍ່ເປັນໜີ້ຕ້ອງຮັບທີ່ຍັງຄົງມີການຊື້ຂາຍ ກັບບໍລິສັດຢ່າງຕໍ່ເນື່ອງ ການຕັ້ງສໍາຮອງເງິນແຮໜີ້ສົງໄສຈະສູນ ອີງຕາມຍອດໜີ້ຕ້ອງຮັບຄ້າງຊໍາລະເກີນ ຫົກ ເດືອນ ແລະ ໄດ້ຮັບການປະເມີນຈາກ ຜູ້ບໍລິຫານໃນເລື່ອງການຊໍາລະຂອງບັນຊີໜີ້ຕ້ອງຮັບຄືນຫຼັງ ແລະ ຄາດຄະເນກ່ຽວກັບການເກັບເງິນຄືນຈາກໜີ້ຕ້ອງຮັບການຄ້າໃນອະນາຄົດ.

## 7. ເຄື່ອງໃນສາງ, ສຸດທິ

| | 2023<br>ກີບ | 2022<br>ກີບ |
|---|---|---|
| ເຄື່ອງໃນສາງ | 491.108.241.328 | 409.531.257.556 |
| ຫັກ ສໍາຮອງເງິນແຮເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ | (6.532.248.329) | (6.748.748.957) |
| ສໍາຮອງເງິນແຮມູນຄ່າໂດຍຂຶ້ນກັບມູນຄ່າສຸດທິທີ່ຄາດວ່າຈະໄດ້ຮັບ | (228.222.597) | (318.571.356) |
| ສິນຄ້າໃນສາງ ສຸດທິ | 484.347.770.402 | 402.463.937.243 |

ຕົ້ນທຶນຂອງເຄື່ອງໃນສາງຖືກຮັບຮູ້ເປັນລາຍຈ່າຍ ແລະ ລວມຢູ່ໃນ 'ຕົ້ນທຶນການຂາຍ' ເປັນຈໍານວນເງິນ 577.869 ລ້ານກີບ (ໃນປີ 2022: 485.502 ລ້ານກີບ).

ໃນວັນທີ 31 ທັນວາ 2023, ຜູ້ບໍລິຫານໄດ້ປະເມີນ ແລະ ທົບທວນຄືນການສໍາຮອງເງິນແຮສໍາລັບ ເຄື່ອງໃນສາງທີ່ເຄື່ອນໄຫວຊ້າ ແລະ ຫຼ້າສະໄໝ, ເງິນແຮສໍາລັບເຄື່ອງໃນສາງທີ່ເຄື່ອໄຫວຊ້າ ແລະ ຫຼ້າສະໄໝໃນອະດີດ ແມ່ນໄດ້ດັດແກ້ໃຫ້ຫຼຸດລົງ ເປັນຈໍານວນເງິນ 6.760 ລ້ານກີບ (ໃນປີ 2022: 7.607 ລ້ານກີບ) ເນື່ອງຈາກເຄື່ອງໃນສາງທີ່ເຄື່ອໄຫວຊ້າ ສາມາດຂາຍໄດ້, ຜົນດັ່ງກ່າວເຮັດໃຫ້ເງິນແຮ ແລະ ຕົ້ນທຶນຂາຍ ຖືກປັບເພື່ອໃຫ້ສອດຄ່ອງກັບຄວາມເປັນຈິງ ແລະ ການວິເຄາະຂ້າງເທິງ.

## 8. ຊັບສິນໝູນວຽນອື່ນໆ

| | 2023<br>ກີບ | 2022<br>ກີບ |
|---|---:|---:|
| **ຊັບສິນໝູນວຽນ** | | |
| ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ | 4.583.529.979 | 773.039.615 |
| ເງິນຈ່າຍລ່ວງໜ້າຄ່າປະກັນໄພ | 74.945.474 | 137.934.712 |
| ສ່ວນຫຼຸດຄ້າງຮັບຈາກຜູ້ສະໜອງສິນຄ້າ (i) | 4.065.261.221 | 3.897.621.436 |
| ເງິນຈ່າຍລ່ວງໜ້າຄ່າເຊົ່າ (ບົດອະທິບາຍຂໍ້ 22,2) (ii) | 27.831.104.087 | 13.404.352.054 |
| ອື່ນໆ | 1.869.277.514 | 2.334.790.867 |
| ຊັບສິນໝູນວຽນອື່ນໆ | 38.424.118.275 | 20.547.738.684 |
| **ຊັບສິນບໍ່ໝູນວຽນ** | | |
| ຊັບສິນບໍ່ໝູນວຽນອື່ນໆ (ບົດອະທິບາຍຂໍ້ 22,2) (ii) | 8.730.500.190 | 20.355.868.711 |

(i) ສ່ວນຫຼຸດຈາກຜູ້ສະໜອງ ສະແດງໃຫ້ເຫັນຍອດສ່ວນຫຼຸດຍັງຄ້າງຮັບທີ່ຜູ້ສະໜອງໄດ້ຢັ້ງຢືນຍອດມາ ແລະ ຈະໄດ້ຮັບຊໍາລະໂດຍການຫັກຈາກເງິນໃນໃບເກັບເງິນເມື່ອບໍລິສັດຕ້ອງຈ່າຍໃຫ້ແກ່ຜູ້ສະໜອງ. ສ່ວນຫຼຸດຄ້າງຮັບຈາກຜູ້ສະໜອງໃນວັນທີ 31 ທັນວາ 2023 ສ່ວນຫຼາຍຈະໄດ້ຮັບຊໍາລະພາຍໃນໄຕມາດທໍາອິດຂອງປີ 2024.

(ii) ເງິນຈ່າຍລ່ວງໜ້າຄ່າເຊົ່າ ແມ່ນມາຈາກສັນຍາເຊົ່າທີ່ດິນ ທີ່ມີອາຍຸສັນຍາ ສາມປີ, ເຊິ່ງໄດ້ຊໍາລະລ່ວງໜ້າເຕັມຈໍານວນພາຍໃນປີ, ຍອດຄົງເຫຼືອແມ່ນໄດ້ຖືກແຍກປະເພດເປັນຊັບສິນບໍ່ໝູນວຽນ.

## 9. ທີ່ດິນ ອາຄານ ແລະ ອຸປະກອນ, ສຸດທິ

| | ທີ່ດິນ ກີບ | ອາຄານ ແລະ ສ່ວນປັບປຸງທີ່ດິນ ກີບ | ເຄື່ອງໃຊ້ຫ້ອງການ ກີບ | ເຟີນິເຈີ ແລະ ສິ່ງຕິດຕັ້ງຖາວອນ ກີບ | ພາຫະນະ ກີບ | ລະຫວ່າງການກໍ່ສ້າງ / ກີບ | ລວມ ກີບ |
|---|---|---|---|---|---|---|---|
| **ໃນວັນທີ 1 ມັງກອນ 2022** | | | | | | | |
| ຕົ້ນທຶນ | 267.896.239.572 | 163.283.018.761 | 6.752.322.407 | 43.883.776.851 | 15.162.256.741 | 31.837.461.011 | 528.815.075.343 |
| ສ່ວນຕ່າງອັດຕາແລກປ່ຽນຈາກການແປງຄ່າ | 118.157.729.290 | 55.495.131.680 | 602.590.670 | 7.299.317.511 | 1.959.167.517 | 13.819.103.932 | 197.333.040.600 |
| ຫັກ ຄ່າຫຼຸ້ຍຫ້ຽນສະສົມ | - | (40.970.023.302) | (5.545.767.029) | (26.838.886.765) | (15.309.370.274) | - | (88.664.047.370) |
| **ມູນຄ່າຕາມບັນຊີສຸດທິ** | **386.053.968.862** | **177.808.127.139** | **1.809.146.048** | **24.344.207.597** | **1.812.053.984** | **45.656.564.943** | **637.484.068.573** |
| **ທ້າຍປີ ວັນທີ 31 ທັນວາ 2022** | | | | | | | |
| ຍອດຍົກມາຕາມບັນຊີສຸດທິ | 386.053.968.862 | 177.808.127.139 | 1.809.146.048 | 24.344.207.597 | 1.812.053.984 | 45.656.564.943 | 637.484.068.573 |
| ສ່ວນຕ່າງອັດຕາແລກປ່ຽນຈາກການແປງຄ່າ | 169.860.415.376 | 76.442.143.679 | 613.472.205 | 9.172.269.899 | 564.127.224 | 20.088.494.387 | 276.740.922.770 |
| ການເພີ່ມຂຶ້ນ | - | - | 1.231.430.617 | 784.112.985 | 534.295.538 | 11.136.494.038 | 13.686.333.178 |
| ການໂອນເຂົ້າ(ອອກ) | - | 63.521.664.990 | 23.424.468 | 6.520.204.104 | 1.932.487.190 | (71.997.780.752) | - |
| ການຕັດ-ສຸດທິ | - | - | (27.765.101) | (181.154.547) | (501) | - | (208.920.149) |
| ຄ່າຫຼຸ້ຍຫ້ຽນ | - | (11.005.711.062) | (1.121.123.816) | (9.452.260.784) | (1.432.056.386) | - | (23.011.152.048) |
| **ຍອດເຫຼືອຕາມບັນຊີສຸດທິ** | **555.914.384.238** | **306.766.224.746** | **2.528.584.421** | **31.187.379.254** | **3.410.907.049** | **4.883.772.616** | **904.691.252.324** |
| **ໃນວັນທີ 31 ທັນວາ 2022** | | | | | | | |
| ຕົ້ນທຶນ | 267.896.239.572 | 226.804.683.751 | 7.979.412.391 | 51.006.939.393 | 17.629.038.968 | 4.883.772.616 | 576.200.086.691 |
| ສ່ວນຕ່າງອັດຕາແລກປ່ຽນຈາກການແປງຄ່າ | 288.018.144.666 | 131.937.275.359 | 1.216.062.875 | 16.471.587.410 | 2.523.294.741 | - | 440.166.365.051 |
| ຫັກ ຄ່າຫຼຸ້ຍຫ້ຽນສະສົມ | - | (51.975.734.364) | (6.666.890.845) | (36.291.147.549) | (16.741.426.660) | - | (111.675.199.418) |
| **ມູນຄ່າຕາມບັນຊີສຸດທິ** | **555.914.384.238** | **306.766.224.746** | **2.528.584.421** | **31.187.379.254** | **3.410.907.049** | **4.883.772.616** | **904.691.252.324** |

## 9. ທີ່ດິນ ອາຄານ ແລະ ອຸປະກອນ, ສຸດທິ (ຕໍ່)

| | ທີ່ດິນ<br>ກີບ | ອາຄານ ແລະ ສ່ວນປັບປຸງທີ່ດິນ<br>ກີບ | ເຄື່ອງໃຊ້ຫ້ອງການ<br>ກີບ | ເຟີນີເຈີ ແລະ ສິ່ງຕິດຕັ້ງຖາວອນ<br>ກີບ | ພາຫະນະ<br>ກີບ | ລະຫວ່າງການກໍ່ສ້າງ<br>ກີບ | ລວມ<br>ກີບ |
|---|---|---|---|---|---|---|---|
| **ໃນວັນທີ 1 ມັງກອນ 2023** | | | | | | | |
| ຕົ້ນທຶນ | 267.896.239.572 | 226.804.683.751 | 7.979.412.391 | 51.006.939.393 | 17.629.038.968 | 4.883.772.616 | 576.200.086.691 |
| ສ່ວນຕ່າງອັດຕາແລກປ່ຽນຈາກການແປງຄ່າ | 288.018.144.666 | 131.937.275.359 | 1.216.062.875 | 16.471.587.410 | 2.523.294.741 | - | 440.166.365.051 |
| ຫັກ ຄ່າຫຼຸ້ຍຫ້ຽນສະສົມ | - | (51.975.734.364) | (6.666.890.845) | (36.291.147.549) | (16.741.426.660) | - | (111.675.199.418) |
| **ມູນຄ່າຕາມບັນຊີສຸດທິ** | **555.914.384.238** | **306.766.224.746** | **2.528.584.421** | **31.187.379.254** | **3.410.907.049** | **4.883.772.616** | **904.691.252.324** |
| **ທ້າຍປີ ວັນທີ 31 ທັນວາ 2023** | | | | | | | |
| ຍອດຍົກມາຕາມບັນຊີສຸດທິ | 555.914.384.238 | 306.766.224.746 | 2.528.584.421 | 31.187.379.254 | 3.410.907.049 | 4.883.772.616 | 904.691.252.324 |
| ສ່ວນຕ່າງອັດຕາແລກປ່ຽນຈາກການແປງຄ່າ | 153.194.697.595 | 84.536.324.953 | 696.807.605 | 8.594.383.002 | 939.952.066 | 1.345.833.260 | 249.307.998.481 |
| ການເພີ່ມຂຶ້ນ | - | - | 1.075.193.051 | 598.015.039 | - | 46.190.644.463 | 47.863.852.553 |
| ການໂອນເຂົ້າ(ອອກ) | - | 171.666.060 | - | 1.142.145.056 | - | (1.313.811.116) | - |
| ການຕັດ-ສຸດທິ | - | (338.066.638) | (82.694.974) | (65.658.719) | (1.277) | - | (486.421.338) |
| ຄ່າຫຼຸ້ຍຫ້ຽນ | - | (16.460.044.952) | (1.251.590.943) | (10.927.816.838) | (1.438.014.520) | - | (30.077.467.253) |
| **ຍອດເຫຼືອຕາມບັນຊີສຸດທິ** | **709.109.081.833** | **374.676.104.439** | **2.966.299.160** | **30.528.446.794** | **2.912.843.318** | **51.106.439.223** | **1.171.299.214.767** |
| **ໃນວັນທີ 31 ທັນວາ 2023** | | | | | | | |
| ຕົ້ນທຶນ | 267.896.239.572 | 226.804.683.751 | 9.054.605.442 | 51.604.954.432 | 17.629.038.968 | 51.106.439.223 | 624.095.961.388 |
| ສ່ວນຕ່າງອັດຕາແລກປ່ຽນຈາກການແປງຄ່າ | 441.212.842.261 | 216.473.600.312 | 1.912.870.480 | 25.065.970.413 | 3.463.246.807 | - | 688.128.530.272 |
| ຫັກ ຄ່າຫຼຸ້ຍຫ້ຽນສະສົມ | - | (68.602.179.624) | (8.001.176.762) | (46.142.478.050) | (18.179.442.457) | - | (140.925.276.893) |
| **ມູນຄ່າຕາມບັນຊີສຸດທິ** | **709.109.081.833** | **374.676.104.439** | **2.966.299.160** | **30.528.445.794** | **2.912.843.318** | **51.106.439.223** | **1.171.299.214.767** |

ການເພີ່ມຂຶ້ນເປັນຈໍານວນ 47.864 ລ້ານກີບ ປະກອບມີ ລາຍການເຄື່ອນໄຫວເງິນສົດຈໍານວນ 45.475 ລ້ານກີບ ແລະ ການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ ຈໍານວນ 2,389 ລ້ານກີບ.

## 10. ຊັບສິນບັດຄືງທີ່ ທີ່ບໍ່ມີຕົວຕົນ, ສຸດທິ

| **ທ້າຍປີ ວັນທີ 31 ທັນວາ 2022** | **ກີບ** |
|---|---|
| ຍອດຍົກມາຕາມບັນຊີສຸດທິ | 41.679.842 |
| ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ | 18.338.770 |
| ການເພີ່ມຂຶ້ນ | 63.068.315 |
| ຄ່າຕັດຈ່າຍ | (6.694.689) |
| ຍອດເຫຼືອຕາມບັນຊີສຸດທິ | 116.392.238 |
| **ໃນວັນທີ 31 ທັນວາ 2022** | |
| ຕົ້ນທຶນ | 959.680.709 |
| ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ | 114.001.462 |
| <u>ຫັກ</u> ຄ່າຕັດຈ່າຍສະສົມ | (957.289.933) |
| ຍອດເຫຼືອຕາມບັນຊີສຸດທິ | 116.392.238 |

| **ທ້າຍປີ ວັນທີ 31 ທັນວາ 2023** | **ກີບ** |
|---|---|
| ຍອດຍົກມາຕາມບັນຊີສຸດທິ | 116.392.238 |
| ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ | 32.034.341 |
| ການເພີ່ມຂຶ້ນ | 216.925.978 |
| ການຕັດ ຄ່າຕັດຈ່າຍ | (276.619) |
| ມູນຄ່າຕາມບັນຊີສຸດທິ | 365.075.938 |
| **ໃນວັນທີ 31 ທັນວາ 2023** | |
| ຕົ້ນທຶນ | 1.176.606.687 |
| ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ | 146.035.803 |
| <u>ຫັກ</u> ຄ່າຕັດຈ່າຍສະສົມ | (957.566.552) |
| ຍອດເຫຼືອຕາມບັນຊີສຸດທິ | 365.075.938 |

## 11. ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

| | 2023<br>ກີບ | 2022<br>ກີບ |
|---|---|---|
| ໜີ້ຕ້ອງສົ່ງການຄ້າ– ບຸກຄົນທີສາມ | 53.248.165.530 | 40.199.324.412 |
| ໜີ້ຕ້ອງສົ່ງການຄ້າ– ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 22.2) | 11.399.309.064 | 10.877.529.142 |
| ໜີ້ຕ້ອງສົ່ງອື່ນ (i) | 918.228.306 | 668.194.675 |
| ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ | 65.565.702.900 | 51.745.048.229 |

(i) ໜີ້ຕ້ອງສົ່ງອື່ນ ສະແດງໜີ້ສິນຈາກການສົ່ງຄືນສິນຄ້າຈາກລູກຄ້າ.

## 12. ເງິນກູ້ຢືມ

| | 2023<br>ກີບ | 2022<br>ກີບ |
|---|---|---|
| **ໝູນວຽນ** | | |
| ເງິນເບີກເກີນບັນຊີ | - | 1.547.005.498 |
| ເງິນກູ້ຢືມໃນໄລຍະສັ້ນ | 54.694.740.214 | 83.387.334.853 |
| ສ່ວນທີ່ໝູນວຽນຂອງເງິນກູ້ຢືມໃນໄລຍະຍາວ | 26.353.809.980 | 20.671.002.986 |
| | 81.048.550.194 | 105.605.343.337 |
| **ບໍ່ໝູນວຽນ** | | |
| ເງິນກູ້ຢືມໃນໄລຍະຍາວ | 48.063.332.611 | 58.329.409.126 |
| ເງິນກູ້ຢືມ | 129.111.882.805 | 163.934.752.463 |

ອັດຕາດອກເບ້ຍຂອງເງິນກູ້ຢືມ ຂອງບໍລິສັດ ມີດັ່ງນີ້:

| | 2023<br>ກີບ | 2022<br>ກີບ |
|---|---|---|
| **ເງິນກູ້ຢືມ** | | |
| ອັດຕາດອກເບ້ຍຄົງທີ່ | 120.016.741.878 | 158.461.996.044 |
| ອັດຕາດອກເບ້ຍລອຍໂຕ | 9.095.140.927 | 5.472.756.419 |
| ເງິນກູ້ຢືມ | 129.111.882.805 | 163.934.752.463 |

i) ເງິນກູ້ຢືມໄລຍະສັ້ນ ຈາກທະນາຄານທຸລະກິດໃນ ສປປ ລາວ ເຊິ່ງມີອັດຕາດອກເບ້ຍຕໍ່າຈຳກັດ (LRL) ບວກອັດຕາເປີເຊັນ ເພີ່ມຕໍ່ປີ ຕ້ອງຊຳລະຄືນພາຍໃນ ຫ້າ ເດືອນຫລັງຈາກເບີກເງິນກູ້. ມີຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ, ສຳລັບໄລຍະປີ ສິ້ນສຸດວັນທີ 31 ທັນວາ 2023, ໄດ້ມີການເບີກຖອນ ຈຳນວນ 41,917 ລ້ານກີບ.

**12. ເງິນກູ້ຢືມ (ຕໍ່)**

ii) ເງິນກູ້ຢືມໄລຍະສັ້ນຈາກທະນາຄານທຸລະກິດໃນ ສປປ ລາວ ເຊິ່ງ ຈຳນວນໃນສັນຍາມູນຄ່າ 30 ຕື້ ກີບ ເຊິ່ງມີອັດຕາດອກເບ້ຍ 6,05% ຕໍ່ປີ. ຕົ້ນທຶນເງິນກູ້ແມ່ນຈະຖືກຊຳລະເປັນໄຕມາດ ແລະ ດອກເບ້ຍຊຳລະທຸກໆເດືອນ. ເງິນກູ້ຢືມນີ້ມີຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ. ສຳລັບປີສິ້ນສຸດວັນທີ 31 ທັນວາ 2023, ໄດ້ມີການເບີກຖອນ ຈຳນວນ 423.687 ລ້ານກີບ.

iii) ເງິນກູ້ຢືມໄລຍະສັ້ນຈາກທະນາຄານທຸລະກິດຕ່າງປະເທດ, ເຊິ່ງຈຳນວນໃນສັນຍາມູນຄ່າ 250 ລ້ານບາດ ໃນອັດຕາດອກເບ້ຍຄົງທີ່ 4%. ການຊຳລະຄືນແມ່ນພາຍໃນ 150 ວັນ ຫຼັງຈາກເບີກຖອນ ແລະ ດອກເບ້ຍຊຳລະທຸກໆເດືອນ. ມີຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ. ສຳລັບປີສິ້ນສຸດວັນທີ 31 ທັນວາ 2023, ໄດ້ມີການເບີກຖອນ ຈຳນວນ 67.425 ລ້ານກີບ.

iv) ເງິນກູ້ຢືມໄລຍະຍາວຈາກທະນາຄານທຸລະກິດໃນ ສປປ ລາວ ເຊິ່ງຈຳນວນໃນສັນຍາ 50 ລ້ານ ບາດ ເຊິ່ງມີອັດຕາດອກເບ້ຍ 5% ຕໍ່ປີ, ເຊິ່ງມີກຳນົດເຖິງເດືອນທັນວາ 2025. ເງິນຕົ້ນຊຳລະຄືນເປັນໄຕມາດເລີ່ມຈາກເດືອນມີຖຸນາ 2021 ແລະ ດອກເບ້ຍຊຳລະທຸກໆເດືອນ. ເງິນກູ້ຢືມນີ້ມີຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ. ກູ້ຢືມດັ່ງກ່າວແມ່ນໄດ້ເບີກຖອນໝົດແລ້ວໃນທ້າຍປີ 2022.

v) ເງິນກູ້ຢືມໄລຍະຍາວຈາກທະນາຄານທຸລະກິດໃນ ສປປ ລາວ ເຊິ່ງຈຳນວນໃນສັນຍາ 145 ລ້ານບາດ ດ້ວຍດອກເບ້ຍ 5% ຕໍ່ປີ, ເຊິ່ງມີກຳນົດໃນວັນທີ 31 ພຶດສະພາ 2027. ເງິນຕົ້ນຊຳລະຄືນເປັນໄຕມາດ ເລີ່ມແຕ່ວັນທີ 31 ສິງຫາ 2022 ແລະ ດອກເບ້ຍຊຳລະທຸກໆເດືອນ. ເງິນກູ້ຢືມນີ້ມີຫຼັກຊັບຄ້ຳປະກັນໂດຍທີ່ດິນຂອງຜູ້ຖືຮຸ້ນ. ກູ້ຢືມດັ່ງກ່າວແມ່ນໄດ້ເບີກຖອນໝົດແລ້ວໃນເດືອນກໍລະກົດ 2022.

ຄ່າທຳນຽມບໍລິການທາງການເງິນຕັດຈ່າຍ ແມ່ນຮັບຮູ້ເປັນລາຍຈ່າຍລ່ວງໜ້າເມື່ອເກີດຂຶ້ນ ແລະ ຕັດຈ່າຍໂດຍວິທີຕາມອາຍຸຂອງສັນຍາ.

**13. ເງິນກູ້ຢືມໄລຍະຍາວຈາກຮຸ້ນກູ້**

ໃນລະຫວ່າງປີ, ບໍລິສັດໄດ້ອອກຮຸ້ນກູ້ ໂດຍມີເງື່ອນໄຂສຳຄັນດັ່ງລຸ່ມນີ້:

| ຄຳອະທິບາຍ | ຂໍ້ມູນ |
|---|---|
| ປະເພດ | ຮຸ້ນກູ້ລະບຸຊື່ຜູ້ຖື ແບບບໍ່ດ້ອຍສິດ ແລະ ບໍ່ມີຫຼັກປະກັນ |
| ການຊຳລະ | ຊຳລະຄືນເງິນຕົ້ນເມື່ອຄົບກຳນົດ |
| ລາຄາສະເໜີຂາຍລວມ | 50.000ໂດລາ ສະຫະລັດ/ໜ່ວຍ,<br>ທັງໝົດ 3.000.000 ໂດລາ ສະຫະລັດ |
| ຈຳນວນໜ່ວຍທັງໝົດ | 60 ໜ່ວຍ |
| ອັດຕາດອກເບ້ຍ | 7,5% (ຄົງທີ່) ຕໍ່ປີ |
| ການຈ່າຍດອກເບ້ຍ | ທຸກໆ ຫົກ ເດືອນ (2ຄັ້ງ/ປີ) |
| ອາຍຸ | ສີ່ ປີ |
| ວັນຄົບກຳນົດອາຍຸການໄຖ່ຖອນ | 19 ພຶດສະພາ 2027 |

## 14. ໜີ້ຕ້ອງສົ່ງອາກອນກໍາໄລ

ການເຄື່ອນໄຫວຂອງ ໜີ້ຕ້ອງສົ່ງອາກອນກໍາໄລ ໃນປີ 2023 ມີດັ່ງຕໍ່ໄປນີ້:

| | ກີບ |
|---|---:|
| ວັນທີ 1 ມັງກອນ 2023 | 11.564.148.709 |
| ອາກອນກໍາໄລສໍາລັບປີ (ບົດອະທິບາຍ ຂໍ້ທີ 20) | 10.792.859.692 |
| ຊໍາລະໃນລະຫວ່າງປີ | (10.944.957.710) |
| ສ່ວນຕ່າງຈາກການແປງຄ່າອັດຕາແລກປ່ຽນ | 947.583.110 |
| ອາກອນກໍາໄລຕ້ອງສົ່ງໃນວັນທີ 31 ທັນວາ 2023 | 12.359.633.801 |

## 15. ເງິນມັດຈໍາຈາກລູກຄ້າ

ເງິນຝາກຈະຖືກຊໍາລະ ແລະ ສະສາງ ຕາມປົກກະຕິ ພາຍໃນ ໜຶ່ງເຖິງສອງ ເດືອນ ເມື່ອລູກຄ້າຍອມຮັບ ການຈັດສົ່ງສິນຄ້າ

## 16. ໜີ້ສິນໝູນວຽນອື່ນໆ

| | 2023<br>ກີບ | 2022<br>ກີບ |
|---|---:|---:|
| ລາຍຮັບລ່ວງໜ້າຈາກລູກຄ້າ | 5.916.626.711 | 5.812.926.314 |
| ໜີ້ສິນກ່ຽວກັບກິດຈະກໍາສົ່ງເສີມການຕະຫຼາດ | 3.831.960.000 | 4.065.268.799 |
| ໜີ້ສິນອື່ນໆ | 9.199.056.185 | 4.466.920.308 |
| ດອກເບ້ຍຕ້ອງສົ່ງຈາກຮຸ້ນກູ້ | 590.890.787 | - |
| ໜີ້ສິນໝູນວຽນອື່ນໆ | 19.538.533.683 | 14.345.115.421 |

## 17. ທຶນ

| | ຈໍານວນຮຸ້ນ<br>ຮຸ້ນ | ຮຸ້ນສາມັນ<br>ກີບ | ສ່ວນເກີນມູນຄ່າຮຸ້ນ<br>ກີບ | ລວມ<br>ກີບ |
|---|---:|---:|---:|---:|
| ວັນທີ 1 ມັງກອນ 2022 | 165.000.000 | 330.000.000.000 | 24.735.724.722 | 354.735.724.722 |
| ອອກຮຸ້ນ | - | - | - | - |
| ວັນທີ 31 ທັນວາ 2022 | 165.000.000 | 330.000.000.000 | 24.735.724.722 | 354.735.724.722 |
| ອອກຮຸ້ນ | - | - | - | - |
| ໃນວັນທີ 31 ທັນວາ 2023 | 165.000.000 | 330.000.000.000 | 24.735.724.722 | 354.735.724.722 |

ໃນວັນທີ 31 ທັນວາ 2023 ບໍລິສັດມີທຶນຈົດທະບຽນ ທີ່ມີຈໍານວນຮຸ້ນສາມັນ 165.000.000 ຮຸ້ນ ທີ່ມີມູນຄ່າຮຸ້ນລະ 2.000 ກີບ ເຊິ່ງຮຸ້ນດັ່ງກ່າວໄດ້ຊໍາລະເຕັມ.

## 18. ສຳຮອງ

### ເງິນສຳຮອງຕາມກົດໝາຍ

| | 2023<br>ກີບ | 2022<br>ກີບ |
|---|---|---|
| ວັນທີ 1 ມັງກອນ | 14.102.046.968 | 8.440.875.640 |
| ການເພີ່ມຂຶ້ນ | 6.079.923.598 | 5.661.171.328 |
| ວັນທີ 31 ທັນວາ | 20.181.970.566 | 14.102.046.968 |

ເງິນສຳຮອງຕາມກົດໝາຍ ຖືກສ້າງຂຶ້ນໂດຍສອດຄ່ອງກັບ ກົດໝາຍວິສາຫະກິດ ຂອງ ສປປ ລາວ, ເຊິ່ງຕ້ອງມີການຕັ້ງສຳຮອງຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີ ຕາມກົດໝາຍຈົນກວ່າທຶນສຳຮອງດັ່ງກ່າວຈະຮອດ 50% ຂອງທຶນຈົດທະບຽນ.

### ເງິນສຳຮອງອື່ນໆ

ນອກຈາກ ເງິນສຳຮອງຕາມກົດໝາຍ ບໍລິສັດໄດ້ຕັ້ງກຳນົດ 10% ສຳລັບເງິນສຳຮອງອື່ນໆ, ໂດຍເປັນໄປຕາມນະໂຍບາຍຂອງທາງບໍລິສັດ ທີ່ໄດຮັບການຈົດທະບຽນກັບ ກະຊວງການເງິນຂອງ ສປປ ລາວ ໃນວັນທີ 22 ກັນຍາ 2017. ເງິນສຳຮອງອື່ນໆ ແມ່ນກຳນົດໄວ້ໃຊ້ສຳລັບເຫດການທີ່ບໍ່ແນ່ນອນ ເຊັ່ນ: ໄພພິບັດທາງທຳມະຊາດ, ໂດຍທາງ ບໍລິສັດ ຈະໃຊ້ເງິນສຳຮອງດັ່ງກ່າວໃນການຟື້ນຟູເພື່ອໃຫ້ນຳມາໃຊ້ງານຕາມປົກກະຕິ.

## 19. ລາຍຈ່າຍຕາມລັກສະນະ

ລາຍຈ່າຍທີ່ສຳຄັນໄດ້ຈັດປະເພດຕາມລັກສະນະດັ່ງນີ້:

| | 2023<br>ກີບ | 2022<br>ກີບ |
|---|---|---|
| ຄ່າປ່ຽນແປງເຄື່ອງໃນສາງ | 579.837.168.125 | 483.995.177.348 |
| ເງິນເດືອນ ແລະ ແຮງງານ ແລະ ຜົນປະໂຫຍດອື່ນໆຂອງພະນັກງານ | 51.486.869.577 | 37.799.096.100 |
| ເງິນແຮສຳຮອງມູນຄ່າເຄື່ອງໃນສາງ | (1.968.627.461) | 1.507.680.606 |
| ຄ່າຫຼຸ້ຍຫ້ຽນ (ບົດອະທິບາຍ ຂໍ້ທີ 9-10) | 26.264.961.251 | 23.017.846.737 |
| ການສົ່ງເສີມການຂາຍ ແລະ ການດຳເນີນງານ | 2.555.054.588 | 2.379.328.674 |
| ຄ່າເຊົ່າ - ຫ້ອງການ ແລະ ຫ້ອງວາງສະແດງ | 15.080.131.037 | 11.699.614.268 |
| ຄ່ານ້ຳມັນເຊື້ອໄຟ | 3.868.046.582 | 3.713.277.140 |
| ຄ່າບຳລຸງຮັກສາ ແລະ ສ້ອມແປງ | 3.340.726.175 | 3.641.222.160 |
| ເຄື່ອງສາທາລະນຸປະໂພກ | 4.248.933.374 | 2.966.892.544 |
| ຄ່າຜູ້ຊ່ຽວຊານ | 4.303.060.390 | 2.886.659.559 |
| ຄ່າອື່ນໆ | 2.027.077.210 | 8.097.950.655 |
| | 691.043.400.848 | 581.704.745.791 |

## 20. ອາກອນກຳໄລ

ບໍລິສັດ ບໍ່ໄດ້ຮັບຮູ້ອາກອນກຳໄລ, ການຈ່າຍ ຫຼື ຮັບ ໃນອະນາຄົດສຳລັບຜົນແຕກຕ່າງຊົ່ວຄາວ. ອາກອນກຳໄລແມ່ນຮັບຮູ້ຕາມຜົນການດຳເນີນງານຂອງໄລຍະ ແລະ ອັດຕາອາກອນທີ່ກ່ຽວຂ້ອງ.

| | ກີບ |
|---|---:|
| *ການສົມທຽບລະຫວ່າງອາກອນກຳໄລ ແລະ ກຳໄລທາງບັນຊີ:* | |
| ກຳໄລທາງບັນຊີກ່ອນອາກອນ | 71.592.095.675 |
| ລາຍການທີ່ບໍ່ສາມາດຫັກ ແລະ ກັບລາຍການສຳລັບອາກອນ (1) | (17.627.797.033) |
| ກຳໄລທາງອາກອນກ່ອນອາກອນກຳໄລ | 53.964.298.642 |
| ຄິດໄລ່ອາກອນກຳໄລ ໃນອັດຕາອາກອນ 20 % | 10.792.859.692 |

(1) ລາຍການທີ່ບໍ່ສາມາດຫັກ ແລະ ກັບລາຍການ ສຳລັບອາກອນສ່ວນໃຫຍ່ປະກອບມີ ການກັບຄືນເງິນແຮສຳຮອງເຄື່ອງໃນສາງ, ກຳໄລ ຂາດທຶນທີ່ບໍ່ໄດ້ຮັບຮູ້ຈາກການປະເມີນຊັບສິນ, ໜີ້ສິນ ໃນສະກຸນເງິນຕາຕ່າງປະເທດໃນມື້ປິດບັນຊີ ແລະ ຄ່າຫຼຸ້ຍຫ້ຽນທີ່ຫັກເກີນອັດຕາ ຫຼື ອາຍຸການນຳໃຊ້ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາກອນລາຍໄດ້.

## 21. ເງິນປັນຜົນ

ຈາກກອງປະຊຸມສາມັນປະຈຳປີຜູ້ຖືຮຸ້ນ ໃນວັນທີ 7 ເມສາ 2023 ຜູ້ຖືຮຸ້ນໄດ້ຮັບຮອງເອົາມະຕິປະກາດຈ່າຍເງິນປັນຜົນ ຈາກລາຍຮັບຄົງເກັບທີ່ຍັງບໍ່ທັນເໝາະສົມພາຍຫຼັງຫັກເງິນແຮສຳຮອງຕາມກົດໝາຍ ແລະ ການຈັດສັນຄັງສຳຮອງອື່ນ ແລະ ຈາກກຳໄລສຸດທິແຕ່ວັນທີ 1 ມັງກອນ 2022 ຫາ 31 ທັນວາ 2022 ຈຳນວນ 100 ກີບຕໍ່ຮຸ້ນ ລວມມູນຄ່າທັງໝົດ 16.500 ລ້ານກີບ (ປີ 2021: 8.250 ລ້ານກີບ) ເງິນປັນຜົນໄດ້ຈ່າຍ ໃນເດືອນພຶດສະພາ 2023 ໃຫ້ຜູ້ຖືຮຸ້ນ.

## 22. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ສ່ວນບຸກຄົນທີ່ມີ ການຄວບຄຸມ ຫຼື ຖືກຄວບຄຸມ ຫຼື ຢູ່ພາຍໃຕ້ການຄວບຄຸມທົ່ວໄປ ໂດຍກົງ ຫຼື ໂດຍທາງອ້ອມຜ່ານໜຶ່ງ ຫຼື ຫຼາຍຊ່ອງທາງ ກັບບໍລິສັດ. ລວມທັງບໍລິສັດຖືຮຸ້ນ, ບໍລິສັດຍ່ອຍ ແລະ ບໍລິສັດອື່ນໆທີ່ກ່ຽວຂ້ອງກິດຈະການຂອງບໍລິສັດ , ສະມາຄົມ ແລະ ບຸກຄົນທີ່ເປັນເຈົ້າຂອງ ໂດຍກົງຫຼືທາງອ້ອມ. ມີສິດໃນການລົງຄະແນນສຽງຂອງບໍລິສັດທີ່ເຮັດໃຫ້ເຂົາເຈົ້າມີອິດທິພົນສຳຄັນໃນວິສາຫະກິດ. ຜູ້ບໍລິຫານ ລວມທັງຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງກັບບຸກຄົນເຫລົ່ານີ້ຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາສາຍສຳພັນ ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ບໍລິສັດ ຄຳນຶງເຖິງເນື້ອຫາຂອງ ສາຍສຳພັນ ແລະບໍ່ພຽງແຕ່ຮູບແບບທາງດ້ານກົດໝາຍ.

ບໍລິສັດ ໄດ້ຖືກບໍລິຫານໂດຍ ຄອບຄົວ ສຸຄະບັນດິດ ເຊິ່ງເປັນຜູ້ທີ່ຖືຮຸ້ນສ່ວນໃຫຍ່ ຂອງບໍລິສັດ. ຊຶ່ງຖືຮຸ້ນ 51% ຂອງຮຸ້ນ ບໍລິສັດ. ສ່ວນ 34% ຂອງຮຸ້ນ ບໍລິສັດ ແມ່ນຖືກຖືໂດຍ “Global house International Limited”. ຊຶ່ງເປັນ ບໍລິສັດ ທີ່ຈົດທະບຽນໃນປະເທດ ໄທ ແລະ ສ່ວນທີ່ເຫຼືອ 15% ແມ່ນຖືກຖືໂດຍບຸກຄົນທົ່ວໄປ.

## 22. ລາຍການເຄື່ອນໄຫວ ກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງໃນປີ ວັນທີ 31 ທັນວາ 2023 ທີ່ມີຄວາມສໍາຄັນ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

### 22.1 ລາຍຮັບ ແລະ ລາຍຈ່າຍ

| | 2023<br>ກີບ | 2022<br>ກີບ |
|---|---|---|
| ຊື້ສິນຄ້າ ຈາກພາກສ່ວນທີ່ກ່ຽວຂ້ອງ | 149.184.243.188 | 118.292.444.214 |
| ລາຍຈ່າຍຄ່າເຊົ່າ | 17.268.602.422 | 13.604.490.242 |

ລາຍຈ່າຍໃນການເຊົ່າ ແມ່ນ ຄ່າເຊົ່າທີ່ດິນ ແລະ ສິ່ງປຸກສ້າງ ຈາກຜູ້ຖືຮຸ້ນຫຼັກ ເພື່ອໃນການດໍາເນີນງານ ໂດຍຄ່າເຊົ່າແມ່ນຂຶ້ນຢູ່ກັບການຕົກລົງທັງສອງຝ່າຍ ໂດຍອ້າງອີງຈາກລາຄາຕາມທ້ອງຕະຫຼາດ.

### 22.2 ຍອດຍັງເຫຼືອກັບພາກສ່ວນທີ່ກ່ຽວຂ້ອງກັນ

| | 2023<br>ກີບ | 2022<br>ກີບ |
|---|---|---|
| ລ່ວງໜ້າຄ່າເຊົ່າ – ພາກສ່ວນທີ່ກ່ຽວຂ້ອງ | 36.561.604.277 | 33.760.220.765 |
| ໜີ້ຕ້ອງສົ່ງການຄ້າ – ພາກສ່ວນທີ່ກ່ຽວຂ້ອງ | 11.399.309.064 | 10.877.529.142 |

### 22.3 ຜົນປະໂຫຍດທີ່ຈ່າຍໃຫ້ແກ່ຜູ້ບໍລິຫານ

ຜູ້ບໍລິຫານຫຼັກລວມເຖິງຜູ້ອໍານວຍການ. ເງິນຊົດເຊີຍທີ່ຈ່າຍໃຫ້ກັບຜູ້ບໍລິຫານສໍາລັບການ ບໍລິການການຈ້າງງານແມ່ນດັ່ງຕໍ່ໄປນີ້:

| | 2023<br>ກີບ | 2022<br>ກີບ |
|---|---|---|
| ເງິນເດືອນ | 5.107.732.882 | 2.978.805.616 |

## 23. ພັນທະ ແລະ ຂໍ້ຕົກລົງທີ່ເປັນສາລະສຳຄັນ

### 23.1 ພັນທະຄ່າເຊົ່າໃນການດຳເນີນງານ. ເຊິ່ງບໍລິສັດເປັນຜູ້ເຊົ່າ

ບໍລິສັດ ເຊົ່າທີ່ດິນ ແລະ ຫ້ອງການພາຍໃຕ້ສັນຍາທີ່ບໍ່ສາມາດຍົກເລີກໄດ້ ຈາກຜູ້ຖືຮຸ້ນ. ໄລຍະການໃຫ້ເຊົ່າແມ່ນ ຫ້າປີ. ແລະ ສັນຍາເຊົ່າສ່ວນໃຫຍ່ນີ້ແມ່ນສາມາດຕໍ່ເມື່ອສັນຍາເກົ່າໝົດອາຍຸໃນອັດຕາທີ່ຕົກລົງກັນໃໝ່.

| | 2023<br>ກີບ | 2022<br>ກີບ |
|---|---|---|
| ໜ້ອຍກວ່າ 1 ປີ | - | 6.994.972.670 |
| 1 ຫາ 5 ປີ | 30.300.203.016 | 34.309.820.146 |
| ລວມ | 30.300.203.016 | 41.304.792.816 |

### 23.2 ໜັງສືສັນຍາໃຊ້ໜີ້ ແລະ ຄ້ຳປະກັນ

ໃນວັນທີ 31 ທັນວາ 2023, ບໍລິສັດໄດ້ມີໜັງສືສັນຍາໃຊ້ໜີ້ ແລະ ຄ້ຳປະກັນ ທີ່ອອກໃຫ້ໂດຍທະນາຄານໃນນາມບໍລິສັດ ເພື່ອໃຊ້ເຂົ້າໃນການນຳເຂົ້າສິນຄ້າຈາກຜູ້ສະໜອງທີ່ຢູ່ໃນຕ່າງປະເທດ ໂດຍມີຍອດລວມສັນຍາສຸດທີ 29 ລ້ານບາດ.

## 24. ເຫດການທີ່ຈະເກີດຂຶ້ນຫລັງໄລຍະການລາຍງານ

ອີງຕາມບົດບັນທຶກມະຕິກອງປະຊຸມສະພາບໍລິຫານ ເລກທີ 2398/ສອບ, ທີ່ໄດ້ຈັດຕັ້ງຂຶ້ນໃນວັນທີ 13 ກຸມພາ 2024, ເງິນປັນຜົນຈາກຜົນການດຳເນີນງານຂອງທຸລະກິດຂອງບໍລິສັດ ປະຈຳປີ 2023 ໄດ້ຖືກອະນຸມັດ ໃນອັດຕາ 120 ກີບຕໍ່ຮຸ້ນ ເປັນຈຳນວນທັງໝົດ 19.800 ລ້ານກີບ ແລະ ຄາດການວັນຊຳລະໃນມື້ວັນທີ 6 ພຶດສະພາ 2024.

## 5. ເສັ້ນສະແດງແນວໂນ້ມຜົນການດຳເນີນງານ ແລະ ສະຖານະການເງິນ ໃນຊ່ວງ 5ປີ ຍ້ອນຫຼັງ ຂອງບໍລິສັດ

- **ລາຍຮັບຍ້ອນຫຼັງ 5ປີ**

ຫົວໜ່ວຍ: ລ້ານກີບ




- **ລາຍຈ່າຍທຽບລາຍຮັບຍ້ອນຫຼັງ 5ປີ**

ຫົວໜ່ວຍ: ລ້ານກີບ




- ກຳໄລສຸດທິທຽບລາຍຮັບ ຍ້ອນຫຼັງ 5ປີ

ຫົວໜ່ວຍ: ລ້ານກີບ



- **ຊັບສິນຍ້ອນຫຼັງ 5ປີ**

ຫົວໜ່ວຍ: ລ້ານກີບ




- **ໜີ້ສິນລວມຍ້ອນຫຼັງ 5ປີ**

ຫົວໜ່ວຍ: ລ້ານກີບ




## 6. ວຽກງານດ້ານການຕະຫຼາດ ປີ2023

### 6.1. ຍຸດທະສາດດ້ານຜະລິດຕະພັນ (Product):

- ໄດ້ມີການຈັດສັນສິນຄ້າໃຫ້ເປັນໝວດໝູ່ ທີ່ຖືກຕ້ອງ ແລະ ກຳນົດຈຸດຢືນ ຂອງສິນຄ້າແຕ່ລະໂຕ ຢ່າງຊັດເຈນ ເພື່ອກຳນົດແນວທາງ ປະຕິບັດໃຫ້ມີປະສິດຕິພາບ;

### 6.2. ຍຸດທະສາດດ້ານຊ່ອງທາງການຈັດຈຳໜ່າຍ (Place)

- ໃນປີ 2023 ທີ່ຜ່ານມາ ສຸວັນນີ ໂຮມເຊັນເຕີ ໄດ້ສືບຕໍ່ສ້າງຄວາມສາຍສຳພັນທີ່ດີ ກັບກຸ່ມລູກຄ້າ ໃນຊ່ອງທາງຕ່າງໆ ບໍ່ວ່າຈະເປັນລູກຄ້າໜ້າຮ້ານ, ຮ້ານຄ້າຊ່ວງ, ໂຄງການ ແລະ ຊ່າງ ໂດຍຜ່ານ ໂປຣໂມຊັນຫຼາກຫຼາຍ;

- ໄດ້ພັດທະນາເວັບໄຊ ແລະ Mobile Application ຂາຍອອນລາຍ ເພື່ອໃຫ້ລູກຄ້າເລືອກຊື້ສິນຄ້າໄດ້ສະດວກສະບາຍ ໂດຍບໍ່ຈຳເປັນຕ້ອງມາຫ້ອງຂາຍ ພ້ອມກັນນັ້ນ ກໍ່ເປັນການຂະຫຍາຍຂອບເຂດການຂາຍໃຫ້ກວ້າງຂວາງຂຶ້ນ ໂດຍສຳເລັດໄປແລ້ວ 80% ແລະ ຄາດວ່າຈະເປີດໃຫ້ໃຊ້ບໍລິການໄວໆນີ້ ໃນປີ 2024;

www.souvanny.la




Souvanny (Retail) App




## 6.3. ຍຸດທະສາດການສົ່ງເສີມການຕະຫຼາດ (Promotion)

### 6.3.1. ການໂຄສະນາ:

ພວກເຮົາໄດ້ເຮັດໂຄສະນາຫຼາຍຊ່ອງທາງ ເພື່ອສ້າງຄວາມຮັບຮູ້ ແລະ ສ້າງຄວາມຕ້ອງການສິນຄ້າ ໂດຍຜ່ານ ໝວດສິນຄ້າສະເພາະເຈາະຈົງ ທີ່ເປັນຈຸດແຂງ ຂອງອົງກອນ ໂດຍຜ່ານຊ່ອງທາງສື່ສານຕ່າງໆເຊັ່ນ:

- ຜ່ານສື່ສິ່ງພິມ ເປັນຕົ້ນແມ່ນໃບປິວ ເພື່ອປະຊາສຳພັນໂປຣໂມຊັນເປັນຫຼັກ;
- ຜ່ານປ້າຍໂຄສະນາ: ໂດຍສະເພາະປ້າຍແຄມທາງໃຫຍ່ ທີ່ເປັນເສັ້ນທາງຫຼັກ ຂອງແຕ່ລະແຂວງ ແລະ ປ້າຍຕ່າງໆໜ້າສາຂາ ເພື່ອເນັ້ນການສ້າງຄວາມຮັບຮູ້ຍີ່ຫໍ້ສິນຄ້າ ແລະ ສຸວັນນີຢ່າງຕໍ່ເນື່ອງ;
- ຜ່ານສື່ວິທະຍຸທ້ອງຖິ່ນເຊັ່ນ: ວິທະຍຸແຂວງບໍລິຄຳໄຊ, ຄຳມ່ວນ, ຈຳປາສັກ ແລະ ສະຫວັນນະເຂດ;

- ຜ່ານ Digital Marketing ເຊັ່ນ: Website, Facebook, Instagram, Youtube, Tiktok ແລະ ອື່ນໆ.

ປ້າຍແຄມທາງໃຫຍ່



ໃບປິວ



ໂພດອອນລາຍ



### 6.3.2. ການສົ່ງເສີມການຂາຍ

ພວກເຮົາໄດ້ເຮັດ ກິດຈະກຳສົ່ງເສີມການຂາຍຫຼາຍຮູບແບບ ບໍ່ວ່າຈະເປັນການສົ່ງເສີມການຂາຍໂດຍມຸ້ງເນັ້ນລູກຄ້າ, ພະນັກງານຂາຍ ແລະ ຜ່ານພໍ່ຄ້າຄົນກາງເຊັ່ນ:

- **Souvanny Club** ສະໝັກສະມາຊິກ ສະສົມຄະແນນ ແລກຂອງລາງວັນ ເພື່ອເປີດໂອກາດໃຫ້ລູກຄ້າ ມີເວລາສະສົມຍອດຊື້ ກໍ່ຄືຈຳນວນແຕ້ມຕະຫຼອດປີ ແລະ ສາມາດແລກຂອງລາງວັນໄດ້ທຸກເວລາ











- ໂປຣຊື້ຄົບຮັບເລີຍ ໂດຍບໍ່ຕ້ອງລຸ້ນ ເພື່ອສ້າງຄວາມປະທັບໃຈໃຫ້ລູກຄ້າ ທີ່ຊື້ຫຼາຍຍິ່ງໄດ້ຂອງລາງວັນຫຼາຍ;









- ໂປຣຊິງໂຊກຄົບຮອບ ສຸວັນນີ 35 ປີ ເພື່ອຄືນກຳໄລໃຫ້ກັບລູກຄ້າ ເຊິ່ງເລີ່ມແຕ່ເດືອນ 3-12 ປີ 2023 ແຈກລົດໃຫຍ່ ມາດດາ2 ຊີດານ ຈຳນວນ 2 ຄັນ ແລະ ລາງວັນອື່ນໆ ລວມມູນຄ່າຫຼາຍກ່ວາ 1.500 ລ້ານ ແລະ ຫຼາຍກ່ວາ 600 ລາງວັນ;






## 7. ວຽກງານດ້ານບຸກຄະລາກອນ ປີ 2023

- ໃນປີ 2023 ບໍລິສັດໄດ້ມີການປັບຕຳແໜ່ງ ແລະ ເລື່ອນຕຳແໜ່ງໃຫ້ພະນັກງານໃນລະດັບທົ່ວໄປ ທີ່ກ້າວຂຶ້ນມາເປັນພະນັກງານລະດັບຜູ້ຈັດການພະແນກຫຼາຍຕຳແໜ່ງ ສຳລັບຜູ້ທີ່ມີການປະຕິບັດວຽກດີ, ມີຄວາມຫ້າວຫັນ ແລະ ພັດທະນາຕົນເອງຕະຫຼອດເວລາ;
- ໄດ້ສົ່ງເສີມໃຫ້ພະນັກງານໃນແຕ່ລະດັບໃຫ້ມີຄວາມຮູ້ຄວາມສາມາດ ໂດຍການຈັດໃຫ້ມີການສຳມະນາ ທັງພາຍໃນ ແລະ ພາຍນອກຢ່າງເປັນປະຈຳຕໍ່ເນື່ອງ ໃນດ້ານຄວາມຮູ້ທາງດ້ານສິນຄ້າ, ການບໍລິການ, ເທັກນິກການຂາຍ ລວມເຖິງດ້ານອື່ນໆ ທີ່ເຫັນວ່າຈຳເປັນສຳລັບພະນັກງານ ແລະ ສຳລັບພະນັກງານລະດັບຜູ້ຈັດການແມ່ນໄດ້ມີການພັດທະນາຄວາມຮູ້ທາງດ້ານ ພາວະຜູ້ນຳ, ດ້ານການຈັດການຂັ້ນສູງ ແລະ ດ້ານອື່ນໆ ທີ່ເຫັນວ່າເໝາະສົມ.





**ອັດຕາການສະເລ່ຍອາຍຸຂອງພະນັກງານພາຍໃນອົງກອນ**



# IV. ຂໍ້ມູນກ່ຽວກັບຫຼັກຊັບ ແລະ ຜູ້ຖືຮຸ້ນ 2023

## 1. ທຶນຈົດທະບຽນ

ບໍລິສັດມີທຶນຈົດທະບຽນທັງໝົດ ນະວັນທີ 31 ທັນວາ 2023 ແມ່ນ 330.000.000.000 ກີບ ເປັນຮຸ້ນສາມັນຈຳນວນ 165.000.000ຮຸ້ນ ມີມູນຄ່າໃນໃບຮຸ້ນລະ 2.000 ກີບ

## 2. ຜູ້ຖືຮຸ້ນ 5 ສ່ວນຮ້ອຍຂຶ້ນໄປ

ລາຍຊື່ຜູ້ຖືຮຸ້ນລາຍໃຫຍ່ ຂອງບໍລິສັດ ທີ່ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປໄດ້ແກ່: ຄອບຄົວສຸຄະບັນດິດ ຈຳນວນຮຸ້ນທີ່ຖືຄອງແມ່ນ 80.893.600 ຮຸ້ນ (51%) ແລະ ບໍລິສັດ ໂກບອນເຮົ້າ ອິນເຕີເນຊັນແນວ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 56.000.000 ຮຸ້ນ (33,94%)

# V. ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວຂອງສະພາບໍລິຫານ

## 1. ໂຄງຮ່າງການຈັດຕັ້ງພາຍໃນ ຂອງບໍລິສັດ



## 2. ຄະນະສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ 2023



**ທ່ານ ສົມຈິດ ອິນທະມິດ**
ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ, ປະທານຄະນະກຳມະການຄັດເລືອກ ແລະ ຄຸ້ມຄອງຄວາມສ່ຽງ

**ທ່ານ ຮສ. ປອ ໄຊພອນ ກອງມະນີລາ**
ຮອງປະທານສະພາບໍລິຫານ,
ສະມາຊິກອິດສະຫຼະ ແລະ ປະທານຄະນະກຳມະການກວດສອບ





**ທ່ານ ວັດດານາ ສຸຄະບັນດິດ**
ສະມາຊິກສະພາບໍລິຫານ,
ຜູ້ອຳນວຍການໃຫຍ່

**ທ່ານ ບຸນເຕີມ ກົມມິດຕະພາບ**
ສະມາຊິກສະພາບໍລິຫານ,
ສະມາຊິກອິດສະຫຼະ ແລະ ປະທານຄະນະກຳມະການກຳນົດຄ່າຕອບແທນ





**ທ່ານ ພັນໂນລາ ສຸຄະບັນດິດ**
ສະມາຊິກສະພາບໍລິຫານ,
ຮອງຜູ້ອຳນວຍການໃຫຍ່ ແລະ ຜູ້ອຳນວຍການຝ່າຍການເງິນ

**ທ່ານ ນາງ ຄຳໄຂ ລໍວັນໄຊ**
ສະມາຊິກສະພາບໍລິຫານ,
ຜູ້ຈັດການຝ່າຍຈັດຊື້





**ທ່ານ ກິດສະດາ ສຸຄະບັນດິດ**
ສະມາຊິກສະພາບໍລິຫານ,
ຮອງຜູ້ອຳນວຍການໃຫຍ່ ແລະ ຜູ້ອຳນວຍການຝ່າຍປະຕິບັດ

**ທ່ານ ນາງ ສຸຕິການ ສີແສງຈັນ**
ສະມາຊິກສະພາບໍລິຫານ





**ທ່ານ ພິພັບ ວາດສະໜາອາຊາສະກຸນ**
ສະມາຊິກສະພາບໍລິຫານ

## 3. ຊີວະປະຫວັດໂດຍຫຍໍ້ ຂອງຄະນະສະພາບໍລິຫານ

### 3.1. ທ່ານ ສົມຈິດ ອິນທະມິດ



- ສັນຊາດ : ລາວ
- ວັນເດືອນປີເກີດ : 13 ມີນາ 1960
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານຈອມມະນີ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ
- **ຕຳແໜ່ງ** : ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ, ປະທານກຳມະການຄັດເລືອກ ແລະ ຄຸ້ມຄອງຄວາມສ່ຽງ

➢ **ວຸດທິການສຶກສາ**

ປະລິນຍາໂທ ດ້ານ ເສດຖະສາດ ພັດທະນາ, ມະຫາວິທະຍາໄລ ມາກຕິນລຸເທີຣານເລ ວິດເຕີນແບກ, ປະເທດເຢຍລະມັນ ປີ 1985

➢ **ປະຫວັດການເຮັດວຽກ**

- ວິຊາການ ສະຖານທູດລາວທີ່ນະຄອນຫຼວງເບີລິນ ປີ 1985-1986
- ວິຊາການ ພະແນກການວາງແຜນກະສິກຳ. ຄະນະກະມະການການວາງແຜນແຫ່ງລັດ ປີ 1987-1988
- ຜູ້ຊ່ວຍຮອງລັດຖະມົນຕີ ກະຊວງການຄ້າ ແລະ ການພົວພັນເສດຖະກິດຕ່າງປະເທດ ປີ 1989-1990
- ຮອງຫົວໜ້າກົມ ກົມຮ່ວມມືເສດຖະກິດ. ກະຊວງການຄ້າ ແລະ ພົວພັນເສດຖະກິດຕ່າງປະເທດ ປີ 1990-1993
- ຮອງຫົວໜ້າກົມ ກົມຮ່ວມມືເສດຖະກິດຕ່າງປະເທດ. ຄະນະກຳມະການແຜນການ ແລະ ການຮ່ວມມື ປີ 1994-1996
- ຫົວໜ້າກົມ ກົມຮ່ວມມືເສດຖະກິດອາຊຽນ ປີ 1996-1999
- ຄະນະ ເປັນເຈົ້າໜ້າທີ່ອາວຸໂສດ້ານເສດຖະກິດຂອງ ສປປ ລາວ ປະຈຳອາຊຽນ(SOM) ປີ 1997-2005
- ຄະນະ ຄະນະເຈລະຈາກັບອົງການການຄ້າໂລກ ປີ 2004
- ຫົວໜ້າກົມ ກົມເສດຖະກິດ. ກະຊວງການຕ່າງປະເທດ ປີ 1999-2007
- ຫົວໜ້າກົມ ກົມຮ່ວມມືສາກົນ. ກະຊວງແຜນການ ແລະ ການລົງທຶນ ປີ 2008-2011
- ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ປີ 2011-2014
- ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ປີ 2014-2021
- ຮອງຫົວໜ້າຄະນະ ຄະນະກຳມະການດ້ານເສດຖະກິດ-ການເງິນສະເພາະທິດສະດີສູນກາງພັກ ວັນທີ 25 ມັງກອນ 2022- ເຖິງປະຈຸບັນ

### 3.2. ທ່ານ ຣສ. ປອ ໄຊພອນ ກອງມະນີລາ



- ສັນຊາດ : ລາວ
- ວັນເດືອນປີເກີດ : 30 ທັນວາ 1973
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານນາສ້ຽວ, ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ
- **ຕຳແໜ່ງ** : ຮອງປະທານສະພາບໍລິຫານ, ສະມາຊິກອິດສະຫຼະ ແລະ ປະທານ ຄະນະກຳມະການກວດສອບ

➢ **ວຸດທິການສຶກສາ**

ປະລິນຍາເອກບໍລິຫານທຸລະກິດ ມະຫາວິທະຍາໄລ ຮີໂຣຊິມ່າ, ປະເທດຍີ່ປຸ່ນ ປີ 2009

➢ **ປະຫວັດການເຮັດວຽກ**

- ວິຊາການ ບໍລິສັດ ລາວໂທລະຄົມ ປີ 1995-1997;
- ຜູ້ກວດສອບພາຍໃນ ບໍລິສັດ ໄຮຄີ ແຄຄອນ ຈຳກັດ ປີ2000-2011;
- ຫົວໜ້າພະແນການຕະຫລາດ ແລະ ປະຕິບັດການ ບໍລິສັດຄ້ຳຮຸ່ງໂຮດລາວ ປີ 2011;
- ອາຈານສອນ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ ປີ 2002-2020
- ຮອງຫົວໜ້າພາກວິຊາການບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ ປີ 2011-2017;
- ຫົວໜ້າພາກວິຊາການບັນຊີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະ ຍາໄລແຫ່ງຊາດ ປີ 2017-ປະຈຸບັນ.

## 3.3. ທ່ານ ວັດດານາ ສຸຄະບັນດິດ



- ສັນຊາດ : ລາວ
- ວັນເດືອນປີເກີດ : 28 ຕຸລາ 1966
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານວຽງຈະເລີນ, ເມືອງໄຊເສກຖາ ນະຄອນຫຼວງວຽງຈັນ
- **ຕຳແໜ່ງ** : ສະມາຊິກສະພາບໍລິຫານ, ຜູ້ອຳນວຍການໃຫຍ່

➢ **ວຸດທິການສຶກສາ**

ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລມະຫາສາຣະຄາມ ປະເທດໄທ ປີ 2002

➢ **ປະຫວັດການເຮັດວຽກ**

- ຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນປີ 1988-ປະຈຸບັນ

## 3.4. ທ່ານ ບຸນເຕີມ ກິມມິດຕະພາບ



- ສັນຊາດ : ລາວ
- ວັນເດືອນປີເກີດ : 03 ມີນາ 1955
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານໂພນສະອາດ, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ, ປະທານຄະນະກຳມະການກຳນົດຄ່າຕອບແທນ

➢ **ວຸດທິການສຶກສາ**

ປະລິນຍາຕີ ດ້ານກົດໝາຍຍຸຕິທຳ ຈາກ ຄະນະນິຕິສາດ-ລັດຖະສາດມະຫາວິທະຍາໄລແຫ່ງຊາດລາວ ປີ2011

➢ **ປະຫວັດການເຮັດວຽກ**

- ຮັບຜິດຊອບວຽກງານບໍລິຫານກະຊວງຍຸຕິທຳ ປີ1982-1994
- ຮັບຜິດຊອບວຽກງານການເງິນທີ່ຄະນະນິຕິສາດລັດຖະສາດ ປີ1994-1997
- ຫົວໜ້າພະແນກສັງລວມ-ກວດກາ ປີ 1999
- ຜູ້ພິພາກສາຫົວໜ້າຄະນະສານ ປີ 1997-2015

## 3.5. ທ່ານ ພັນໂນລາ ສຸຄະບັນດິດ



- ສັນຊາດ : ລາວ
- ວັນເດືອນປີເກີດ : 22 ກັນຍາ 1969
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານໂພນສະຫວັນເໜືອ ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍການຝ່າຍການເງິນ

➢ **ວຸດທິການສຶກສາ**

ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລມະຫາສາຣະຄາມ ປະເທດໄທ ປີ 2002

➢ **ປະຫວັດການເຮັດວຽກ**

- ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 1988-ປະຈຸບັນ

## 3.6. ທ່ານ ກິດສະດາ ສຸຄະບັນດິດ



- ສັນຊາດ : ລາວ
- ວັນເດືອນປີເກີດ : 04 ມັງກອນ 1972
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານໜອງໜ່ຽງ, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ
- ຕຳແໜ່ງ : ສະມາຊິກສະພາບໍລິຫານ, ຮອງຜູ້ອຳນວຍການໃຫຍ່, ຜູ້ອຳນວຍຝ່າຍປະຕິບັດການ

➢ **ວຸດທິການສຶກສາ**

ປະລິນຍາໂທ ບໍລິຫານທຸລະກິດ ມະຫາວິທະຍາໄລຂອນແກ່ນ, ປະເທດໄທ ປີ 2007

➢ **ປະຫວັດການເຮັດວຽກ**

- ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2000-ປະຈຸບັນ

## 3.7. ທ່ານ ນາງ ຄໍາໄຂ ລໍວັນໄຊ



- ສັນຊາດ : ລາວ
- ວັນເດືອນປີເກີດ : 21 ສິງຫາ 1978
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ບ້ານນາແຄຄໍາ, ເມືອງໄຊທານີ ນະຄອນຫຼວງວຽງຈັນ
- ຕໍາແໜ່ງ : ສະມາຊິກສະພາບໍລິຫານ ແລະ ຜູ້ຈັດການຈັດຊື້

➢ **ວຸດທິການສຶກສາ**

ປະລິຍາຕີບໍລິຫານທຸະລກິດ ວິທະຍາໄລ ເສດຖາບໍລິຫານທຸລະກິດ ປະເທດລາວ ປີ 2010

➢ **ປະຫວັດການເຮັດວຽກ**

- ພະນັກງາຂາຍ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2000-2005
- ຫົວໜ້າຝ່າຍຂາຍ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ປີ 2005-2015
- ຜູ້ຈັດການຝ່າຍຈັດຊື້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນປີ 2015-ເຖິງປະຈຸບັນ

## 3.8. ທ່ານ ນາງ ຊຸຕິການ ສີແສງຈັນ



- ສັນຊາດ : ໄທ
- ວັນເດືອນປີເກີດ : 25 ເມສາ 1969
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ແຂວງ ຂອນແກ່ນ, ປະເທດໄທ
- ຕໍາແໜ່ງ : ສະມາຊິກສະພາບໍລິຫານ

➢ **ວຸດທິການສຶກສາ**

ປະລິນຍາໂທ ບໍລິຫານທຸລະກິດມະຫາບັນດິດ ມະຫາວິທະຍາໄລ ຂອນແກ່ນ, ປະເທດໄທ ປີ 2001

➢ **ປະຫວັດການເຮັດວຽກ**

- ກໍາມະການບໍລິສັດ Siam Global House PCL ປີ 2008-2012
- ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍບັນຊີ ແລະ ການເງິນ Siam Global House PCL ປີ 2012- ປະຈຸບັນ

## 3.9. ທ່ານ ພິພົບ ວາດສະໜາອາຊາສະກຸນ



- ສັນຊາດ : ລາວ
- ວັນເດືອນປີເກີດ : 21 ພຶດສະພາ 1970
- ສາສະໜາ : ພຸດ
- ທີ່ຢູ່ປະຈຸບັນ : ກຸງເທບ, ປະເທດໄທ
- **ຕຳແໜ່ງ : ສະມາຊິກສະພາບໍລິຫານ**

➢ **ວຸດທິການສຶກສາ**

ປະລິນຍາຕີ ມະນຸດສາດ ມະຫາວິທະຍາໄລກະເສດສາດ, ປະເທດໄທ ປີ 1993

➢ **ປະຫວັດການເຮັດວຽກ**

- ຜູ້ຊ່ວຍຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍພັດທະນາທຸລະກິດ Siam Global House PCL ປີ 2014-2017
- ຮອງປະທານເຈົ້າໜ້າທີ່ບໍລິຫານຝ່າຍພັດທະນາທຸລະກິດ Siam Global House PCL ປີ 2017-ປະຈຸບັນ
- ຄະນະກຳມະການ ບໍລິສັດ ພີທີ ຄາທູກາດ້າ ເດໂປ້ ບັນກູນັນ ທີບີເຄ (ປະເທດ ອິນໂດເນເຊຍ) ປີ 2022-ປະຈຸບັນ

## 4. ຄະນະຜູ້ອຳນວຍການ ຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ




**ທ່ານ ວັດດານາ ສຸຄະບັນດິດ**
ຜູ້ອຳນວຍການໃຫຍ່




**ທ່ານ ພັນໂນລາ ສຸຄະບັນດິດ**
ຮອງຜູ້ອຳນວຍການໃຫຍ່/
ຜູ້ອຳນວຍການຝ່າຍການເງິນ.




**ທ່ານ ກິດສະດາ ສຸຄະບັນດິດ**
ຮອງຜູ້ອຳນວຍການໃຫຍ່/
ຜູ້ອຳນວຍການຝ່າຍປະຕິບັດການ.

## 5. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2023

### 5.1. ການຈັດກອງປະຊຸມ

- ສະພາບໍລິຫານ ໄດ້ມີການຈັດກອງປະຊຸມສະພາບໍລິຫານຈຳນວນ 4 ຄັ້ງ
- ຄະນະກຳມະການກວດສອບ ໄດ້ມີການຈັດກອງປະຊຸມ ຈຳນວນ 4 ຄັ້ງ
- ຄະນະກຳມະການກຳນົດຄ່າຕອບແທນ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ
- ຄະນະກຳມະການຄັດເລືອກ ໄດ້ມີການຈັດກອງປະຊຸມ ຈຳນວນ 2 ຄັ້ງ

### 5.2. ການເຂົ້າຮ່ວມກອງປະຊຸມ ຂອງສະມາຊິກສະພາບໍລິຫານ

| ລ/ດ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ຈຳນວນຄັ້ງເຂົ້າຮ່ວມກອງປະຊຸມ | | | | | |
|---|---|---|---|---|---|---|---|---|
| | | | ກອງປະຊຸມຜູ້ຖືຮຸ້ນ | ກອງປະຊຸມສະພາບໍລິຫານ | ກອງປະຊຸມຄະນະກຳມະການກວດສອບ | ກອງປະຊຸມຄະນະກຳມະການຄັດເລືອກ | ກອງປະຊຸມຄະນະກຳມະການຄຸ້ມຄອງຄວາມສ່ຽງ | ກອງປະຊຸມຄະນະກຳມະການກຳນົດຄ່າຕອບແທນ |
| 1 | ທ່ານ ສົມຈິດ ອິນທະມິດ | ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ | 1 | 4 | | 2 | 2 | 1 |
| 2 | ທ່ານຣສ ປອ ໄຊພອນ ກອງມະນີລາ | ຮອງປະທານສະພາບໍລິຫານ,ສະມາຊິກອິດສະຫຼະ | 1 | 4 | 4 | | | |
| 3 | ທ່ານ ວັດດານາ ສຸຄະບັນດິດ | ສະມາຊິກສະພາບລິຫານ ,ຜູ້ອຳນວຍການໃຫຍ່ (CEO) | 1 | 4 | 2 | 2 | 2 | 2 |
| 4 | ທ່ານ ສອນສະຫວັນ ແສງອະໄພ | ສະມາຊິກສະພາບໍລິຫານ ,ສະມາຊິກອິດສະຫຼະ | | 2 | | | | |
| 5 | ທ່ານ ພັນໂນລາ ສຸຄະບັນດິດ | ສະມາຊິກສະພາບໍລິຫານ ,ຮອງຜູ້ອຳນວຍການໃຫຍ່,ຜູ້ອຳນວຍການໃຫຍ່ຝ່າຍການເງິນ (CFO) | 1 | 4 | 2 | 2 | 2 | 2 |
| 6 | ທ່ານ ກິດສະດາ ສຸຄະບັນດິດ | ສະມາຊິກສະພາບໍລິຫານ ,ຮອງຜູ້ອຳນວຍການໃຫຍ່,ຜູ້ອຳນວຍການຝ່າຍປະຕິບັດການ (COO) | 1 | 3 | 3 | 2 | 2 | 2 |
| 7 | ທ່ານ ນາງ ຄຳໄຂ ລໍວັນໄຊ | ສະມາຊິກສະພາບໍລິຫານ ,ຜູ້ຈັດການຝ່າຍຈັດຊື້ | 1 | 4 | | | | |
| 8 | ທ່ານ ນາງ ຊຸຕິການ ສີແສງຈັນ | ສະມາຊິກສະພາບໍລິຫານ | 1 | 4 | | | | |
| 9 | ທ່ານ ພິພົບ ວາດສະໜາອາຊາ ສະກຸນ | ສະມາຊິກສະພາບໍລິຫານ | 1 | 4 | | | | |

### 6. ຄ່າຕອບແທນ ຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ.

ສຳລັບສະມາຊິກສະພາບໍລິຫານສະເພາະທີ່ເປັນສະມາຊິກອິດສະຫຼະ ຈະມີຄ່າຕອບແທນເປັນເງິນອຸດໜູນເຂົ້າຮ່ວມກອງປະຊຸມໃນແຕ່ລະຄັ້ງໂດຍແບ່ງອອກຄື

- ປະທານສະພາບໍລິຫານ: 6.500.000 ກີບ/ຄັ້ງ
- ຮອງປະທານສະພາບໍລິຫານ: 4.300.000 ກີບ/ຄັ້ງ
- ສະມາຊິກສະພາບໍລິຫານ: 4.300.000 ກີບ/ຄັ້ງ

## VI. ຄ່າບໍລິການກວດສອບບັນຊີ ແລະ ຄ່າບໍລິການອື່ນໆ ປະຈຳປີ 2023

ບໍລິສັດ ພຣາຍສ໌ວໍເຕີ້ເຮົ້າສ໌ກູເປີ້ສ໌ (ລາວ) ຈຳກັດຜູ້ດຽວ (PriceWaterHouseCoopers (Lao) Sole Co.. Ltd.) ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ສະເພາະປະຈຳປີ 2023 ໂດຍມີຄ່າບໍລິການເປັນເງິນຈຳນວນເງິນ **36.500** ໂດລາສະຫະລັດ.

## VII. ຄວາມຮັບຜິດຊອບຕໍ່ສັງຄົມ ປີ 2023

### 1. ການມອບພັນທະອາກອນ ປີ 2023

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ປະຕິບັດຢູ່ພາຍໃຕ້ກົດໝາຍຂອງ ສປປ ລາວ ໂດຍສະເພາະກົດໝາຍສ່ວຍສາອາກອນຢ່າງເຂັ້ມງວດ ເຫັນໄດ້ຈາກການປະຕິບັດພັນທະມອບອາກອນໃຫ້ລັດເຊັ່ນ: ອາກອນມູນຄ່າເພີ່ມ, ອາກອນເງິນເດືອນ ແລະ ອາກອນກຳໄລເປັນຕົ້ນ.

**ການມອບພັນທະອາກອນໃຫ້ລັດ ປະຈຳປີ 2023**

| ລຳດັບ | ລາຍການ | ລວມມູນຄ່າ (ກີບ) |
|---|---|---|
| 1 | ພາສີນຳເຂົ້າ | 3.133.197.400 |
| 2 | ອາກອນມູນຄ່າເພີ່ມ | 54.844.898.382 |
| 3 | ອາກອນຊົມໃຊ້ | 6.320.800 |
| 4 | ອາກອນເງິນເດືອນ | 3.209.883.208 |
| 5 | ອາກອນກຳໄລ | 7.001.697.500 |
| **ລວມ** | | **68.195.997.290** |

### 2. ການອຸປະຖຳ ແລະ ຊ່ວຍເຫຼືອສັງຄົມ ປີ 2023

ໃນປີ 2023 ທີ່ຜ່ານມາ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມາຫາຊົນ ໂດຍປະຕິບັດຕາມ ນະໂຍບາຍ ຂອງ ອົງກອນ ທີ່ມີຄວາມຮັບຜິດຊອບຕໍ່ສັງຄົມ ບໍລິສັດໄດ້ໃຫ້ການຊ່ວຍເຫຼືອສັງຄົມ ໃນດ້ານຕ່າງໆ ຫຼາຍກວ່າ 60 ໂຄງການທົ່ວປະເທດ ໂດຍຜ່ານໂຄງການ: "**ສ້າງຮ້ອຍຍິ້ມດ້ວຍການແບ່ງປັນ**" ໂດຍມີລາຍລະອຽດດັ່ງນີ້:

## 2.1. ການຊ່ວຍເຫຼືອດ້ານການສຶກສາ, ກິລາ ແລະ ສິລະປະ ປີ 2023

2.1.1. ໃນວັນທີ 18 ຕຸລາ 2023 ບໍລິສັດ ສຸວັນນີ ໂຮມເຊັນເຕີ ສາຂາສີໄຄ ໄດ້ເຂົ້າມອບກະໂລ້ ຈໍານວນ 250 ກ່ອງ ລວມມູນຄ່າ 24.700.000 ກີບ ໃຫ້ແກ້ ໂຮງຮຽນ ສຶກສາພິເສດ ພິການຫູ ແລະ ຕາ ທີ່ບ້ານໜອງໜ້ຽວ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ



## 2.2. ການຊ່ວຍເຫຼືອດ້ານສຸຂະພາບ ປີ2023

2.2.1. ໃນວັນທີ 25 ກຸມພາ ແລະ 12 ກໍລະກົດ 2023 ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຮ່ວມໃຈກັນບໍລິຈາກເລືອດ ໃຫ້ແກ່ສູນບໍລິຈາກເລືອດກາແດງລາວທົ່ວປະເທດ ລວມມີຜູ້ບໍລິຈາກທັງໝົດ 209 ຄົນ ເຊິ່ງກິດຈະກໍານີ້ ບໍລິສັດໄດ້ຈັດຂຶ້ນທຸກໆປີ ໂດຍບໍລິຈາກ 2ຄັ້ງ/ປີ ເພື່ອຊ່ວຍເຫຼືອຜູ້ ທີ່ມີຄວາມຈໍາເປັນໃນການໃຊ້ເລືອດ ດັ່ງຄໍາວ່າ **“ໃຫ້ເລືອດໃຫ້ຊີວິດ”**





## 2.3. ຊ່ວຍເຫຼືອສັງຄົມອື່ນໆ

2.3.1. ໃນວັນທີ 5 ສິງຫາ 2023 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ເຂົ້າມອບປະເພດເຄື່ອງບໍລິໂພກ ແລະ ຢາ ເພື່ອສົມທົບຊ່ວຍຜູ້ປະຊົບໄພນໍ້າຖ້ວມຢູ່ ບ້ານໂພນທອງ, ບ້ານໜອງຮາງ ແລະ ບ້ານອື່ນໆ ໃນເມືອງຄູນຄໍາ ແຂວງຄໍາມ່ວນ ທີ່ໄດ້ຮັບຜົນກະທົບຈາກອຸທົກກະໄພທໍາມະຊາດ ເພື່ອໄປຈັດເປັນຖົງຍັງຊີບໃຫ້ແກ່ພໍ່ແມ່ປະຊາຊົນ ລວມມູນຄ່າ: 10.000.000ກີບ






2.3.2. ໃນວັນທີ 26 ຕຸລາ 2023 ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຖວາຍກະໂລ້ ແລະ ຊີມັງກາວ ໃຫ້ແກ່ ວັດສີສະເກດ ເພື່ອນຳໄປໃຊ້ສະທາລະນະປະໂຫຍດ ປູທຳໂຮງທຳ ລວມມູນຄ່າ 90.000.000ກີບ



# VIII. ນະໂຍບາຍການພັດທະນາການຈັດການຄຸ້ມຄອງພາຍໃນ ປີ 2023

ບໍລິສັດ ມີນະໂຍບາຍໃນການຄຸ້ມຄອງພາຍໃນໂດຍໃຊ້ມາດຕະຖານການປະຕິບັດງານພາຍໃຕ້ລະບົບ ISO 9001 (Version 2015) ແລະ ຍັງຄວບຄຸມດ້ວຍມາດຕະຖານຮ້ານ, ມາດຕະຖານການບໍລິການຕ່າງໆ, ມາດຕະຖານ 5ສ ແລະ ມາດຕະຖານຄວາມປອດໄພ.

# IX. ນະໂຍບາຍຄຸ້ມຄອງຄວາມສ່ຽງ ປີ 2023

ທຸລະກິດການຄ້າວັດສະດຸກໍ່ສ້າງໃນລາວມີປັດໄຈຄວາມສ່ຽງຫຼັກໃນປີຜ່ານມາຄື:

1. ອັດຕາແລກປ່ຽນ
2. ພາລະໜີ້ສິນຂອງລູກຄ້າ
3. ຕົ້ນທຶນສິນຄ້າທາງກົງ ແລະ ທາງອ້ອມສູງຂຶ້ນ
4. ໄພຕ່າງໆ

ເຊິ່ງພວກເຮົາໄດ້ ບໍລິຫານຄວາມສ່ຽງຕ່າງໆ ໂດຍໃຊ້ກົນໄກການອະນຸມັດຕ່າງໆ ມີການພິຈາລະນາ ແລະ ກຳນົດວົງເງິນໃຫ້ບໍລິສັດ ແລະ ລູກຄ້າ, ທາງດ້ານອັດຕາແລກປ່ຽນແມ່ນ ເນື່ອງຈາກ ບໍລິສັດນຳເຂົ້າ ໂດຍຖືກຕ້ອງຕາມກົດໝາຍ ຈຶ່ງສາມາດຊື້ເງິນຕາຈາກທະນາຄານໄດ້ ດ້ວຍພາວະເງິນເຟີ້ ແມ່ນຊອກຫາແຫຼ່ງສິນຄ້າທີ່ຖືກລົງ ແລະ ຕໍ່ລອງຈາກຫຼາຍປະເທດ ເພື່ອໃຫ້ໄດ້ສິນຄ້າ ທີ່ມີຄຸນນະພາບ ແລະ ລາຄາຖືກລົງ ເພື່ອຕອບຮັບກຳລັງຊື້ ຂອງລູກຄ້າທີ່ລົດລົງ ແລະ ດ້ານໄພຕ່າງໆເຊັ່ນ: ນ້ຳຖ້ວມ, ໄຟໄໝ້, ພາຍຸ ແລະ ແຜ່ນດິນໄຫວເຫຼົ່ານີ້ເປັນຕົ້ນ ພວກເຮົາໄດ້ມີການຊື້ປະກັນໄພໄວ້ໃນແຕ່ລະສາຂາ ເພື່ອຮອງຮັບທຸກສະຖານະການ ທີ່ຈະເກີດຂຶ້ນ.

# X. ນະໂຍບາຍດ້ານສິ່ງແວດລ້ອມ ປະຈຳປີ 2023

ບໍລິສັດດຳເນີນທຸລະກິດດ້ວຍຄວາມຮັບຜິດຊອບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໂດຍມີການປັບປຸງ ແລະ ພັດທະນາຂະບວນການປະຕິບັດງານ ແລະ ກິດຈະກຳທາງທຸລະກິດຕ່າງໆ ໃຫ້ສອດຄ່ອງກັບການອະນຸລັກສິ່ງແວດລ້ອມເຊັ່ນ: ການລົດການໃຊ້ພະລັງງານ, ການລົດການໃຊ້ຊັບພະຍາກອນ, ການລົດກາດເຮືອນກະຈົກ ແລະ ລົດການເກີດຂີ້ເຫຍື້ອ-ສິ່ງເສດເຫຼືອ ເພື່ອປ້ອງກັນຄວບຄຸມ ແລະ ລົດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊຸມຊົນບໍລິເວນອ້ອມຂ້າງໃຫ້ໜ້ອຍທີ່ສຸດ.

# XI. ແຜນການດຳເນີນງານປະຈຳປີ 2024

## 1. ແຜນການສ້າງລາຍໄດ້ປະຈຳປີ 2024

ໃນປີ 2024 ບໍລິສັດຕັ້ງເປົ້າໝາຍການເຕີບໂຕທີ 20% ເມື່ອທຽບກັບປີທີ່ຜ່ານມາ ໂດຍອີງໃສການວິເຄາະປັດໃຈບວກເຊັ່ນ: ການເປີດປີທ່ອງທ່ຽວລາວ 2024, ການເປັນປະທານອາຊຽນ ຊຶ່ງຈະມີການຈັດກອງປະຊຸມ ແລະ ປັບປຸງໂຄງສ້າງພື້ນຖານຕ່າງໆຢ່າງຫຼວງຫຼາຍ, ການລົງທຶນຈາກຕ່າງປະເທດ ແລະ ການຜ່ອນຄາຍລົງຂອງພາວະໂລກລະບາດ ແລະ ປັດໃຈລົບເຊັ່ນ: ຄວາມຂັດແຍ່ງທາງດ້ານການເມືອງ ແລະ ການທະຫານໃນຫຼາຍຂົງເຂດທົ່ວໂລກ ໂດຍສະເພາະຂົງເຂດ ທີ່ກ່ຽວກັບພະລັງງານ ແລະ ການແບ່ງຂົ້ວທາງການເມືອງ ທີ່ນັບມື້ນັບຊັດເຈນຂຶ້ນ ແຕ່ຄາດວ່າບໍລິສັດຈະສາມາດຂະຫຍາຍຕົວໄດ້ດ້ວຍແນວທາງດັ່ງລຸ່ມນີ້:

- ປັບຖານສິນຄ້າທີ່ເປັນໝວດທີ່ສຳຄັນ ແລະ ສ້າງລາຍຮັບສູງ ໃຫ້ຕົງຕາມຄວາມຕ້ອງການຂອງລູກຄ້າຫຼາຍຂຶ້ນ;
- ທົບທວນເພີ່ມສິນຄ້າໃໝ່ ລວມທັງໂຟກັດສິນຄ້າຂາຍດີ ແລະ ຕັດສິນຄ້າເກົ່າທີ່ລ້າສະໄໝເປັນປະຈຳທຸກ 6 ເດືອນ;
- ລົດຕົ້ນທຶນສິນຄ້າໂດຍການຫາແຫຼ່ງໂຮງງານ ທີ່ມີຟອມ D ແລະ E;
- ເພີ່ມການຂາຍຫຼາຍຊ່ອງທາງຂຶ້ນທັງ Offline ແລະ Online ແລະ ເພີ່ມການໃຫ້ຄວາມຮູ້ແກ່ຜູ້ມີອິດທິພົນໃນການຊື້ຫຼາຍຂຶ້ນ;
- ຂະຫຍາຍການຂາຍສິນຄ້າ ແລະ ບໍລິການໄປສູ່ຕະຫຼາດໃໝ່ ທີ່ຂະຫຍາຍສາຂາເພີ່ມຂຶ້ນ;

## 2. ແຜນການຕະຫຼາດ ປະຈຳປີ 2024

- ສ້າງຄວາມຕ້ອງການ ແລະ ການຮັບຮູ້ Brand SOUVANNY ແລະ Brand ສິນຄ້າຫຼາຍຂຶ້ນການຜ່ານໂຄສະນາປະຊາສຳພັນທາງ Online ແລະ Offline;
- ສ້າງຄວາມສຳພັນກັບກຸ່ມທີ່ມີອິດທິພົນຕໍ່ການສັ່ງຊື້;
- ສ້າງໂຄງການຊ່ວຍເຫຼືອສັງຄົມຜ່ານໂຄງການ “ສ້າງຮອຍຍິ້ມ ດ້ວຍການແບ່ງປັນ” ຊ່ວຍເຫຼືອໂຮງຮຽນ, ໂຮງໝໍ, ການບໍລິຈາກເລືອດ, ອຸປະກອນກິລາ ແລະ ການສຶກສາ ໃນເຂດຫ່າງໄກສອກຫຼີກ ແລະ ຊ່ວຍບັນເທົາໄພພິບັດຕ່າງໆ;
- ສຳຫຼວດຄວາມເພິງພໍໃຈຂອງລູກຄ້າ ເພື່ອປັບປຸງສິນຄ້າ ແລະ ບໍລິການ;
- ສ້າງ Platform ແລະ ຈັດທຳສື່ໂຄສະນາຜ່ານທາງ Online ແລະ Offline ເພື່ອສື່ສານການຕະຫຼາດໄປສູ່ກຸ່ມລູກຄ້າເປົ້າໝາຍໃນແຕ່ລະທ້ອງຖິ່ນ;
- ຈັດທຳໂປໂມຊັ່ນສິນຄ້າໄປສູ່ແຕ່ລະກຸ່ມລູກຄ້າເປົ້າໝາຍ ເພື່ອກະຕຸ້ນຍອດຂາຍ.

## 3. ແຜນການພັດທະນາມາດຕະຖານການຈັດການ ປະຈຳປີ 2024

- ສືບຕໍ່ປັບປຸງມາດຕະຖານຮ້ານໃຫ້ມີມາດຕະຖານສູງຂຶ້ນ;
- ປັບປຸງມາດຕະຖານບໍລິການ ໃຫ້ຕອບໂຈດຄວາມຕ້ອງການຂອງລູກຄ້າຫຼາຍຂຶ້ນ;
- ສືບຕໍ່ປັບປຸງມາດຕະຖານ ISO 9001 (VERSION-2015) ໃຫ້ໄດ້ມາດຕະຖານທີ່ສູງຂຶ້ນ.

### 4. ແຜນພັດທະນາດ້ານບຸກຄະລາກອນ ປະຈຳປີ 2024

- ພັດທະນາຝຶກອົບຮົມພະນັກງານໃນທຸກລະດັບ ໂດຍການສັນຫາບຸກຄະລາກອນ ທີ່ມີຄວາມຊຳນານທັງພາຍໃນ ແລະ ພາຍນອກ ເພື່ອມາຊ່ວຍຍົກລະດັບພະນັກງານໃຫ້ມີຄວາມຮູ້ຄວາມສາມາດສູງຂຶ້ນ;
- ຈັດການສອບເສັງ ເພື່ອຄັດເລືອກພະນັກງານດີ ແລະ ເກັ່ງ ກຽມໄວ້ ເພື່ອຮອງຮັບການຂະຫຍາຍຕົວຂອງບໍລິສັດ;
- ສ້າງສະພາບແວດລ້ອມ ເພື່ອເຊື່ອມໂຍງການຮຽນຮູ້ແລກປ່ຽນບົດຮຽນກັບສະຖາບັນການສຶກສາ ແລະ ອົງກອນທີ່ມີຄວາມຊຳນານສະເພາະທາງ ທັງພາຍໃນ ແລະ ພາຍນອກ ເພື່ອເພີ່ມຂີດຄວາມສາມາດຂອງພະນັກງານໃນການຄົ້ນຄວ້າ, ວິໃຈ ຫາຄວາມໄດ້ປຽບຂອງທຸລະກິດໃນການແຂ່ງຂັນ ຖ້າມກາງຄວາມຕ້ອງການຂອງລູກຄ້າ ທີ່ມີການປ່ຽນແປງໄວຂຶ້ນ.

### 5. ແຜນການລົງທຶນ ແລະ ຂະຫຍາຍກິດຈະການ ປະຈຳປີ 2024

- ຂະຫຍາຍສາຂາໃໝ່ ຈຳນວນ 4 ສາຂາ ເລີ່ມແຕ່ ປີ 2024 ຫາ ປີ 2025 ໂດຍຈະເປີດ 2 ສາຂາໃນທ້າຍປີ 2024 ນີ້.

# ສຸວັນນີ ໂຮມເຊັນເຕີ

## ຈິນຕະນາການທີ່ເປັນໄປໄດ້




ສຸວັນນີ ໂຮມເຊັນເຕີ ມະຫາຊົນ

SOUVANNY HOME CENTER PUBLIC COMPANY

PHONETONGSAVAT RD, BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL

OFFICE TEL: (+856-21) 415645, FAX/TEL: (+856-21) 262984, WWW.SOUVANNY.LA